# ຄໍານໍາ

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ເຊິ່ງແມ່ນເຫດການການເມືອງສໍາຄັນປະຫວັດສາດ ໄດ້ດໍາເນີນແຕ່ວັນທີ 13 ເຖິງວັນທີ 15 ມັງກອນ 2021 ຢູ່ນະຄອນຫຼວງວຽງຈັນ. ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ພາຍໃຕ້ຄໍາຂວັນ "ຍົກສູງຄວາມສາມາດນໍາພາຂອງພັກ ເພີ່ມທະວີຄວາມສາມັກຄີ ເປັນປຶກແຜ່ນຂອງປະຊາຊົນໃນຊາດ, ຮັບປະກັນສະຖຽນລະພາບ ດ້ານການເມືອງ ຢ່າງໜັກແໜ້ນ, ຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນການພັດທະນາເສດຖະກິດ - ສັງຄົມ ໄປສູ່ຄຸນນະພາບໃໝ່ ຢ່າງແຂງແຮງ, ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ສືບຕໍ່ນໍາພາປະເທດຊາດ ພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ".

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກແມ່ນເຫດການ ການເມືອງສໍາຄັນປະຫວັດສາດ, ເປັນກອງປະຊຸມແຫ່ງການສືບຕໍ່ຍຶດໝັ້ນ ແລະ ເພີ່ມເຕີມເສີມຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກເຮົາ ໃຫ້ເຂົ້າສູ່ລວງເລິກ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ ແລະກ້າວເດີນສູ່ຈຸດໝາຍສັງຄົມນິຍົມ; ກອງປະຊຸມໃຫຍ່ຂອງພັກ ໄດ້ກໍານົດທັດສະນະແຫ່ງການສ້າງ ການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ, ຮອບດ້ານໃນການພັດທະນາເສດຖະກິດ - ສັງຄົມ ໃນຊຸມປີຕໍ່ໜ້າແນໃສ່ແກ້ໄຂຄວາມທຸກຍາກ ແລະ ນໍາເອົາປະເທດຊາດພົ້ນຈາກສະຖານະພາບດ້ອຍພັດທະນາ, ກອງປະຊຸມໃຫຍ່ຄັ້ງນີ້ ແມ່ນຂີດໝາຍ

ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງພັກເຮົາ, ແມ່ນບັ້ນດຳເນີນຊີວິດການເມືອງພາຍໃນພັກ ເພື່ອສ້າງການຫັນປ່ຽນທີ່ແຂງແຮງ ແລະ ເປັນລະບົບ ໂດຍເລີ່ມຈາກການຫັນປ່ຽນດ້ານແນວຄິດ - ຈິນຕະນາການສູ່ການກະທຳຕົວຈິງ ເພື່ອແກ້ໄຂຈຸດອ່ອນ ແລະ ບັນຫາຄົງຄ້າງ ໃຫ້ມີການຫັນປ່ຽນໃໝ່ທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ແນໃສ່ຍົກສູງບົດບາດ, ຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງປະຊາຊົນໃນຊາດ, ເດັດດ່ຽວປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດສູ່ຈຸດໝາຍສັງຄົມນິຍົມ.

ໂດຍປະຕິບັດຕາມຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ເລກທີ 38/ຄລສພ, ລົງວັນທີ 09 ມີນາ 2021 ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ແນໃສ່ເຮັດໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນບັນດາເຜົ່າ ຊັ້ນຄົນຕ່າງໆໃນທົ່ວປະເທດ ເຂົ້າໃຈຢ່າງເລິກເຊິ່ງຕໍ່ແນວທາງການເມືອງ ກໍຄືການຈັດຕັ້ງປະຕິບັດແນວທາງຂອງພັກ ເຊິ່ງເປັນຜະລິດຕະພັນແຫ່ງສະຕິປັນຍາລວມຂອງທົ່ວພັກ ແລະ ທົ່ວປວງຊົນ ທີ່ໄດ້ກຳນົດອອກໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ເພື່ອໃຫ້ຄະນະພັກແຕ່ລະຂັ້ນໄດ້ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຂົ້າໃນວຽກງານຕົວຈິງ, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຈັດພິມເອກະສານເຊື່ອມຊຶມ ແລະ ຜັນຂະຫຍາຍເນື້ອໃນມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ. ເອກະສານດັ່ງກ່າວນີ້ ໄດ້ຍົກເອົາບັນຫາສຳຄັນພື້ນຖານໃນ

ແຕ່ລະດ້ານເລິກເຊິ່ງຕື່ມອີກ ໂດຍອີງໃສ່ຫຼັກມູນທາງດ້ານທິດສະດີ ແລະ ພຶດຕິກຳ ຈາກການຊີ້ນຳ-ນຳພາຂອງພັກເຮົາ ແລະ ບົດຮຽນຂອງປະເທດເພື່ອນມິດຍຸດທະສາດ ແລະ ເພື່ອນມິດສາກົນ. ພ້ອມກັນນັ້ນ ຄະນະໂຄສະນາອົບຮົມສູນກາງພັກ ຫວັງຢ່າງຍິ່ງວ່າ ຄະນະພັກ, ອຳນາດການປົກຄອງຂັ້ນຕ່າງໆ ແລະ ຜູ້ເຮັດວຽກງານການເມືອງ - ແນວຄິດຈະກຳແໜ້ນແຕ່ລະບັນຫາຢ່າງເລິກເຊິ່ງ, ພ້ອມທັງເປັນເອກະສານຄົ້ນຄວ້າຮ່ຳຮຽນສຳລັບນັກຮຽນຮູ້ - ປັນຍາຊົນ, ນັກຮຽນ-ນັກສຶກສາ ແລະ ເພື່ອນຜູ້ອ່ານຈະກຳແໜ້ນເນື້ອໃນພື້ນຖານຂອງມະຕິສະບັບນີ້.

ຄະນະໂຄສະນາອົບຮົມສູນກາງພັກ ກໍຮັບຮູ້ ແລະ ເຂົ້າໃຈດີວ່າເອກະສານດັ່ງກ່າວ ແມ່ນເນື້ອໃນພື້ນຖານທີ່ສຳຄັນໃນການຈັດຕັ້ງຜັນຂະຫຍາຍເຂົ້າໃນຊີວິດຕົວຈິງ ໃຫ້ເກີດຜົນເປັນຈິງ.

**ຄະນະໂຄສະນາອົບຮົມສູນກາງພັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ ເລກທີ 38/ຄລສພ
ນະຄອນຫຼວງວຽງຈັນ, ວັນທີ 09 ມີນາ 2021

# ຄຳສັ່ງ
# ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ

**ເຖິງ: ຄະນະພັກ ບັນດາກະຊວງ, ອົງການ, ຄະນະພັກ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວ ປະເທດ.**

- ອີງຕາມມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ.
- ອີງຕາມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 2 ສະໄໝທີ XI ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ.

ເພື່ອເຮັດໃຫ້ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ຮັບການຈັດຕັ້ງເຊື່ອມຊຶມ ຢ່າງກວ້າງຂວາງ, ເລິກເຊິ່ງ ແລະ ຈັດຕັ້ງປະຕິບັດເກີດຜົນເປັນຈິງ.

**ຄະນະເລຂາທິການສູນກາງພັກອອກຄໍາສັ່ງດັ່ງນີ້:**

## I. ຄວາມໝາຍຄວາມສໍາຄັນ ຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ.

1. ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ແມ່ນເຫດການການເມືອງສໍາຄັນປະຫວັດສາດ, ເປັນກອງປະຊຸມແຫ່ງການສືບຕໍ່ຍຶດໝັ້ນ ແລະ ເພີ່ມເຕີມເສີມຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກເຮົາ ໃຫ້ເຂົ້າສູ່ລວງເລິກ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ.

2. ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ກໍານົດທັດສະນະແຫ່ງການສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ, ຮອບດ້ານໃນການພັດທະນາເສດຖະກິດ - ສັງຄົມ ໃນຊຸມປີຕໍ່ໜ້າ ແນໃສ່ແກ້ໄຂຄວາມທຸກຍາກ ແລະ ນໍາເອົາປະເທດຊາດ ພົ້ນຈາກສະຖານະພາບດ້ອຍພັດທະນາ.

3. ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ແມ່ນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງພັກເຮົາ, ແມ່ນບັ້ນດໍາເນີນຊີວິດການເມືອງພາຍໃນພັກ ເພື່ອສ້າງການຫັນປ່ຽນທີ່ແຂງແຮງ ແລະ ເປັນລະບົບ ໂດຍເລີ່ມຈາກການຫັນປ່ຽນດ້ານແນວຄິດ - ຈິນຕະ

ນາການສູ່ການກະທຳຕົວຈິງ ເພື່ອແກ້ໄຂຈຸດອ່ອນ ແລະ ບັນຫາຄົງຄ້າງ ໃຫ້ມີການຫັນປ່ຽນໃໝ່ທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ແນໃສ່ ຍົກສູງບົດບາດ, ຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າ ຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງປະຊາຊົນໃນ ຊາດ, ເດັດດ່ຽວປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ ສູ່ ຈຸດໝາຍສັງຄົມນິຍົມ.

## II. ທິດນຳ ແລະ ຈຸດປະສົງ, ລະດັບຄາດໝາຍ ໃນການຈັດຕັ້ງ ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງ ພັກ.

### 1. ທິດນຳ:

① ຕ້ອງສຸມໃສ່ຫັນເຂົ້າສູ່ການແກ້ໄຂບັນຫາຕົວຈິງ ທີ່ເປັນ ຄວາມເລັ່ງດ່ວນໃນສະເພາະໜ້າ, ທັງສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ ການພັດທະນາຕາມທິດຍືນຍົງ. ຄະນະພັກແຕ່ລະຂັ້ນ ຕ້ອງຖືເອົາການຄົ້ນ ຄວ້າ, ເຊື່ອມຊຶມ, ກຳແໜ້ນທິດທາງພື້ນຖານ, ຄາດໝາຍສູ້ຊົນຮອດປີ 2025 ແລະ ວຽກງານຈຸດສຸມແຕ່ລະຂົງເຂດ ໂດຍຕິດພັນກັບການກຳນົດ ໃຫ້ຈະແຈ້ງໜ້າທີ່ວຽກງານ, ບັນຫາຕົວຈິງທີ່ຂະແໜງການ, ທ້ອງຖິ່ນຂອງ ຕົນຈະຕ້ອງສຸມໃສ່ແກ້ໄຂ ດ້ວຍການປຸກລະດົມຂະບວນການຕົວຈິງຂອງ ມະຫາຊົນຢ່າງແຂງແຮງ ໄປພ້ອມກັບການຍົກສູງບົດບາດການຈັດຕັ້ງ, ການນຳພາຊີ້ນຳໂດຍກົງ, ເອກະພາບ ແລະ ແຂງແຮງຈາກບັນດາອົງການນຳ ຂັ້ນຍຸດທະສາດຂອງພັກ ຈົນເຖິງຄະນະພັກແຕ່ລະຂັ້ນ ຕໍ່ທຸກພາກສ່ວນ ຂອງລະບົບການເມືອງ ແລະ ໃນທົ່ວສັງຄົມ.

② ຕ້ອງສົມທົບແໜ້ນລະຫວ່າງການເຊີດຊູບົດບາດນຳພາ ແລະ ເສີມຂະຫຍາຍສະຕິເປັນເຈົ້າ, ຫົວຄິດປະດິດສ້າງ ຂອງການຈັດຕັ້ງພັກທຸກຂັ້ນ ແລະ ຜູ້ເປັນຫົວໜ້າຢູ່ທຸກບ່ອນກັບການກຳນົດແຈ້ງ ແລະ ປະຕິບັດບັນດາມາດຕະການຕົວຈິງ ເພື່ອຮັບປະກັນຍົກສູງຄວາມຮັບຜິດຊອບຂອງສະມາຊິກພັກ, ພະນັກງານຕໍ່ຜົນໄດ້ຜົນເສຍໃນການປະຕິບັດໜ້າທີ່, ສົ່ງເສີມຢ່າງແຂງແຮງພະນັກງານທີ່ມີຄວາມຮູ້, ມີຄວາມສາມາດໃນການຄົ້ນຄິດ, ປະດິດສ້າງ ແລະ ກ້າເຮັດ, ກ້າຮັບຜິດຊອບຕາມ ຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ຮັບການມອບໝາຍ.

③ ຕ້ອງເພີ່ມທະວີຄວາມເຂັ້ມແຂງ ແລະ ເຂັ້ມງວດໃນການຄຸ້ມຄອງພັກ ດ້ານລະບຽບວິໄນຢູ່ພາຍໃນພັກ, ຮັບປະກັນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃຫ້ຖືກຈຸດ ແລະ ເປັນລະບົບ; ຕັ້ງໜ້າແກ້ໄຂປະກົດການຫຍໍ້ທໍ້ໃນກົງຈັກໃຫ້ຂາດຕົວ.

**2. ຈຸດປະສົງ, ລະດັບຄາດໝາຍ:**

① ສືບຕໍ່ສ້າງການຫັນປ່ຽນທາງດ້ານແນວຄິດ - ຈິນຕະນາການຢ່າງແຂງແຮງ, ປັບປຸງຍົກສູງຫຼັກໝັ້ນການເມືອງ, ຍົກສູງນ້ຳໃຈເສຍສະຫຼະ ແລະ ຍຶດໝັ້ນອຸດົມການປະຕິວັດຂອງຄະນະພັກ, ສະມາຊິກພັກ, ພະນັກງານຢ່າງເດັດດ່ຽວໜຽວແໜ້ນ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆ; ຕ້ານ ແລະ ແກ້ໄຂທັດສະນະຜິດເຂວຕ່າງໆ, ຕີຖອຍລັດທິຄຳພີກົນຈັກ, ອາດຍາສິດ, ເອກະຊົນ; ເດັດດ່ຽວແກ້ໄຂການເສື່ອມຖອຍດ້ານແນວຄິດ, ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດ ຂອງສະມາຊິກພັກ, ພະນັກງານ, ເພີ່ມທະວີ

ຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ພາຍໃນສັງຄົມໃຫ້ໜັກແໜ້ນຍິ່ງໆຂຶ້ນ.

② ເພື່ອສ້າງຄວາມເປັນເອກະພາບ ແລະ ຄວາມຕັດສິນໃຈສູງແຕ່ຫົວທີ ເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງ, ສ້າງຄວາມເຂົ້າໃຈ, ຮັບຮູ້ກ່ຽວກັບການສ້າງການຫັນປ່ຽນໃໝ່ ຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ IX. ກໍໃຫ້ເກີດການຫັນປ່ຽນດ້ານແນວຄິດຊີ້ນໍາ, ການຈັດຕັ້ງ ແລະ ການເຄື່ອນໄຫວຕົວຈິງໃຫ້ວ່ອງໄວ, ແທດຕົວຈິງ ແລະ ມີປະສິດທິຜົນ, ນໍາເອົາຜົນປະໂຫຍດຕົວຈິງມາໃຫ້ປະເທດຊາດ ແລະ ປະຊາຊົນ.

③ ເພື່ອເປັນບ່ອນອີງໃຫ້ແກ່ບັນດາຄະນະພັກກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ IX ໃຫ້ເປັນແຜນງານ, ໂຄງການລະອຽດ ຕິດພັນກັບການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ແລະ ແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນຕົນ. ບົນຈິດໃຈນັ້ນ, ຍູ້ແຮງການຈັດຕັ້ງຜັນຂະຫຍາຍເຂົ້າສູ່ຊີວິດຕົວຈິງກາຍເປັນຂະບວນການອັນຟົດຟື້ນ, ກວ້າງຂວາງ ແລະ ແຂງແຮງ ຂອງມະຫາຊົນ, ເຮັດໃຫ້ແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກເຮົາ ສືບຕໍ່ດໍາເນີນໄປຢ່າງເລິກເຊິ່ງ, ຮອບດ້ານ ແລະ ມີຜົນສໍາເລັດໃຫຍ່ຫຼວງກວ່າເກົ່າ.

④ ແນໃສ່ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໃນທຸກຂົງເຂດວຽກງານ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ກໍຄືໃນທົ່ວ

ພັກ, ທົ່ວລັດ ແລະ ໃນທົ່ວສັງຄົມ ເປັນຕົ້ນແມ່ນສ້າງການຫັນປ່ຽນທາງດ້ານຄວາມຮັບຮູ້, ທັດສະນະ, ແນວຄິດ ແລະ ການກະທຳ ແນໃສ່ສິ່ງເສີມດ້ານດີ, ແກ້ໄຂຄວາມບົກພ່ອງ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ ໃນໄລຍະຜ່ານມາ, ສ້າງໄດ້ຄວາມເຊື່ອໝັ້ນ ຂອງພະນັກງານ ແລະ ປະຊາຊົນຕໍ່ການນຳພາຂອງພັກ, ການບໍລິຫານຄຸ້ມຄອງຂອງລັດ; ສືບຕໍ່ນຳພາຊີ້ນຳການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນວັດທະນາ.

### III. ບັນດາເນື້ອໃນຕົ້ນຕໍ.

ເນື້ອໃນການເຊື່ອມຊຶມຄັ້ງນີ້, ນອກຈາກເອກະສານແນະນຳການເຊື່ອມຊຶມ ແລະ ຜັນຂະຫຍາຍແລ້ວ, ຍັງປະກອບດ້ວຍເອກະສານທີ່ເປັນພື້ນຖານເຊັ່ນ: ① ລາຍງານການເມືອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ສະບັບຄົບຖ້ວນ, ② ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ IX (2021 - 2025) ສະບັບຫຍໍ້, ③ ກົດລະບຽບຂອງພັກ ສະໄໝທີ XI.

### IV. ວິທີການຈັດຕັ້ງປະຕິບັດ.

ບົນຈິດໃຈບັນດາເອກະສານເຊື່ອມຊຶມ ກໍຄືເນື້ອໃນລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ IX, ກົດລະບຽບຂອງພັກ ສະໄໝທີ XI ນັ້ນ ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ຄົ້ນຄວ້າ; ເຊື່ອມຊຶມ, ກຳແໜ້ນ ແລະ ຜັນຂະຫຍາຍຢ່າງເປັນເອກະພາບ ເຂົ້າສູ່ວຽກງານຕົວຈິງ. ໃນການເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນ

ທົ່ວປະເທດ ຄັ້ງທີ XI ຂອງພັກ, ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ບາງບັນຫາ ດັ່ງນີ້:

1. ການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ຕ້ອງຮັບປະກັນໃຫ້ທຸກເປົ້າໝາຍ ໄດ້ເຂົ້າຮ່ວມຢ່າງທົ່ວເຖິງ, ທັງຮັບປະກັນການອະທິບາຍເນື້ອໃນຢ່າງຮັດກຸມ, ມີຈຸດສຸມ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ພາຍໃຕ້ການນໍາພາໂດຍກົງຂອງສະຫາຍ ກໍາມະການສູນກາງພັກ ແລະ ເລຂາຄະນະພັກ ຢູ່ແຕ່ລະຂັ້ນ.

2. ໃຫ້ຄະນະພັກກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ ຈັດຕັ້ງການເຊື່ອມຊຶມເອກະສານໃຫ້ສະມາຊິກ, ພະນັກງານຫຼັກແຫຼ່ງໃນທົ່ວອົງຄະນະພັກຂອງຕົນ ນັບແຕ່ມື້ອອກຄໍາສັ່ງສະບັບນີ້ ເປັນຕົ້ນໄປ ແລະ ໃຫ້ສໍາເລັດພາຍໃນທ້າຍເດືອນ ເມສາ (4) 2021.

- ສໍາລັບ ກະຊວງ, ອົງການ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກ - ພະນັກງານຫຼັກແຫຼ່ງຂອງຕົນ, ຖ້າກະຊວງ, ອົງການໃດມີຈໍານວນພົນຫຼາຍກໍອາດຈະເຮັດເປັນ 2 - 3 ຊຸດ, ມອບໃຫ້ສະຫາຍເລຂາຄະນະພັກ ເປັນຜູ້ຮັບຜິດຊອບ; ຈາກນັ້ນມອບໃຫ້ແຕ່ລະຮາກຖານ ສືບຕໍ່ນໍາໄປເຊື່ອມຊຶມ ແລະ ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

- ສ່ວນຢູ່ຂັ້ນແຂວງ, ນະຄອນຫຼວງວຽງຈັນ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂັ້ນແຂວງ, ນະຄອນຫຼວງວຽງຈັນ, ເລຂາພັກເມືອງ, ນະຄອນ, ຄະນະປະຈໍາພັກເມືອງ, ນະຄອນຂອງຕົນ ໂດຍແມ່ນສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ. ຈາກນັ້ນ, ມອບໃຫ້ສະຫາຍເລຂາຄະນະພັກເມືອງ ນໍາໄປຈັດຕັ້ງເຊື່ອມຊຶມ ຢູ່ຂັ້ນເມືອງ, ນະຄອນ ໂດຍເຕົ້າໂຮມ

ພະນັກງານຫຼັກແຫຼ່ງຂັ້ນເມືອງ, ເລຂາຄະນະພັກຮາກຖານ ແລະ ເລຂາໜ່ວຍພັກຮາກຖານ ເຂົ້າຮ່ວມ ແລະ ສືບຕໍ່ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

ສໍາລັບການເຜີຍແຜ່, ເຊື່ອມຊຶມ ໃຫ້ແກ່ປະຊາຊົນ ຢູ່ຂັ້ນບ້ານແມ່ນມອບໃຫ້ສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ ຊີ້ນໍາການຈັດຕັ້ງປະຕິບັດໃຫ້ແທດເໝາະກັບສະພາບຈຸດພິເສດ ແລະ ເງື່ອນໄຂຕົວຈິງຂອງແຕ່ລະບ່ອນ.

3. ບັນດາສະຫາຍ ກໍາມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ ແບ່ງກັນລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງ (ລະອຽດຈະມີແຜນ ແລະ ແຈ້ງໃຫ້ຊາບຕາມພາຍຫຼັງ).

4. ໃຫ້ຄະນະພັກແຕ່ລະຂັ້ນ ນໍາໃຊ້ສື່ມວນຊົນປະເພດຕ່າງໆ ເພື່ອເຜີຍແຜ່ບັນດາເນື້ອໃນຕົ້ນຕໍ ຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກໍຄື ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ. ພ້ອມກັນນັ້ນກໍເຜີຍແຜ່ຜົນສໍາເລັດຂອງການຈັດຕັ້ງຜັນຂະຫຍາຍໃນແຕ່ລະໄລຍະ ຕິດພັນກັບນໍາສະເໜີຜົນງານ, ຕົວແບບກໍຄື ບຸກຄົນດີເດັ່ນ ທີ່ເກີດຂຶ້ນໃນຂະບວນການຕົວຈິງໃນແຕ່ລະຂົງເຂດວຽກງານຢ່າງຕໍ່ເນື່ອງ ເພື່ອປຸກລະດົມຂະບວນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໃຫ້ຟົດຟື້ນ, ແຂງແຮງ ແລະ ໄດ້ຮັບຜົນສໍາເລັດຕາມຄາດໝາຍທີ່ວາງອອກ.

5. ມອບໃຫ້ ຄະນະໂຄສະນາອົບຮົມສູນກາງພັກ ຄົ້ນຄວ້າອອກປຶ້ມແນະນໍາລະອຽດ, ຄັດຈ້ອນ, ອະທິບາຍເນື້ອໃນສໍາຄັນຕົ້ນຕໍຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເພື່ອເຜີຍແຜ່, ໂຄສະນາໃຫ້ເປົ້າໝາຍຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ - ຮາກຖານ. ສະຖາບັນການເມືອງ

ແລະ ການປົກຄອງແຫ່ງຊາດ ດຳເນີນເປັນໂຄງການຄົ້ນຄວ້າ, ສ້າງເປັນຫຼັກສູດ ແລະ ນຳເຂົ້າສິດສອນຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ໂຮງຮຽນການເມືອງ ແລະ ການປົກຄອງຂັ້ນທ້ອງຖິ່ນ.

6. ມອບໃຫ້ຄະນະຈັດຕັ້ງສູນກາງພັກ ແລະ ຄະນະກວດກາສູນກາງພັກ ຮີບຮ້ອນອອກບົດແນະນຳ ການປະຕິບັດກົດລະບຽບຂອງພັກສະໄໝທີ XI ພ້ອມທັງໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກ ໄປພ້ອມກັບການເຊື່ອມຊຶມເນື້ອໃນສຳຄັນຕ່າງໆ ຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ. ພ້ອມນັ້ນ ກໍຄົ້ນຄວ້າອອກນິຕິກຳຕ່າງໆເພື່ອຜັນຂະຫຍາຍຂໍ້ກຳນົດໃນກົດລະບຽບຂອງພັກ ສະໄໝທີ XI ໃຫ້ເປັນອັນລະອຽດ ເພື່ອນຳສະເໜີຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ពិຈາລະນາ:

7. ໃນແຕ່ລະໄລຍະ ຕ້ອງໄດ້ຮັບການກວດກາ, ຕີລາຄາ ແລະ ປະເມີນຜົນຢ່າງປົກກະຕິ, ພາວະວິໄສ ເພື່ອໃຫ້ສາມາດຮູ້ໄດ້ຈຸດທີ່ຕ້ອງປັບປຸງແກ້ໄຂ, ແນໃສ່ຮັບປະກັນຄວາມເຊື່ອໝັ້ນ, ການສະໜັບສະໜູນ ແລະ ການເຂົ້າຮ່ວມຂອງທົ່ວປວງຊົນ, ສ້າງກຳລັງແຮງສັງລວມ ໃນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ປະກົດຜົນເປັນຈິງ.

8. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້, ຄະນະພັກກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ຈົ່ງຮີບຮ້ອນປຶກສາຫາລື, ແບ່ງວຽກແບ່ງຄວາມຮັບຜິດຊອບໃຫ້ກັນ ຢ່າງລະອຽດ, ຈະແຈ້ງ ແລະ ວາງແຜນຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍ ຢ່າງເປັນລະບົບ ແລະ ໃຫ້ທັນເວລາທັງໄດ້ຮັບຜົນດີ.

ຜ່ານການຈັດຕັ້ງປະຕິບັດ, ຖ້າມີບັນຫາຫຍຸ້ງຍາກ ໃຫ້ລາຍງານ ຄະນະເລຂາທິການສູນກາງພັກ ໂດຍຜ່ານຄະນະໂຄສະນາອົບຮົມສູນກາງພັກ, ຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະກວດກາສູນກາງພັກ.

**໓. ຄະນະເລຂາທິການສູນກາງພັກ**
**ຜູ້ປະຈຳການ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ ເລກທີ 16/ຄລສພ
ນະຄອນຫຼວງວຽງຈັນ, ວັນທີ 10 ກຸມພາ 2021

# ມະຕິຕົກລົງ
# ຂອງຄະນະເລຂາທິການສູນກາງພັກ
# ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບ ການຫັນມະຕິກອງ ປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ມາເປັນເອກະສານຄົ້ນຄວ້າ ເຊື່ອມຊຶມ ໃຫ້ພະນັກງານການນຳຂັ້ນສູນກາງຄຸ້ມຄອງ

- ອີງຕາມ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບໃນກອງປະຊຸມ ກົມການເມືອງສູນກາງພັກ.

ເພື່ອຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເປັນເອກະສານຄົ້ນຄວ້າເຊື່ອມຊຶມ ພະນັກງານຂັ້ນສູນກາງພັກຄຸ້ມຄອງ.

## ຄະນະເລຂາທິການສູນກາງພັກຕົກລົງ:

**<u>ມາດຕາ 01:</u>** ເຫັນດີແຕ່ງຕັ້ງ ຄະນະຮັບຜິດຊອບທັນເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ມາເປັນເອກກະສານຄົ້ນຄວ້າເຊື່ອມຊຶມໃຫ້ພະນັກງານການນໍາຂັ້ນສູນກາງຄຸ້ມຄອງ ດັ່ງນີ້:

### I. ຄະນະຮັບຜິດຊອບຊີ້ນໍາລວມ.

1. ສະຫາຍ ປອ.ຄໍາພັນ ເຜີຍຍະວົງ ເລຂາທິການສູນກາງພັກ, ຫົວໜ້າ ຄະນະໂຄສະນາອົບຮົມສູນກາງພັກ, ເປັນຫົວໜ້າ.
2. ສະຫາຍ ປອ. ສອນທະນູ ທໍາມະວົງ ກໍາມະການສູນກາງພັກ, ປະທານ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ, ເປັນຮອງ.
3. ສະຫາຍ ຮສຈ. ພູວົງ ອຸ່ນຄໍາແສນ ກໍາມະການສູນກາງພັກ, ຫົວໜ້າ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ເປັນຮອງ.

### II. ຄະນະຮັບຜິດຊອບສ້າງເອກະສານເຊື່ອມຊຶມ.

1. ສະຫາຍ ກິ່ງເພັດ ມົງຄົນວິໄລ, ຮອງຫົວໜ້າຫ້ອງວ່າການສູນກາງພັກ.
2. ສະຫາຍ ປອ. ກິແກ້ວ ຈັນທະບູລີ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.
3. ສະຫາຍ ນາງ ສິມພອຍ ພົມມະຈັກ, ຮອງຫົວໜ້າ ຄະນະໂຄສະນາອົບຮົມສູນກາງພັກ.
4. ສະຫາຍ ນາງ ວິລະວອນ ພັນທະວົງ, ຮອງຫົວໜ້າ ຄະນະໂຄສະນາອົບຮົມສູນກາງພັກ.

5. ສະຫາຍ ນາງ ບົວລີ ບັນຊາລິດ, ຫົວໜ້າ ກົມໂຄສະນາ, ຄະນະໂຄສະນາອົບຮົມສູນກາງພັກ.

6. ສະຫາຍ ປອ. ຄຳແພງ ທິບມູນຕາລີ, ຫົວໜ້າສະຖາບັນ ຄົ້ນຄວ້າສັງຄົມສາດ, ສະຖາບັນ ວິທະຍາສາດສັງຄົມແຫ່ງຊາດ.

7. ສະຫາຍ ນາງ ແສງຕານ ແກ້ວອິນດາປັ່ງ, ຫົວໜ້າ ກົມ ສັງລວມ, ຄະນະໂຄສະນາອົບຮົມສູນກາງພັກ.

8. ສະຫາຍ ຄຳເຄນ ຈັນທະວົງ, ຫົວໜ້າ ກົມອົບຮົມ, ຄະ ນະໂຄສະນາອົບຮົມສູນກາງພັກ.

9. ສະຫາຍ ຜາຄຳ ອິນແສງ, ຫົວໜ້າກົມຄົ້ນຄວ້າສັງລວມ ຫ້ອງວ່າການສູນກາງພັກ.

10. ສະຫາຍ ສາຄອນ ພົມມະລາດ, ຫົວໜ້າຫ້ອງການ, ຄະນະໂຄສະນາອົບຮົມສູນກາງພັກ.

11. ສະຫາຍ ແສງທອງ ພຸດທະວົງ, ວ່າການຫົວໜ້າ ຄະນະ ກໍ່ສ້າງພັກ-ປະຫວັດພັກ, ສະຖາບັນການເມືອງ ແລະ ການປົກຄອງ ແຫ່ງຊາດ.

12. ສະຫາຍ ປອ ພັນປະກິດ ອ່ອນພັນດາລາ, ຮອງຫົວໜ້າ ກົມຄົ້ນຄວ້າສັງລວມ, ຫ້ອງວ່າການສູນກາງພັກ.

13. ສະຫາຍ ກາລູນາ ບັນທະວົງດວງສີ, ຮອງຫົວໜ້າ ກົມ ແຜນການ, ກະຊວງ ແຜນການ ແລະ ການລົງທຶນ.

14. ສະຫາຍ ຄຳທອງ ທຳມະເທວາ, ຮອງຫົວໜ້າ ກົມອົບຮົມ, ຄະນະໂຄສະນາອົບຮົມສູນກາງພັກ.

15. ສະຫາຍ ສິມໄຊ ທຳມະພັດ, ຫົວໜ້າພະແນກ, ກະຊວງ ແຜນການ ແລະ ການລົງທຶນ.

**<u>ມາດຕາ 02:</u>** ສິດ ແລະ ໜ້າທີ່.

- ປະຊຸມປຶກສາຫາລື ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະສະຫາຍ.

- ສ້າງ ແລະ ຮຽບຮຽງເອກະສານຄົ້ນຄວ້າເຊື່ອມຊຶມ ໃຫ້ພະນັກງານການນໍາຂັ້ນສູນກາງຄຸ້ມຄອງ.

**<u>ມາດຕາ 03:</u>** ງົບປະມານ ແມ່ນໃຫ້ນໍາໃຊ້ງົບປະມານຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ.

**<u>ມາດຕາ 04:</u>** ພາກສ່ວນກ່ຽວຂ້ອງ, ບັນດາສະຫາຍທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມມະຕິຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**<u>ມາດຕາ 05:</u>** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ປະຈໍາການ**
**ຄະນະເລຂາທິການສູນກາງພັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ ເລກທີ 08/ຄອສພ
ນະຄອນຫຼວງວຽງຈັນ, ວັນທີ 19 ເມສາ 2021

# ຄໍາແນະນໍາ
# ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ

**ເຖິງ: ຄະນະພັກ ບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ.**

ອີງຕາມຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບ ເລກທີ 38/ຄລສພ, ລົງວັນທີ 09 ມີນາ 2021 ວ່າດ້ວຍການຈັດຕັ້ງ ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງ ພັກ.

**ຄະນະໂຄສະນາອົບຮົມສູນກາງພັກ ອອກຄໍາແນະນໍາກ່ຽວກັບ ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ດັ່ງນີ້:**

## I. ຈຸດປະສົງ, ຄາດໝາຍ.

- ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຄຳສັ່ງ ຂອງ ຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນ ຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ຖືກຕ້ອງສອດ ຄ່ອງ ແລະ ມີປະສິດທິຜົນ;

- ເພື່ອເຮັດໃຫ້ການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໃຫ້ເປົ້າໝາຍຕ່າງໆ ມີຄວາມເຂົ້າໃຈເລິກເຊິ່ງ, ມີຄວາມເປັນເອ ກະພາບໃນການຜັນຂະຫຍາຍປະຕິບັດ ແລະ ແທດເໝາະກັບສະພາບ ຕົວຈິງ;

- ແນໃສ່ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບ ດ້ານໃນແຕ່ລະຂົງເຂດວຽກງານທັງຢູ່ສູນກາງ ແລະ ທ້ອງຖິ່ນ ກໍຄືໃນທົ່ວ ພັກ, ທົ່ວລັດ ແລະ ໃນທົ່ວສັງຄົມ.

## II. ບັນດາເນື້ອໃນຕົ້ນຕໍໃນລາຍງານການເມືອງກໍຄືໃນມະຕິ XI ຂອງພັກ.

**1. ຄຳຂວັນ ຫຼື ຫົວຂໍ້ຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ:** ໄດ້ຍົກຂຶ້ນຂ້ອນຂ້າງກວມລວມບັນຫາເລັ່ງທວງ ກໍຄືທິດທາງ ແລະ ຄາດ ໝາຍຕົ້ນຕໍ ທີ່ຕ້ອງໄດ້ບຸກບືນສູ້ຊົນໃນຊຸມປີຕໍ່ໜ້າ. ພ້ອມນັ້ນ ໄດ້ມີຄຳ ອະທິບາຍແຕ່ລະວັກຢ່າງລະອຽດ, ໃຫ້ຄະນະພັກແຕ່ລະຂັ້ນນຳໄປຜັນ ຂະຫຍາຍ ເຂົ້າສູ່ການຈັດຕັ້ງນຳພາວຽກງານຕົວຈິງ ຕາມພາລະບົດບາດ ຂອງຕົນ.

**2. ຕີລາຄາໝາກຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ປະເມີນຜົນກວມລວມການສ້າງບັນດາປະຖົມປັດໄຈ ໃຫ້ແກ່ການກ້າວຂຶ້ນສູ່ສັງຄົມນິຍົມຕາມແນວທາງປ່ຽນແປງໃໝ່.**

ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄັດຈ້ອນເປັນເນື້ອໃນເອກະສານເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XI, ໃນນັ້ນການຕີລາຄາໝາກຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກໄດ້ຍົກໃຫ້ເຫັນ 8 ຜົນສໍາເລັດໃຫຍ່ທີ່ພົ້ນເດັ່ນ, ພ້ອມນັ້ນກໍຍົກໃຫ້ເຫັນ 6 ຈຸດອ່ອນ - ຂໍ້ຄົງຄ້າງ, 4 ສາເຫດຕົ້ນຕໍ ແລະ 4 ບົດຮຽນທີ່ຖອດຖອນໄດ້. ນັ້ນແມ່ນການຕີລາຄາລວມຈາກສະພາບຕົວຈິງຂອງປະເທດເຮົາ, ຕໍ່ບັນຫາດັ່ງກ່າວກະຊວງ, ອົງການແລະທ້ອງຖິ່ນຕ່າງໆຕ້ອງເປັນເຈົ້າການໃນການເສີມຂະຫຍາຍຜົນສໍາເລັດດ້ານດີທີ່ຍາດມາໄດ້ ແລະ ຄົ້ນຄວ້າວາງມາດຕະການໃນການແກ້ໄຂຈຸດອ່ອນຂໍ້ຄົງຄ້າງດັ່ງກ່າວແນວໃດຢູ່ຂະແໜງການ ແລະ ທ້ອງຖິ່ນຕົນ ໃຫ້ມີການຫັນປ່ຽນທີ່ຕັ້ງໜ້າຢ່າງແທ້ຈິງ.

**ໃນການສ້າງບັນດາປະຖົມປັດໄຈ ໃຫ້ແກ່ການກ້າວຂຶ້ນສູ່ສັງຄົມນິຍົມຕາມແນວທາງປ່ຽນແປງໃໝ່,** ແມ່ນການປະເມີນໂດຍພື້ນຖານມີລັກສະນະກວມລວມ, ສ່ວນການສະຫຼຸບຕີລາຄາລະອຽດໃນ 9 ປະຖົມປັດໄຈນັ້ນວ່າອັນໃດພວກເຮົາເຮັດໄດ້ແລ້ວ, ອັນໃດຍັງເຮັດບໍ່ທັນໄດ້ ແລະ ຍັງຈະສືບຕໍ່ອັນໃດຕື່ມ ຕ້ອງມີການຄົ້ນຄວ້າຢ່າງເລິກເຊິ່ງສົມຄວນ. ແຕ່ໃນຕໍ່ໜ້ານີ້ບັນດາຂະແໜງການ ແລະ ທ້ອງຖິ່ນຕ້ອງເປັນເຈົ້າການກວດກາ ແລະ ປະເມີນຄືນວ່າຂະແໜງການ ແລະ ທ້ອງຖິ່ນຕົນ ໄດ້ຈັດຕັ້ງປະຕິບັດບັນດາປະຖົມປັດໄຈດັ່ງກ່າວ ໄດ້ແນວໃດແລ້ວ, ອັນໃດບໍ່ທັນໄດ້ ແລະ ຈະວາງທິດທາງສືບຕໍ່ໃນຕໍ່ໜ້າແນວໃດ.

**3. ການເລັ່ງທວງ ແລະ ທິດທາງພື້ນຖານ ໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ, ສ້າງການຫັນປ່ຽນແຂງແຮງເລິກເຊິ່ງ ແລະ ຮອບດ້ານ ເພື່ອກ້າວເດີນສູ່ຈຸດໝາຍສັງຄົມນິຍົມ.**

3.1. ສະພາບເລັ່ງທວງໃນການພັດທະນາປະເທດຊາດ ໃນຊຸມປີຕໍ່ໜ້າ ທີ່ໄດ້ຍົກຂຶ້ນມີ 5 ເນື້ອໃນຕົ້ນຕໍ, ຊຶ່ງ 5 ບັນຫາດັ່ງກ່າວມັນແມ່ນຄວາມຮຽກຮ້ອງຕ້ອງການອັນຈຳເປັນ ທີ່ບັນດາຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຕ້ອງສ້າງເປັນແຜນງານ ແລະ ໂຄງການລະອຽດ ແລະ ມີມາດຕະການຈັດຕັ້ງປະຕິບັດໃນ 5 ປີຕໍ່ໜ້ານີ້ ໃຫ້ປະກົດຜົນເປັນຈິງ.

3.2. ໃນລາຍງານການເມືອງນອກຈາກໄດ້ຍົກທິດທາງພື້ນຖານ, ກໍໄດ້ກຳນົດທິດທາງ ແລະ ຄາດໝາຍລວມຮອດປີ 2025 ມີ 5 ເນື້ອໃນຕົ້ນຕໍ, ຊຶ່ງທຸກຂະແໜງການ ຕ້ອງອີງໃສ່ອັນນີ້ ເພື່ອປັບປຸງບັນດາທິດທາງ ແລະ ຄາດໝາຍທີ່ກອງປະຊຸມໃຫຍ່ຂອງຕົນໄດ້ວາງອອກ ໃຫ້ສອດຄ່ອງ ແລະ ແທດເໝາະກັບສະພາບຕົວຈິງຂອງຕົນ.

**4. ເນື້ອໃນວຽກງານຈຸດສຸມໃນແຕ່ລະຂົງເຂດທີ່ກະຊວງ, ອົງການ ແລະ ທ້ອງຖິ່ນຕ້ອງຫັນເປັນແຜນການ, ໂຄງການລະອຽດຂອງຕົນ.**

ໃນລາຍງານການເມືອງໄດ້ຍົກມີ 8 ວຽກງານຈຸດສຸມກວມເອົາ 7 ຂົງເຂດຄື: ຂົງເຂດ ປກຊ - ປກສ, ຂົງເຂດເສດຖະກິດ, ຂົງເຂດສັງຄົມ, ຂົງເຂດອຳນາດລັດ, ຂົງເຂດແນວໂຮມ ແລະ ວຽກງານມະຫາຊົນຂອງພັກ, ຂົງເຂດການຕ່າງປະເທດ, ຂົງເຂດພັກ - ພະນັກງານ.

ບັນດາເນື້ອໃນວຽກງານດັ່ງກ່າວ, ແຕ່ລະກະຊວງ, ອົງການ ແລະ ທ້ອງຖິ່ນ ຕ້ອງໄດ້ເປັນເຈົ້າການຜັນຂະຫຍາຍ ໂດຍຫັນເປັນ

ວຽກງານຈຸດສຸມຂອງຕົນແທດກັບເງື່ອນໄຂ ແລະ ສະພາບຕົວຈິງ, ກຳນົດເປັນແຜນວຽກລະອຽດວ່າມີຈັກວຽກ, ຈາກນັ້ນ ຈັດລຽງບູລິມະສິດ ພ້ອມທັງມີມາດຕະການຈັດຕັ້ງປະຕິບັດຕົວຈິງ.

ຕົວຢ່າງ:

- ການລົງທຶນກໍ່ສ້າງຮາກຖານການເມືອງ (ໃນວຽກງານ ປກຊ - ປກສ) ຈະກຳນົດມີຈັກຈຸດສຸມ, ເນັ້ນແກ້ໄຂບັນຫາໃດເປັນຕົ້ນຕໍ...;

- ການພັດທະນາບັນດາທ່າແຮງບົ່ມຊ້ອນ, ທຽບໃສ່ທ້ອງຖິ່ນຂອງຕົນ ມີດ້ານໃດທີ່ເຫັນວ່າເປັນທ່າແຮງທີ່ແທ້ຈິງ ແລະ ຈະຂຸດຄົ້ນພັດທະນາໃຫ້ເກີດປະໂຫຍດສູງສຸດຢ່າງຍືນຍົງຄືແນວໃດ. ນອກນັ້ນ ກໍຕ້ອງໄດ້ຄຳນຶງໃນການພັດທະນາ ບໍລິເວນເຂດແຄວ້ນຢ່າງກົມກຽວ, ໂດຍມີການປະສານສົມທົບຢ່າງລົງຕົວ ລະຫວ່າງທ້ອງຖິ່ນກັບທ້ອງຖິ່ນໃກ້ຄຽງ, ລະຫວ່າງທ້ອງຖິ່ນກັບສູນກາງ...;

- ກ່ຽວກັບການສືບຕໍ່ປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກເຄື່ອນໄຫວ ຂອງບັນດາອົງການອຳນາດລັດ, ໃຫ້ບັນດາກະຊວງ - ອົງການ ແລະ ທ້ອງຖິ່ນ ຄົ້ນຄວ້າຢ່າງເລິກເຊິ່ງ ແລະ ຜັນຂະຫາຍແກ້ໄຂໃຫ້ຖືກຕ້ອງ, ສ້າງໃຫ້ມີການຫັນປ່ຽນໃໝ່ທີ່ຕັ້ງໜ້າ ແລະ ມີປະສິດທິຜົນຢ່າງແທ້ຈິງ;

- ວຽກງານພັກ - ພະນັກງານ, ບັນດາຄາດໝາຍໃຫຍ່ແມ່ນ: ເດັດດ່ຽວແກ້ໄຂຈຸດອ່ອນ - ຂໍ້ຄົງຄ້າງພາຍໃນພັກ, ຮັບປະກັນບົດບາດການເຄື່ອນໄຫວນຳພາຕົວຈິງທີ່ເຂັ້ມແຂງ ຂອງການຈັດຕັ້ງທຸກຂັ້ນ, ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງໃນວຽກງານພະນັກງານ.

ວຽກງານນີ້ ໃຫ້ຄະນະພັກແຕ່ລະຂັ້ນ, ແຕ່ລະບ່ອນຕ້ອງເອົາໃຈໃສ່ປັບປຸງແກ້ໄຂ ບັນຫາວຽກງານພັກ - ພະນັກງານ ທີ່ຄຸມເຄືອໃນຫຼາຍ

ສະໄໝຜ່ານມາ ຢ່າງເປັນລະບົບ, ເຂັ້ມງວດ ເພື່ອສ້າງພັກໃຫ້ປອດໃສ ເຂັ້ມແຂງ ແລະ ໜັກແໜ້ນຢ່າງແທ້ຈິງ.

ນອກນີ້, ແຕ່ລະເນື້ອໃນອື່ນໆ ກໍໃຫ້ຜັນຂະຫຍາຍເປັນອັນລະອຽດຂອງກະຊວງ - ອົງການ ແລະ ທ້ອງຖິ່ນ ຕິດພັນກັບການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ເປັນຮູບປະທຳ.

### III. ມາດຕະການຈັດຕັ້ງປະຕິບັດ.

① ຄະນະພັກກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງນຳພາຄົ້ນຄວ້າ, ເຊື່ອມຊຶມກຳແໜ້ນເນື້ອໃນຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ຄຳແນະນຳສະບັບນີ້ໃຫ້ເລິກເຊິ່ງ ແລະ ຫັນເປັນແຜນງານ, ໂຄງການ, ຄາດໝາຍສູ້ຊົນຂອງຄະນະພັກ ພ້ອມທັງນຳພາຈັດຕັ້ງປະຕິບັດ ໃຫ້ບັນລຸໝາກຜົນຕົວຈິງ.

② ຄະນະພັກແຕ່ລະຂັ້ນ ເປັນເຈົ້າການຕິດຕາມ, ຊຸກຍູ້ການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ຢ່າງຕໍ່ເນື່ອງ, ມີການສະຫຼຸບຕີລາຄາເປັນປົກກະຕິ ແລະ ປະຕິບັດລະບອບລາຍງານຕໍ່ຄະນະພັກຂັ້ນເທິງຢ່າງເປັນລະບົບ.

③ ຫ້ອງວ່າການສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະກວດກາສູນກາງພັກ ແລະ ຄະນະຈັດຕັ້ງສູນກາງພັກ ເປັນເຈົ້າການແນະນຳ, ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກຕາມພາລະບົດບາດຂອງຕົນ ເພື່ອ

ເກັບກຳລັງລວມລາຍງານຕໍ່ກົມການເມືອງ, ຄະນະເລຂາທິການສູນກາງພັກ ຮັບຊາບ ແລະ ໃຫ້ທິດຊີ້ນຳເປັນປົກກະຕິ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ ເລກທີ 15 /ຄອສພ
ນະຄອນຫຼວງວຽງຈັນ,ວັນທີ 10 ພຶດສະພາ 2021

# ແຈ້ງການ
## ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ

ເຖິງ: ເລຂາຄະນະພັກ ບັນດາກະຊວງ-ອົງການ, ເລຂາຄະນະພັກ ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 38/ຄລສພ, ລົງວັນທີ 9 ມີນາ 2021 ວ່າດ້ວຍການຈັດການເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ;
- ອີງຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19;
- ອີງຕາມຄໍາສັ່ງແນະນໍາຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 87/ຄລສພ, ລົງວັນທີ 25 ເມສາ 2021 ວ່າດ້ວຍການເພີ່ມ

ທະວີຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນ ໃນການສືບຕໍ່ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂພະຍາດໂຄວິດ - 19.

ຜ່ານມາ, ຄະນະພັກ ບັນດາກະຊວງ - ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ເປັນເຈົ້າການໃນການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 38/ຄລສພ, ລົງວັນທີ 9 ມີນາ 2021 ວ່າດ້ວຍການຈັດຕັ້ງການເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ເຊິ່ງມີກະຊວງ - ອົງການ ແລະ ທ້ອງຖິ່ນຈຳນວນໜຶ່ງ ໄດ້ດຳເນີນການເຊື່ອມຊຶມ ແລະ ຜັນຂະຫຍາຍສຳເລັດ ຢູ່ຂັ້ນກະຊວງ - ອົງການ ແລະ ທ້ອງຖິ່ນຕົນ, ແຕ່ກໍຍັງມີຫຼາຍກະຊວງ - ອົງການ ແລະ ທ້ອງຖິ່ນຈຳນວນໜຶ່ງ ທີ່ຍັງບໍ່ທັນໄດ້ດຳເນີນການເຊື່ອມຊຶມ ແລະ ເຜີຍແຜ່ມະຕິດັ່ງກ່າວ ອັນເນື່ອງມາຈາກສະພາບການລະບາດຂອງພະຍາດໂຄວິດ-19 ຮອບໃໝ່. ດັ່ງນັ້ນ, ເພື່ອເຮັດໃຫ້ເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ສືບຕໍ່ໄດ້ຮັບການຈັດຕັ້ງຄົ້ນຄວ້າເຊື່ອມຊຶມ, ຜັນຂະຫຍາຍຢ່າງເລິກເຊິ່ງ, ທົ່ວເຖິງທຸກເປົ້າໝາຍ ແລະ ຈັດຕັ້ງປະຕິບັດໄດ້ຮັບຜົນດີ.

ຄະນະໂຄສະນາອົບຮົມສູນກາງພັກ ຂໍຖືເປັນກຽດແຈ້ງມາຍັງບັນດາສະຫາຍ ເລຂາຄະນະພັກກະຊວງ - ອົງການ, ເລຂາຄະນະພັກແຂວງ ແລະ ນະຄອນຫຼວງວຽງຈັນ ຈົ່ງສືບຕໍ່ເອົາໃຈໃສ່ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ດັ່ງນີ້

**I. ຈຸດປະສົງລະດັບຄາດໝາຍ.**

1. ເພື່ອເຮັດໃຫ້ເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ສືບຕໍ່ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະ

ຫຍາຍຢ່າງເລິກເຊິ່ງ, ທົ່ວເຖິງທຸກເປົ້າໝາຍ ແລະ ສາມາດປະຕິບັດໄດ້ ບັນດາມາດຕະການສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂສະພາບ ການແຜ່ລະບາດຂອງພະຍາດໂຄວິດ-19 ໃນທົ່ວໂລກ ແລະ ພາຍໃນປະ ເທດທີ່ມີການແຜ່ລະບາດເປັນວົງກວ້າງ ແລະ ບໍ່ທັນມີທ່າຫຼຸດຜ່ອນລົງ ຊຶ່ງ ສ້າງຜົນກະທົບຢ່າງໜັກຕໍ່ເສດຖະກິດ - ສັງຄົມ, ການດໍາລົງຊີວິດ ໂດຍ ສະເພາະ ແມ່ນສ້າງຄວາມຫຍຸ້ງຍາກຕໍ່ການຈັດຕັ້ງເຊື່ອມຊຶມມະຕິກອງ ປະຊຸມໃຫຍ່ ຄັ້ງທີ XI ຂອງພັກ;

2. ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ບັນດາເຜົ່າມີຄວາມຮັບຮູ້, ເຂົ້າໃຈ ຢ່າງເລິກເຊິ່ງ ແລະ ມີຄວາມເປັນ ເອກະພາບສູງໃນການຈັດຕັ້ງປະຕິບັດຕົວຈິງ ຕໍ່ເນື້ອໃນມະຕິກອງປະຊຸມ ໃຫຍ່ຄັ້ງທີ XI ຂອງພັກ ໃຫ້ປະກົດຜົນເປັນຈິງ;

3. ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວ ເພື່ອສ້າງຄວາມ ເຊື່ອໝັ້ນ, ຄວາມຕັດສິນໃຈສູງ ແລະ ຍົກສູງຄວາມຮັບຜິດຊອບຂອງຄະ ນະພັກ, ອົງການປົກຄອງທຸກຂັ້ນ ກໍຄືພະນັກງານ, ສະມາຊິກພັກ ແລະ ບັນດາຊັ້ນຄົນໃນທົ່ວສັງຄົມ ເຂົ້າສູ່ການຈັດຕັ້ງປະຕິບັດ ມະຕິກອງປະ ຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ໄດ້ຮັບຜົນດີ.

## II. ວິທີການຈັດຕັ້ງເຊື່ອມຊຶມຢູ່ບັນດາກະຊວງ, ອົງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.

ເນື່ອງຈາກວ່າສະພາບ ແລະ ການລະບາດຂອງພະຍາດໂຄວິດ-19 ຍັງສືບຕໍ່ແຜ່ລະບາດໃໝ່ ໃນວົງກວ້າງ ໃນຂອບເຂດທົ່ວປະເທດ, ດັ່ງນັ້ນ ສະເໜີໃຫ້ຄະນະພັກກະຊວງ - ອົງການ, ແຂວງ ແລະ ນະຄອນ ຫຼວງວຽງຈັນ ເອົາໃຈໃສ່ບາງບັນຫາ ດັ່ງລຸ່ມນີ້:

1. ໃຫ້ຄະນະພັກບັນດາກະຊວງ - ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ສືບຕໍ່ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ຕໍ່ເນື່ອງ ແລະ ທົ່ວເຖິງໃນທຸກເປົ້າໝາຍ ໂດຍອີງໃສ່ສະພາບຕົວຈິງຂອງກະຊວງ - ອົງການ ແລະ ທ້ອງຖິ່ນຕົນ ເພື່ອຈັດຕັ້ງປະຕິບັດໃຫ້ແທດເໝາະ, ແຕ່ຕ້ອງຮັບປະກັນປະຕິບັດບັນດາມາດຕະການ ທີ່ຄະນະສະເພາະກິດຕ້ານພະຍາດໂຄວິດ-19 ວາງອອກຢ່າງເຂັ້ມງວດ;

2. ໃຫ້ຄະນະພັກກະຊວງ - ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການຄົ້ນຄວ້າວິທີຈັດຕັ້ງປະຕິບັດຕົວຈິງ ໂດຍຈັດແບ່ງເປັນຫຼາຍລະດັບ, ຫຼາຍຈຸດ ຫຼື ຫຼາຍບ່ອນ ເພື່ອຮັບປະກັນບໍ່ເຕົ້າໂຮມຄົນຈຳນວນຫຼາຍ ແລະ ສາມາດຮັກສາໄລຍະຫ່າງກັນໄດ້ ທັງຮັບປະກັນມາດຕະການປ້ອງກັນໃຫ້ເຂັ້ມງວດ;

3. ບ່ອນໃດມີເງື່ອນໄຂສະດວກ ໃນການນຳໃຊ້ພາຫະນະສື່ສານທີ່ທັນສະໄໝ ແມ່ນໃຫ້ຈັດຕັ້ງການເຊື່ອມຊຶມ ແລະ ເຜີຍແຜ່ຜ່ານວີດີໂອທາງໄກ ( Video Conference ) ຫຼື ພາຫະນະອື່ນໆ ທີ່ເຫັນວ່າເໝາະສົມ;

4. ສຳລັບຢູ່ທ້ອງຖິ່ນຮາກຖານ ຫຼື ບ່ອນຫ່າງໄກສອກຫຼີກ ແມ່ນຈັດພິມບັນດາເນື້ອໃນເອກະສານທີ່ຈະເຊື່ອມຊຶມ ແລະ ເຜີຍແຜ່ດັ່ງກ່າວຈັດສົ່ງໃຫ້ຄະນະພັກຮາກຖານ ຫຼື ຄະນະໜ່ວຍພັກແຕ່ລະບ່ອນໃຫ້ທົ່ວເຖິງໄດ້ອ່ານຄົ້ນຄວ້າ ແລະ ເຊື່ອມຊຶມ ເພື່ອຈັດຕັ້ງປະຕິບັດຕົວຈິງ;

5. ສຳລັບບ່ອນໃດ ທີ່ສາມາດສະກັດກັ້ນພະຍາດໂຄວິດ - 19 ໄດ້, ການເຄື່ອນໄຫວກັບຄືນສູ່ສະພາບປົກກະຕິແລ້ວ, ແມ່ນໃຫ້ຄະນະພັກແຕ່ລະຂັ້ນ ແບ່ງກັນລົງຊີ້ນຳຢູ່ບັນດາທ້ອງຖິ່ນຮາກຖານ, ເຂດຊົນ

ນະບົດ ເພື່ອຕິດຕາມກວດກາ ແລະ ຊີ້ນໍາການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XI ຂອງພັກ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ. ພ້ອມທັງຊີ້ນໍາ - ນໍາພາການຈັດຕັ້ງປະຕິບັດຕົວຈິງ;

6. ໃຫ້ຄະນະພັກບັນດາກະຊວງ - ອົງການ, ຄະນະພັກແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການສະຫຼຸບລາຍງານຜົນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃນແຕ່ລະໄລຍະໃຫ້ຫ້ອງວ່າການສູນກາງພັກ ແລະ ຄະນະໂຄສະນາອົບຮົມສູນກາງພັກຊາບ ເພື່ອສະຫຼຸບສັງລວມລາຍງານຕໍ່ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກຊາບ ແລະ ໃຫ້ທິດຊີ້ນໍາໃນຂັ້ນຕໍ່ໄປ.

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງ ບັນດາສະຫາຍ ຄະນະພັກກະຊວງ - ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ຈົ່ງຮັບຊາບ ແລະ ຈັດຕັ້ງຕາມຈິດໃຈເນື້ອໃນດັ່ງກ່າວດ້ວຍ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

# ອະທິບາຍກ່ຽວກັບຄຳຂວັນຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ

ຄຳຂວັນ ຫຼື ຫົວຂໍ້ ຂອງກອງປະຊຸມໃຫຍ່ **"ຍົກສູງຄວາມສາມາດນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນໃນຊາດ, ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນການພັດທະນາເສດຖະກິດ - ສັງຄົມ ໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ, ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ສືບຕໍ່ນຳປະເທດຊາດພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ"** ແມ່ນແນວຄິດຊີ້ນຳທີ່ສ່ອງແສງ ແລະ ການຊີ້ບອກທີ່ມີລັກສະນະກວມລວມ ໃຫ້ແກ່ການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃນຊຸມປີຕໍ່ໜ້າ; ມັນແມ່ນການຢືນຢັນການເພີ່ມທະວີບົດບາດການນຳພາຂອງພັກເຮົາ ຕໍ່ການເປັນແກນກາງໃນການສືບຕໍ່ກຳອຳນາດ ແລະ ນຳພາພາລະກິດປະຕິວັດ, ຊີ້ໃຫ້ຄວາມເປັນອັນໜຶ່ງອັນດຽວລະຫວ່າງອຸດົມການ ແລະ ການເຄື່ອນໄຫວຂອງພັກກັບຄວາມມຸ່ງມາດປາຖະໜາ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ທັງບົ່ງບອກພາລະກິດ ແລະ ໜ້າທີ່ລວມຂອງທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນເຮົາໃນ 5 ປີຕໍ່ໜ້າ ກໍຄືໃນໄລຍະຍາວນານ. ການກຳນົດຫົວຂໍ້ຄືແນວນັ້ນ ເພື່ອສ່ອງແສງເຖິງອຸດົມການພື້ນຖານຂອງພັກ, ການເສີມຂະຫຍາຍບົດບາດຂອງກຳລັງແຮງແຫ່ງມະຫາ

ສາມັກຄີຂອງຄົນໃນຊາດ; ພ້ອມກັນນັ້ນຍາກບົ່ງບອກເຖິງຫຼາຍໆບັນຫາທີ່ເປັນໃຈກາງ ແລະ ພວມເລັ່ງທວງໃຫ້ມີການປັບປຸງແກ້ໄຂທັງມີລັກສະນະກວມລວມ, ທັງບົ່ງບອກແລະເປີດທາງໃຫ້ແກ່ການກຳນົດເນື້ອໃນ, ວິທີການ, ມາດຕະການອັນລະອຽດທີ່ແທດເໝາະ ເພື່ອບັນລຸການຫັນປ່ຽນອັນແຂງແຮງ, ເລິກເຊິ່ງແລະຮອບດ້ານໃນການສືບຕໍ່ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນຢູ່ປະເທດເຮົາ. ຄຳຂວັນຍັງຢາກຊີ້ໃຫ້ເຫັນວ່າການແກ້ໄຂຄວາມຫຍຸ້ງຍາກ ແລະ ຍູ້ແຮງການພັດທະນາເສດຖະກິດ - ສັງຄົມໃນຕໍ່ໜ້າ ຕ້ອງຕິດພັນກັບການສ້າງການຫັນປ່ຽນອັນເປັນພື້ນຖານ, ເລິກເຊິ່ງທັງລະບົບຫຼືທັງໝົດໂຄງສ້າງ ເພື່ອກຳນົດທິດ ແລະ ອົງປະກອບຄືນໃໝ່ ຮັບປະກັນການເສີມຂະຫຍາຍກຳລັງແຮງພາຍໃນ ແລະ ສອດຄ່ອງກັບຈຸດໝາຍປາຍທາງ, ພ້ອມທັງຊີ້ນຳເປົ້າໝາຍ ແລະ ກຳນົດຄາດໝາຍສູ້ຊົນຈະແຈ້ງໃນຊຸມປີຕໍ່ໜ້າ.

① **"ຍົກສູງຄວາມສາມາດນຳພາຂອງພັກ"** ແມ່ນການສືບຕໍ່ຢືນຢັນຄວາມຈຳເປັນ ແລະ ຄວາມຮຽກຮ້ອງຕ້ອງການໃນການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາ ໃນເງື່ອນໄຂໃໝ່ຂອງການປະຕິວັດ ເຊິ່ງແມ່ນບັນຫາພື້ນຖານ, ທັງເປັນບັນຫາຮີບດ່ວນຂອງການປັບປຸງ, ກໍ່ສ້າງພັກເຮົາ, ແມ່ນປັດໄຈຕັດສິນການກ້າວຂຶ້ນຂອງພາລະກິດປະຕິວັດຢູ່ປະເທດເຮົາ. ຍົກສູງຄວາມສາມາດນຳພາຂອງພັກສະແດງອອກໃນ 5 ດ້ານຄື: ຄວາມສາມາດໃນການກຳນົດແນວທາງບົນພື້ນຖານກຳແໜ້ນທິດສະດີມາກ - ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ທິດສະດີກ້າວໜ້າອື່ນໆ, ຮັບຮູ້ບັນດາກົດເກນ ແລະ ໝູນໃຊ້ຢ່າງສອດຄ່ອງ, ເພີ່ມທະວີການຄົ້ນຄວ້າທິດສະດີ, ສະຫຼຸບພຶດຕິກຳ ແລະ ໃຫ້ຄຳຕອບຢ່າງທັນການຕໍ່ກັບບັນຫາທີ່ຕັ້ງຂຶ້ນ. ຄວາມສາມາດໃນການ

ຫັນແນວທາງ, ແຜນນະໂຍບາຍຂອງພັກໃຫ້ກາຍເປັນທິດທາງ, ແຜນການ ແລະ ກົດໝາຍຕ່າງໆທີ່ສ່ອງແສງອອກຢ່າງຖືກຕ້ອງ ແລະ ຄົບຖ້ວນເຖິງຜົນປະໂຫຍດ, ເຈດຕະນາລົມ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນ, ທັງຊີ້ນຳການຈັດຕັ້ງປະຕິບັດ ໃຫ້ເກີດຜົນເປັນຈິງ. ຄວາມສາມາດນຳພາຊີ້ນຳ ການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ໃຫ້ເກີດຜົນເປັນຈິງ, ນຳເອົາຜົນປະໂຫຍດສູງສຸດມາໃຫ້ປະເທດຊາດ ແລະ ປະຊາຊົນ. ຄວາມສາມາດໃນການຕິດຕາມ, ກວດກາ, ຊຸກຍູ້ການເຄື່ອນໄຫວຂອງທົ່ວລະບົບການເມືອງ ໃນການຈັດຕັ້ງປະຕິບັດແນວທາງຂອງພັກ. ຄວາມສາມາດໃນການຄົ້ນເຫັນ ແລະ ຕໍ່ສູ້, ຕ້ານ, ກຳຈັດປັດເປົ່າປະກົດການຫຍໍ້ທໍ້ພາຍໃນພັກຢ່າງທັນການ ແລະ ຕ້ານກົນອຸບາຍຫັນປ່ຽນໂດຍສັນຕິຂອງອິດທິກຳລັງປໍລະປັກ.

② **"ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນໃນຊາດ"** ແມ່ນມູນເຊື້ອ, ເປັນກຳລັງແຮງຊະນະເລີດ, ເປັນປັດໄຈພື້ນຖານໃຫ້ແກ່ການສ້າງ ແລະ ຮັກສາສະຖຽນລະພາບທາງການເມືອງ, ຄວາມສະຫງົບທາງສັງຄົມຢ່າງໜັກແໜ້ນ, ຮັບປະກັນການປົກປັກຮັກສາໝາກຜົນຂອງການປະຕິວັດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ຢ່າງໝັ້ນຄົງ ກໍຄືການສ້າງສາພັດທະນາປະເທດຊາດ ໃຫ້ບັນລຸໄດ້ຕາມຈຸດໝາຍທີ່ກຳນົດໄວ້. ໝາຍເຖິງການເພີ່ມທະວີຄວາມເປັນປຶກແຜ່ນ, ຄວາມເປັນຈິດໜຶ່ງໃຈດຽວກັນ ແລະ ການຮັກຫອມຕ່ອມຕຸ້ມຂອງປະຊາຊົນລາວທຸກເຜົ່າ ໃນວົງຄະນາຍາດແຫ່ງຊາດລາວ ເອກະພາບຢ່າງໜັກແໜ້ນພາຍໃຕ້ການນຳພາຂອງພັກ ທີ່ເປັນແກ່ນສານຂອງຄວາມສາມັກຄີເປັນເອກະພາບຂອງຊາດ ບົນພື້ນຖານມານະຈິດ ແລະ ອຸດົມຄະຕິຄວາມ

ເປັນຊາດລາວ ກໍຄືການບູລະນະລະບອບປະຊາທິປະໄຕປະຊາຊົນ ຕາມຈຸດໝາຍສັງຄົມນິຍົມ.

③ **"ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ"** ພັກເຮົາຍາມໃດ ກໍຢືນຢັນວ່າສະຖຽນລະພາບທາງດ້ານການເມືອງແມ່ນປັດໄຈພື້ນຖານທີ່ຕັດສິນຜົນສຳເລັດ ໃນການປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກເຮົາ. ຢາກພັດທະນາສ້າງສາປະເທດຊາດຢ່າງແຂງແຮງ ແລະ ຕໍ່ເນື່ອງກໍຕໍ່ເມື່ອການເມືອງມີສະຖຽນລະພາບທີ່ໜັກແໜ້ນ, ຕ້ອງເຮັດໃຫ້ການພັດທະນາເສດຖະກິດ - ສັງຄົມ ມີການສົມທົບແໜ້ນກັບວຽກງານ ປກຊ - ປກສ, ຮັບປະກັນໃຫ້ປະເທດຊາດມີຄວາມສະຫງົບໝັ້ນຄົງ, ຮາກຖານການເມືອງ ມີຄວາມເຂັ້ມແຂງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ປະຊາຊົນມີຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນ, ພາຍໃນພັກ - ລັດ ມີຄວາມສາມັກຄີເປັນເອກະພາບ, ກຳລັງປະກອບອາວຸດມີຄວາມເຂັ້ມແຂງ ແລະ ຢູ່ໃນທ່າກຽມພ້ອມປະຕິບັດໜ້າທີ່, ສາມາດຕອບຕ້ານກັບທຸກກຳລະນີທຳລາຍມ້າງເພທີ່ອາດຈະເກີດຂຶ້ນ.

④ **"ຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ"** ເປັນການຢືນຢັນຕື່ມຄວາມຖືກຕ້ອງ ຂອງແນວທາງປ່ຽນແປງໃໝ່ຜ່ານພຶດຕິກຳ 45 ປີ ໃນຖານະພັກກຳອຳນາດ ແລະ ໃນໄລຍະ 35 ປີ ແຫ່ງການປ່ຽນແປງໃໝ່ ຕ້ອງຍຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ ຢ່າງເດັດດ່ຽວໜຽວແໜ້ນແລ້ວ ຍັງຕ້ອງໄດ້ຜັນຂະຫຍາຍເຂົ້າສູ່ລວງເລິກ ໂດຍສືບຕໍ່ເສີມຂະຫຍາຍຄວາມຄິດປະດິດສ້າງ ບົນພື້ນຖານແຫ່ງການຍຶດໝັ້ນ ຄວາມເປັນເອກະລາດແຫ່ງຊາດ ແລະ ຈຸດໝາຍສັງຄົມນິຍົມ, ໝູນໃຊ້ ແລະ ຂະຫຍາຍທິດສະດີມາກ - ເລນິນ, ແນວ

ຄິດໄກສອນ ພົມວິຫານ, ສືບທອດ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ ສົມທົບກັບການຮັບເອົາສິ່ງຍອດຍິ່ງຂອງມວນມະນຸດ ເພື່ອຮັບປະກັນການພັດທະນາປະເທດຊາດ ດຳເນີນໄປຖືກທິດ ແລະ ດ້ວຍຖ່ວງທ່າທີ່ໜັກແໜ້ນ.

⑤ **"ສ້າງການຫັນປ່ຽນການພັດທະນາເສດຖະກິດ - ສັງຄົມ ໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ"** ໝາຍເຖິງການສ້າງການຫັນປ່ຽນອັນຈະແຈ້ງ ແລະ ແຂງແຮງຂອງການພັດທະນາເສດຖະກິດ ຈາກການອີງໃສ່ການຂຸດຄົ້ນ ແລະ ຂາຍຊັບພະຍາກອນທຳມະຊາດ (ວັດຖຸດິບ) ເປັນຕົ້ນຕໍທີ່ພາໃຫ້ຖານການຜະລິດ - ການບໍລິການ, ວິສາຫະກິດປິ່ນອ້ອມ ກໍຄືການເຕີບໂຕດ້ານເສດຖະກິດ… ຂາດພື້ນຖານອັນໜັກແໜ້ນ ແລະ ໝັ້ນຄົງ, ບໍ່ຮັບປະກັນການພັດທະນາຕາມທິດສີຂຽວ ແລະ ຍືນຍົງສູ່ການພັດທະນາ ທີ່ອີງໃສ່ການເສີມຂະຫຍາຍທຸກທ່າແຮງບົ່ມຊ້ອນຂອງຊາດ ຕິດພັນກັບການສ້າງຄວາມເຂັ້ມແຂງ ຂອງກົນໄກຄຸ້ມຄອງເສດຖະກິດ ທີ່ສອດຄ່ອງກັບກົດເກນຂອງຕະຫຼາດ ແລະ ການສົ່ງເສີມພັດທະນາຄວາມເຂັ້ມແຂງຂອງວິສາຫະກິດ ແລະ ຜູ້ປະກອບການຢູ່ພາຍໃນ. ໝາຍຄວາມວ່າໄດ້ເນັ້ນເຖິງການສົ່ງເສີມພັດທະນາ ບັນດາທ່າແຮງຕົ້ນຕໍ ໃຫ້ເປັນຂະແໜງເສດຖະກິດປາຍແຫຼມ ແລະ ສົ່ງເສີມພັດທະນາວິສາຫະກິດ ພາຍໃນໃຫ້ເຂັ້ມແຂງ ເຊິ່ງຖືເປັນປັດໄຈສຳຄັນພື້ນຖານ ຂອງການສ້າງຖານ ແລະ ລະບອບເສດຖະກິດໃຫ້ເຂັ້ມແຂງ, ກ້າວເຖິງຄວາມເປັນເຈົ້າ, ການເຊື່ອມໂຍງ ແລະ ຖືຜົນປະໂຫຍດສູງສຸດຂອງການພັດທະນາ.

⑥ **"ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ"** ດ້ານໜຶ່ງ ແມ່ນສູ້ຊົນແກ້ໄຂຄວາມທຸກຍາກຂອງປະຊາຊົນ ເພື່ອ "ບັນລຸເປົ້າໝາຍປະຊາຊົນມີກິນມີໃຊ້", ປະຈຸບັນປະຊາຊົນເຮົາໂດຍລວມ

ຍັງຢູ່ໃນສະພາບທຸກຍາກ, ຫຍຸ້ງຍາກໃນການດຳລົງຊີວິດ, ຍັງບໍ່ທັນຮັບປະກັນດ້ານລາຍໄດ້ຕົວຈິງ, ດ້ານສຸຂະພາບພະລານະໄມກໍຄືເງື່ອນໄຂການເຂົ້າເຖິງການບໍລິການທາງສັງຄົມທີ່ຍັງຈຳກັດຫຼາຍ; ສະນັ້ນມີຄວາມຈຳເປັນຕ້ອງສູ້ຊົນໃຫ້ບັນລຸເປົ້າໝາຍດັ່ງກ່າວ, ສ່ວນອີກດ້ານໜຶ່ງ ແມ່ນຍູ້ແຮງໃຫ້ປະຊາຊົນທີ່ມີເງື່ອນໄຂແລ້ວສືບຕໍ່ພັດທະນາຍົກລະດັບ, ສ້າງໃຫ້ມີລາຍຮັບ ແລະ ຊີວິດການເປັນຢູ່ໃຫ້ນັບມື້ສູງຂຶ້ນກວ່າເກົ່າ.

⑦ **"ສືບຕໍ່ນຳປະເທດຊາດພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ"** ຍັງແມ່ນໜ້າທີ່ ແລະ ຄາດໝາຍໃຫຍ່ສຳຄັນຂອງພັກເຮົາ ທີ່ຕ້ອງໄດ້ສູ້ຊົນໃຫ້ມີຜົນສຳເລັດ, ເຖິງວ່າຜ່ານມາຫຼາຍມາດຕະຖານໃນການຫຼຸດພົ້ນຈາກສະພາວະດ້ອຍພັດທະນາພວກເຮົາສາມາດບັນລຸໄດ້, ແຕ່ກໍຍັງຢູ່ໃນພາວະທີ່ບໍ່ທັນໝັກແໜ້ນ, ຍິ່ງກວ່ານັ້ນມາດຕະຖານທີ່ສາກົນກຳນົດອອກ ກໍມີການຍົກລະດັບເລື້ອຍໆ, ເຊິ່ງຖ້າບໍ່ສ້າງພື້ນຖານອັນໜັກແໜ້ນກໍມີຄວາມສ່ຽງກັບໄປຄືນສູ່ສະຖານະເກົ່າ. ອີກຢ່າງໜຶ່ງໃນ 3 ມາດຖານທີ່ສາກົນວາງໄວ້, ມາດຖານຄວາມບອກບາງທາງເສດຖະກິດແມ່ນຮອດປີ 2024 ຈຶ່ງຈະຕີລາຄາວ່າບັນລຸໄດ້ຫຼືບໍ່, ແຕ່ໃນສະພາບຄວາມຫຍຸ້ງຍາກອັນໜັກໜ່ວງດ້ານເສດຖະກິດ - ການເງິນ ທີ່ພວກເຮົາປະເຊີນຢູ່ກໍບົ່ງບອກວ່າພວກເຮົາຍັງຕ້ອງໃຊ້ເວລາ ແລະ ຄວາມທຸ້ມເທຫຼາຍຢ່າງຈິ່ງຈະບັນລຸໄດ້ຕາມມາດຖານທີ່ກຳນົດ. ສ່ວນການ "ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ" ແມ່ນການຢືນຢັນອຸດົມການຂອງພັກ ຢ່າງສະເໝີຕົ້ນສະເໝີປາຍ, ຖືເປັນເປົ້າໝາຍອັນຍາວນານ ທີ່ຕ້ອງໄດ້ສືບຕໍ່ຍຶດໝັ້ນ ແລະ ສູ້ຊົນຕໍ່ໄປ.

# ການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ

ປະຕິບັດຕາມຈິດໃຈຊີ້ນໍາ ແລະ ການຕົກລົງຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ກໍຄື ຄໍາສັ່ງກ່ຽວກັບການຈັດຕັ້ງເຊື່ອມຊຸມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ກະກຽມເນື້ອໃນເອກະສານເຊື່ອມຊຶມມະຕິ XI ເພື່ອໃຫ້ບັນດາສະຫາຍສູນກາງ, ພະນັກງານນໍາພາຫຼັກແຫຼ່ງກໍາໄດ້ເນື້ອໃນຈິດໃຈຕົ້ນຕໍ, ມີຄວາມເຂົ້າໃຈເປັນເອກະພາບ ເພື່ອສືບຕໍ່ນໍາພາຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XI ເຂົ້າສູ່ວຽກງານຕົວຈິງຂອງຕົນ, ເຊິ່ງມີເນື້ອໃນ ດັ່ງນີ້:

## I. ແນວຄິດຊີ້ນໍາລວມໃນການເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ.

**ຕ້ອງສ້າງການຫັນປ່ຽນໃໝ່ຢ່າງແຂງແຮງເລິກເຊິ່ງ ແລະ ຮອບດ້ານ** ໃນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກເຂົ້າສູ່ຊີວິດສັງຄົມຕົວຈິງ, ແນໃສ່ໃຫ້ການນໍາແຕ່ລະຂັ້ນ ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ກໍາແໜ້ນເນື້ອໃນຂອງມະຕິ XI ຂອງພັກ, ໂດຍສະເພາະແມ່ນເນື້ອໃນທີ່ສໍາຄັນຕົ້ນຕໍ ແລະ ວຽກງານຈຸດສຸມທີ່ຕ້ອງເອົາໃຈໃສ່ນໍາພາ - ຊີ້ນໍາ ໃນແຕ່ລະຂົງເຂດວຽກງານ ຕາມຄວາມຮັບຜິດຊອບຂອງຕົນ

ຕິດພັນກັບການເສີມຂະຫຍາຍຄວາມເປັນເຈົ້າການ ຂອງບັນດາກະຊວງ - ອົງການ, ບັນດາແຂວງ, ນະຄອນຫຼວງ ກໍຄື ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ໃນການຫັນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກໍາລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ເກີດໝາກເກີດຜົນຕົວຈິງ. ພ້ອມນັ້ນ ຕ້ອງເພີ່ມທະວີການນໍາພາ - ຊີ້ນໍາ ຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ໃນການຈັດຕັ້ງຜັນຂະຫຍາຍມະຕິ XI ຂອງພັກ ໃຫ້ແທດເຖິງຕົວຈິງ ແລະ ສາມາດສ້າງໄດ້ຜົນສໍາເລັດໃໝ່ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນໄລຍະໃໝ່.

ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ພາຍໃຕ້ຄໍາຂວັນ: **"ຍົກສູງຄວາມສາມາດນໍາພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນໃນຊາດ, ຮັບປະກັນສະຖຽນລະພາບດ້ານການເມືອງ ຢ່າງໜັກແໜ້ນ, ຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນການພັດທະນາເສດຖະກິດ ສັງຄົມໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ, ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ສືບຕໍ່ນໍາພາປະເທດຊາດ ພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ"**, ຖືເປັນແນວຄິດຊີ້ນໍາທີ່ສ່ອງແສງ ແລະ ຊີ້ບອກຢ່າງກວມລວມ ໃຫ້ແກ່ການນໍາພາຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຕະຫຼອດສະໄໝທີ XI ຂອງພັກ.

**II. ເນື້ອໃນສຳຄັນທີ່ຕ້ອງກຳແໜ້ນ.**

**1. ຕີລາຄາໝາກຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ປະເມີນຜົນກວມລວມການສ້າງບັນດາປະຖົມປັດໄຈ ໃຫ້ແກ່ການກ້າວຂຶ້ນສູ່ສັງຄົມນິຍົມຕາມແນວທາງປ່ຽນແປງໃໝ່.**

**1.1. ຕີລາຄາໝາກຜົນ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ.**

ໃນໄລຍະ 5 ປີຜ່ານມາ, ຄວາມຂັດແຍ່ງອັນເລິກເຊິ່ງ ລະຫວ່າງປະເທດໃຫຍ່ບວກກັບການລະບາດຂອງເຊື້ອພະຍາດໂຄວິດ - 19 ໃນທົ່ວໂລກ ໄດ້ເຮັດໃຫ້ສະພາບການສາກົນທີ່ຜັນແປຕະຫຼອດເວລາຢູ່ແລ້ວນັ້ນໄດ້ທະວີຄວາມເຄັ່ງຕຶງຢ່າງຕໍ່ເນື່ອງ ແລະ ຍິ່ງເພີ່ມຄວາມສັບສົນ, ທັງສົ່ງຜົນກະທົບໂດຍກົງ ຫຼື ສ້າງປັດໄຈສ່ຽງຕໍ່ເສດຖະກິດ, ການເມືອງ, ຄວາມໝັ້ນຄົງຂອງຊາດ ແລະ ສຸຂະພາບຂອງຄົນໃນໂລກ. ຢູ່ພາຍໃນປະເທດ ກໍໄດ້ປະເຊີນໜ້າກັບຄວາມຫຍຸ້ງຍາກດ້ານເສດຖະກິດ, ງົບປະມານ - ການເງິນ, ບັນຫາໜີ້ສິນ, ໄພທຳມະຊາດ ແລະ ການລະບາດຂອງພະຍາດໂຄວິດ - 19. ສະພາບດັ່ງກ່າວ ໄດ້ເປັນອຸປະສັກໃຫຍ່ຫຼວງ ແລະ ກາຍເປັນສິ່ງທ້າທາຍຕໍ່ການຈັດຕັ້ງປະຕິບັດບັນດາຄາດໝາຍ ທີ່ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກວາງອອກ.

ເຖິງຢ່າງໃດກໍຕາມ ພັກເຮົາໄດ້ນຳພາສ້າງພື້ນຖານ ແລະ ບັນດາປັດໄຈຕົວຈິງທີ່ສຳຄັນໃຫ້ແກ່ການແກ້ໄຂຄວາມຫຍຸ້ງຍາກຕ່າງໆ ທີ່ເກີດຂຶ້ນລວມທັງສ້າງຄວາມອາດສາມາດຫຼາຍດ້ານ ເພື່ອເຮັດໃຫ້ເສດຖະກິດ - ສັງຄົມ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ເຊິ່ງອັນພົ້ນເດັ່ນແມ່ນ:

① ສາມາດຮັບປະກັນໃຫ້ປະເທດຊາດມີສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ; ຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະ ໝາກຜົນຂອງການປະຕິວັດໄດ້ຮັບການປົກປ້ອງຢ່າງເຂັ້ມແຂງ.

② ແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ສືບຕໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ຕິດພັນກັບການຈັດຕັ້ງປະຕິບັດແຜນຍຸດທະສາດ ກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກຂອງປະຊາຊົນຕາມ 4 ເນື້ອໃນ 4 ຄາດໝາຍຢູ່ເຂດຈຸດສຸມຕ່າງໆ ໃນຂອບເຂດປະເທດ.

③ ໃນການພັດທະນາເສດຖະກິດ, ເຖິງຈະປະເຊີນກັບຄວາມຫຍຸ້ງຍາກອັນໜັກໜ່ວງດ້ານການເງິນ - ເງິນຕາ ແລະ ບັນຫາໜີ້ສິນທີ່ສະສົມມາຍາວນານ ບວກກັບຜົນກະທົບໜັກໜ່ວງຈາກການລະບາດ ຂອງພະຍາດໂຄວິດ - 19, ແຕ່ພວກເຮົາ ກໍສາມາດຢັບຢັ້ງການເກີດວິກິດການຮ້າຍແຮງດ້ານເສດຖະກິດ, ທັງສາມາດຮັກສາການເຕີບໂຕ ໂດຍສະເລ່ຍ 5,8 %, ລາຍຮັບສະເລ່ຍຕໍ່ຫົວຄົນບັນລຸ 2.664 ໂດລາສະຫະລັດ, ທຽບໃສ່ປີ 2015 ເພີ່ມຂຶ້ນ 694 ໂດລາສະຫະລັດ.

④ ການພັດທະນາໃນຂົງເຂດວັດທະນະທຳ - ສັງຄົມ ນັບແຕ່ເມືອງຮອດຊົນນະບົດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ, ໃນນັ້ນພວກເຮົາສາມາດບັນລຸດັດຊະນີ ການພັດທະນາຊັບພະຍາກອນມະນຸດຂອງບັນດາປະເທດ ທີ່ພົ້ນຈາກສະຖານະພາບດ້ອຍພັດທະນາ; ການແກ້ໄຂຄວາມທຸກຍາກຂອງປະຊາຊົນມີຄວາມຄືບໜ້າ ແລະ ຫຼຸດລົງຢ່າງຕໍ່ເນື່ອງ.

⑤ ບັນດາອົງການອຳນາດລັດ ລ້ວນແຕ່ໄດ້ຮັບການປັບປຸງດ້ານການຈັດຕັ້ງ, ຍົກລະດັບຄຸນນະພາບການເຄື່ອນໄຫວ ຄຽງຄູ່ກັບການສ້າງ, ປັບປຸງກົດໝາຍ ແລະ ບັນດານິຕິກຳ ໃຫ້ເປັນລະບົບຮັດກຸມກວ່າເກົ່າ, ສ້າງພື້ນຖານອັນເຂັ້ມແຂງ ໃຫ້ແກ່ການຫັນສູ່ການຄຸ້ມຄອງລັດຕາມກົດໝາຍ ແລະ ເປັນການຈັດຕັ້ງປະຕິບັດຕົວຈິງ ທີ່ສອດຄ່ອງກັບເປົ້າໝາຍສ້າງລັດປະຊາທິປະໄຕປະຊາຊົນ ເປັນລັດທີ່ປົກຄອງດ້ວຍກົດໝາຍ.

⑥ ວຽກງານແນວໂຮມ ແລະ ວຽກງານມະຫາຊົນຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງຕໍ່ເນື່ອງ ແລະ ໄດ້ປັບປຸງເນື້ອໃນການເຄື່ອນໄຫວໃຫ້ມີຈຸດສຸມກວ່າເກົ່າ, ສາມາດຍົກລະດັບຄຸນນະພາບການປະຕິບັດພາລະບົດບາດຂອງຕົນດີຂຶ້ນ.

⑦ ມິດຕະພາບ ແລະ ການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດຂະຫຍາຍຕົວສູ່ລະດັບສູງອັນໃໝ່. ພ້ອມນັ້ນຍັງສືບຕໍ່ເປີດກວ້າງ ການຮ່ວມມືສາກົນຫຼາກຫຼາຍຮູບແບບ ແລະ ຫຼາຍລະດັບ ບົນພື້ນຖານຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື, ປະກອບສ່ວນສຳຄັນເຂົ້າໃນການປົກປັກຮັກສາສັນຕິພາບ, ການຮ່ວມມືພັດທະນາຢູ່ພາກພື້ນ ແລະ ສາກົນ.

⑧ ວຽກງານກໍ່ສ້າງພັກ ແລະ ວຽກງານພະນັກງານໄດ້ຮັບການເອົາໃຈໃສ່ຄົ້ນຄວ້າປັບປຸງ ແລະ ຍົກລະດັບຢ່າງຕໍ່ເນື່ອງ, ໃນນັ້ນດຳເນີນຊີວິດການເມືອງປັບປຸງປົວແປງທົ່ວພັກຢ່າງແຂງແຮງ ແລະ ເລິກເຊິ່ງ, ສ້າງຄວາມເຂົ້າໃຈເອກະພາບສູງຂຶ້ນກວ່າເກົ່າ ຕໍ່ສະພາບເປັນຈິງ ແລະ ການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນຢູ່ພາຍໃນພັກ ແລະ ໃນສັງຄົມ.

ຢືນຢູ່ບົນຈິດໃຈກ້າຫານເບິ່ງບັນຫາ, ກ້າຮັບເອົາຄວາມຈິງ ແລະ ກ້າປ່ຽນແປງຕົນເອງ, ໃນຖານະພັກປະຕິວັດ ພັກເຮົາກໍຮັບຮູ້ວ່າໃນການນໍາພາຂອງຕົນ ຍັງມີຂໍ້ຄົງຄ້າງ ທີ່ຕ້ອງໄດ້ປັບປຸງແກ້ໄຂໃຫ້ເລິກເຊິ່ງເຖິງຖອງຄື:

① ການສ້າງເຫງົ້າພະລັງແຮງເຂົ້າຮ່ວມວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ຍັງບໍ່ທັນນກວ້າງຂວາງ, ເລິກເຊິ່ງ, ເຮັດໃຫ້ການສະກັດກັ້ນ ກໍຄືການແກ້ໄຂບັນຫາຫຍໍ້ທໍ້ໃນສັງຄົມບໍ່ທັນໄດ້ດີເຊັ່ນ: ການແກ້ໄຂບັນຫາຢາເສບຕິດ, ການຄ້າມະນຸດ, ອຸປະຕິເຫດຕາມທ້ອງຖະໜົນ, ການຄຸ້ມຄອງການນໍາໃຊ້ສື່ສັງຄົມອອນລາຍ.

② ຍັງບໍ່ທັນສາມາດສ້າງການຫັນປ່ຽນອັນແຂງແຮງ, ເລິກເຊິ່ງເທົ່າທີ່ຄວນ ໃນການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ - ການເງິນ, ບັນຫາໜີ້ສິນ, ຄວາມອຶດອາດຊັກຊ້າ, ຂອດບໍລິຫານລັດທີ່ຄຸມເຄືອ.

③ ບັນດາຄວາມອາດສາມາດ ແລະ ທ່າແຮງບົ່ມຊ້ອນດ້ານຊັບພະຍາກອນທໍາມະຊາດ ແລະ ທ່າໄດ້ປຽບດ້ານທີ່ຕັ້ງພູມສາດຂອງປະເທດບໍ່ທັນໄດ້ມີການເສີມຂະຫຍາຍຢ່າງເປັນຮູບປະທໍາ ແລະ ແຂງແຮງ.

④ ກົງຈັກແຕ່ລະຂັ້ນຍັງສືບຕໍ່ໃຫຍ່ໂຕ, ມີຫຼາຍຂັ້ນຂອດ, ການແບ່ງຂັ້ນຄຸ້ມຄອງລັດຕາມທິດມອບຄວາມຮັບຜິດຊອບ ແລະ ເສີມຂະຫຍາຍຄວາມເປັນເຈົ້າການປະດິດສ້າງໃຫ້ແກ່ທ້ອງຖິ່ນ ຍັງບໍ່ທັນໄດ້ຮັບການປະຕິບັດຢ່າງເປັນລະບົບ.

⑤ ການເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດ ແລະ ມານະຈິດປະຕິວັດຂອງຖັນແຖວສະມາຊິກພັກ - ພະນັກງານ ພວມເປັນໄພອັນຕະລາຍຕໍ່ບົດບາດການນໍາພາຂອງພັກ ແລະ ຕໍ່ລະບອບໃໝ່ ເຊິ່ງ

ກາຍເປັນສິ່ງທ້າທາຍຕໍ່ຄວາມສາມາດຂອງພັກເຮົາ ໃນການນໍາພາແກ້ໄຂບັນຫາຫຍໍ້ທໍ້ຢູ່ພາຍໃນພັກ ແລະ ໃນສັງຄົມ.

**ບັນດາຂໍ້ຄົງຄ້າງ ເກີດມາຈາກຫຼາຍສາຍເຫດ, ແຕ່ອັນຕົ້ນຕໍແມ່ນຍ້ອນ:**

① ພະນັກງານນໍາພາ - ຄຸ້ມຄອງ ທີ່ເປັນຫຼັກແຫຼ່ງຢູ່ແຕ່ລະຂັ້ນຈໍານວນບໍ່ໜ້ອຍ ຍັງຂາດຄວາມສະຖຸ້ງໄວຕໍ່ການປ່ຽນແປງ ແລະ ຄວາມເລິ່ງທວງຂອງສະພາບການ, ທັງຂາດການນໍາພາ - ຊີ້ນໍາ - ບັນຊາຕົວຈິງທີ່ຕໍ່ເນື່ອງ, ຍິ່ງກວ່ານັ້ນຈໍານວນໜຶ່ງບໍ່ກ້າປ່ຽນໄປສູ່ອັນໃໝ່, ຂາດຄວາມເປັນເຈົ້າການບຸກເບີກ, ປະດິດສ້າງໃນການແກ້ໄຂບັນຫາທີ່ເກີດຂຶ້ນ.

② ຄວາມຫຍຸ້ງຍາກສ່ວນໃຫຍ່ ເປັນບັນຫາທີ່ສະສົມຍາວນານ, ມີຄວາມສະຫຼັບສັບຊ້ອນ ແລະ ຝັ່ງເລິກໃນຫຼາຍຂົງເຂດ ເຊິ່ງຍັງຕ້ອງມີເວລາອັນແນ່ນອນ ເພື່ອສ້າງການຫັນປ່ຽນ.

③ ການຕິຊົມຕົນເອງ ແລະ ຕິຊົມກັນພາຍໃນພັກຢູ່ຫຼາຍບ່ອນຍັງອ່ອນແອ.

④ ການລະບາດຂອງພະຍາດໂຄວິດ - 19 ໄດ້ເຮັດໃຫ້ສູນເສຍເງື່ອນໄຂ ແລະ ສະພາບແວດລ້ອມອັນປົກກະຕິ ເຊິ່ງສົ່ງຜົນທາງລົບຢ່າງຫຼວງຫຼາຍຕໍ່ຄວາມສາມາດບັນລຸບັນດາເປົ້າໝາຍ ທີ່ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກວາງອອກ.

**1.2. ປະເມີນຜົນກວມລວມການສ້າງບັນດາປະຖົມປັດໄຈໃຫ້ແກ່ການກ້າວຂຶ້ນສູ່ສັງຄົມນິຍົມຕາມແນວທາງປ່ຽນແປງໃໝ່:** ການສ້າງປະຖົມປັດໄຈໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມຕາມແນວທາງປ່ຽນແປງໃໝ່ ທີ່ພັກເຮົາວາງອອກ ແມ່ນເນື້ອໃນພື້ນຖານຂອງການສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ, ເຊິ່ງປະກອບມີ: ① ສ້າງ ແລະ

ປັບປຸງພັກໃຫ້ມີຄວາມປອດໃສ ແລະ ໜັກແໜ້ນເຂັ້ມແຂງ; ② ສ້າງ ແລະ ປັບປຸງອໍານາດການປົກຄອງປະຕິວັດ ໃຫ້ສາມາດເຮັດຫຼ້ອນໜ້າທີ່; ③ ສ້າງພື້ນຖານວັດຖຸ - ເຕັກນິກ ແລະ ສ້າງເສດຖະກິດແຫ່ງຊາດ ໃຫ້ນັບມື້ຂະຫຍາຍຕົວ; ④ ສ້າງລະບົບຄຸ້ມຄອງລັດ ໃຫ້ມີຄວາມສັກສິດ; ⑤ ສ້າງລະບົບກົດໝາຍ ໃຫ້ນັບມື້ນັບຄົບຖ້ວນສົມບູນ; ⑥ ສ້າງຄວາມສາມັກຄີປອງດອງ ລະຫວ່າງປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ; ⑦ ພັດທະນາຊັບພະຍາກອນມະນຸດ ໃຫ້ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາປະເທດຊາດ; ⑧ ສ້າງກໍາລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານໃຫ້ເຂັ້ມແຂງ; ແລະ ⑨ ສ້າງສະພາບແວດລ້ອມທີ່ດີໃນການພົວພັນຮ່ວມມືກັບພາຍນອກ ເພື່ອເອື້ອອໍານວຍໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ. ຜ່ານການດໍາເນີນການຕົວຈິງ ຈົນເຖິງປະຈຸບັນ, ພວກເຮົາສາມາດຍາດໄດ້ບັນດາຜົນສໍາເລັດອັນເປັນພື້ນຖານ ໄດ້ເຮັດໃຫ້ພາລະກິດປະຕິວັດຢູ່ປະເທດເຮົາ ສາມາດຢຶດໝັ້ນບັນດາຫຼັກການພື້ນຖານຂອງພາລະກິດປ່ຽນແປງໃໝ່ທີ່ພັກວາງອອກ, ສືບຕໍ່ພາປະເທດຊາດກ້າວເດີນຕາມເສັ້ນທາງ ແລະ ຈຸດໝາຍສັງຄົມນິຍົມ. ແຕ່ພ້ອມກັນນັ້ນກໍມີຫຼາຍດ້ານທີ່ຍັງຕ້ອງປັບປຸງແກ້ໄຂ ເຊິ່ງມີຄວາມຈໍາເປັນຕ້ອງສືບຕໍ່ຄົ້ນຄວ້າ, ກໍາແໜ້ນ ແລະ ພິຈາລະນາຢ່າງເປັນລະບົບ ເພື່ອເປັນພື້ນຖານໃນການກໍານົດທິດທາງ, ໜ້າທີ່ໃຫຍ່ໆໃນຊຸມປີຕໍ່ໜ້າ ກໍຄືເພື່ອບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ.

### 1.3. ບົດຮຽນທີ່ຖອດຖອນໄດ້.

ພັກເຮົາມີຄວາມຮັບຜິດຊອບໂດຍກົງ ຕໍ່ຊະຕາກໍາຂອງປະເທດຊາດ ມີຄວາມຈໍາເປັນຕ້ອງກໍາແໜ້ນບົດຮຽນ ຈາກການເຄື່ອນໄຫວນໍາພາ

ຜ່ານມາ, ເຊິ່ງໃນແຕ່ລະໄລຍະ ກໍໄດ້ສະສົມບົດຮຽນອັນອຸດົມສົມບູນ ເພື່ອເປັນບ່ອນອີງສຳຄັນໃນການນຳພາ ແລະ ປັບປຸງຕົນເອງ, ໃນກອງປະຊຸມໃຫຍ່ເທື່ອນີ້ຖອດໄດ້ 4 ບົດຮຽນໃຫຍ່ ດັ່ງນີ້:

① ເພື່ອຍົກລະດັບຄວາມສາມາດ ແລະ ຄຸນນະພາບການນຳພາພັກເຮົາ ຈຳເປັນຕ້ອງແກ້ໄຂບັນຫາສອງດ້ານພ້ອມກັນ ນັ້ນແມ່ນຮັບປະກັນການກຳນົດເນື້ອໃນໜ້າທີ່ການເມືອງໃຫ້ຖືກຕ້ອງ, ແທດຕົວຈິງ ແລະ ມີຄວາມເປັນໄປໄດ້ໃນທາງປະຕິບັດ ຄຽງຄູ່ກັບການແກ້ໄຂບັນຫາດ້ານການຈັດຕັ້ງ, ບຸກຄະລາກອນ, ແບບແຜນການນຳພາຊີ້ນຳ ແລະ ການຄຸ້ມຄອງດ້ານລະບຽບວິໄນ.

② ໃນການພັດທະນາເສດຖະກິດ ຕ້ອງມີການສົມທົບແໜ້ນລະຫວ່າງການຂະຫຍາຍພື້ນຖານການຜະລິດ ແລະ ບໍລິການຂະໜາດໃຫຍ່ຢ່າງມີຈຸດສຸມ, ສ້າງເປັນຂະແໜງການ ແລະ ຜະລິດຕະພັນປາຍແຫຼມກັບການຮັບປະກັນ ໃຫ້ການປະກອບອາຊີບຂອງຊາວຊົນນະບົດມີການພັດທະນາ ທີ່ເລີ່ມຈາກສ້າງຄວາມສາມາດເພິ່ງຕົນເອງ ແລະ ເປັນເຈົ້າຕົນເອງ, ມີກິນມີໃຊ້ ແລະ ແກ້ໄຂສະພາບການຫຼຸດໂຕນແບບບໍ່ຍຸຕິທຳໃນສັງຄົມ.

③ ຕ້ອງຮັບປະກັນການພັດທະນາຊັບພະຍາກອນມະນຸດ, ດ້ານໜຶ່ງສະໜອງຄວາມຕ້ອງການ ທັງສ້າງເປັນກຳລັງຂັບເຄື່ອນໃຫ້ແກ່ການພັດທະນາດ້ານເສດຖະກິດ - ສັງຄົມ ແລະ ດ້ານໜຶ່ງອີກແມ່ນການປົກປ້ອງ, ເສີມຂະຫຍາຍສິດ, ຜົນປະໂຫຍດຂອງພົນລະເມືອງ, ຄຸນຄ່າຄວາມເປັນມະນຸດ ແລະ ຄວາມສີວິໄລດ້ານຈິດໃຈຂອງຄົນລາວ.

④ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບັນດາມະຕິ, ຄຳສັ່ງຂອງພັກ ແລະ ແຜນການ, ໂຄງການພັດທະນາຂອງລັດຢູ່ແຕ່

ລະຂັ້ນ ຕ້ອງປົນພື້ນຖານການສົມທົບລະຫວ່າງ ຮັບປະກັນການຕົກລົງບັນຫາຕົວຈິງແບບໝູ່ຄະນະຢ່າງເຂັ້ມງວດ ກັບການເຊີດຊູບົດບາດນໍາພາຊີ້ນໍາ - ບັນຊາ ຢູ່ທົ່ວແຖວອັນເຂັ້ມແຂງ ຂອງຜູ້ເປັນຫົວໜ້າຢູ່ແຕ່ລະບ່ອນ, ເຮັດໃຫ້ທຸກຂະບວນການ ໄດ້ຮັບການກະຕຸ້ນ ແລະ ຂັບເຄື່ອນໃຫ້ຖືກທິດ, ຕໍ່ເນື່ອງ, ແຂງແຮງ ແລະ ກ້າວສູ່ເປົ້າໝາຍທີ່ວາງອອກ.

**2. ການເລັ່ງທວງ ແລະ ທິດທາງພື້ນຖານໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ສົມບູນຍິ່ງຂຶ້ນ, ສ້າງການຫັນປ່ຽນແຂງແຮງເລິກເຊິ່ງ ແລະ ຮອບດ້ານເພື່ອກ້າວເດີນສູ່ຈຸດໝາຍສັງຄົມນິຍົມ.**

**2.1. ຍຶດໝັ້ນຫັດສະນະພື້ນຖານ ແລະ ກໍາແໜ້ນການເລັ່ງທວງຕໍ່ການບູລະນະລະບອບປະຊາທິປະໄຕປະຊາຊົນ ໃນໄລຍະໃໝ່.**

ໂດຍຍຶດໝັ້ນຢ່າງສະເໝີຕົ້ນສະເໝີປາຍ ແລະ ດ້ວຍຄວາມຈິງຮັກພັກດີຕໍ່ອຸດົມການ ແລະ ວັດຖຸປະສົງອັນສູງສົ່ງ ໃນການນໍາພາປະເທດຊາດກ້າວເດີນສູ່ຈຸດໝາຍສັງຄົມນິຍົມນັ້ນ, ພັກເຮົາຍິ່ງຕ້ອງສືບຕໍ່ນໍາພາບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ ໂດຍຖືເອົາການເຄົາລົບ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ອີງໃສ່ກໍາລັງແຮງຂອງປະຊາຊົນ ເພື່ອປະຕິບັດ ແລະ ຖືການນໍາເອົາຜົນປະໂຫຍດ ແລະ ຄວາມສົມບູນພູນສຸກ ມາໃຫ້ປະຊາຊົນເປັນເປົ້າໝາຍສູງສຸດໃນທຸກການເຄື່ອນໄຫວຂອງຕົນ. ແຕ່ຕ້ອງເອກະພາບກັນວ່າ: ປະເທດຊາດພວມຢືນຢູ່ຕໍ່ໜ້າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍອັນໃຫຍ່ຫຼວງ, ແຕ່ພ້ອມນັ້ນກໍມີທັງໂອກາດ ແລະ ຄວາມອາດສາມາດໃໝ່ຫຼາຍດ້ານ ທີ່ສາມາດເສີມຂະຫຍາຍເຂົ້າໃນການພັດທະນາ. ດ້ວຍເຫດນັ້ນພວກເຮົາຕ້ອງກໍາແໜ້ນການເລັ່ງທວງໃນການພັດທະນາປະເທດຊາດໃນຊຸມປີຕໍ່ໜ້າຄື:

① ຕ້ອງຖືເອົາການແກ້ໄຂຄວາມທຸກຍາກຂອງປະຊາຊົນ ເປັນໜ້າທີ່ຈຸດສຸມ ບົນພື້ນຖານການປຸກສະຕິຕື່ນຕົວເພິ່ງຕົນເອງ, ເປັນເຈົ້າຕົນເອງ ແລະ ບົນຕົວຂຶ້ນສ້າງຄວາມເຂັ້ມແຂງດ້ວຍຕົນເອງ ຂອງປະຊາຊົນ ແລະ ຊັ້ນຄົນຕ່າງໆ ໃນທົ່ວປະເທດ.

② ຕ້ອງຕັ້ງໜ້າແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງໃນການພັດທະນາເສດຖະກິດ - ສັງຄົມ ທີ່ມີລັກສະນະຊໍ້າເຮື້ອໃນຜ່ານມາໂດຍເລີ່ມແຕ່ການຫັນປ່ຽນດ້ານຈິນຕະນາການດ້ານທິດສະດີ, ຍົກລະດັບຄວາມສາມາດໃນການຮູ້ສະພາບການພາຍໃນ ແລະ ສາກົນຈົນເຖິງການຕັດສິນໃຈແກ້ບັນຫາດ້ານໂຄງສ້າງເສດຖະກິດ, ການປັບປຸງກົນໄກຄຸ້ມຄອງລັດໃນແຕ່ລະດ້ານ, ແກ້ບັນຫາຫຍໍ້ທໍ້ໃນພັກ ແລະ ໃນສັງຄົມ.

③ ຕ້ອງນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ, ນະວັດຕະກໍາຢ່າງກວ້າງຂວາງ ໂດຍຕິດພັນກັບການພັດທະນາຊັບພະຍາກອນມະນຸດ ທີ່ມີຄຸນນະພາບສູງ, ໂດຍສະເພາະໃນຂົງເຂດວິສະວະກໍາ, ຕ້ອງຫັນປ່ຽນຢ່າງແຂງແຮງຈາກສະພາວະທີ່ເປັນຢູ່ໃນປະຈຸບັນ ໂດຍຕິດພັນກັບການປັບປຸງ ບັນດາແຜນນະໂຍບາຍອັນເປັນພື້ນຖານ ກ່ຽວກັບການພັດທະນາຢ່າງເປັນລະບົບ, ຖືການຄົ້ນຄວ້າ, ເຜີຍແຜ່ ແລະ ນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກໍາ ອັນເໝາະສົມເປັນມາດຕະຖານ ແລະ ເງື່ອນໄຂທີ່ຂາດບໍ່ໄດ້ ໃນການກໍານົດແຜນຍຸດທະສາດພັດທະນາໃນຊຸມປີຕໍ່ໜ້າ.

④ ຕ້ອງຍົກລະດັບຄວາມເປັນເຈົ້າການ ເຂົ້າຮ່ວມການຕໍ່ສູ້ເພື່ອສັນຕິພາບ, ຄວາມໝັ້ນຄົງ; ການຮັບມືກັບໂລກລະບາດ, ການປ່ຽນແປງດິນຟ້າອາກາດ ແລະ ການແກ້ໄຂບັນຫາອາດຊະຍາກໍາຂ້າມຊາດ ຄຽງຄູ່

ກັບການຮັບປະກັນເອກະລາດ, ອຳນາດອະທິປະໄຕ, ລະບອບການເມືອງຂອງປະເທດຊາດ; ຕ້ອງຮັບປະກັນ ການສົມທົບລະຫວ່າງການເພີ່ມທະວີຮັດແໜ້ນມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດກັບການສືບຕໍ່ປະຕິບັດທິດການເຊື່ອມຈອດ ແລະ ເຊື່ອມໂຍງສາກົນ, ສ້າງເງື່ອນໄຂຍາດແຍ່ງ, ດຶງດູດກຳລັງແຮງ ດ້ານທຶນຮອນ, ເຕັກໂນໂລຊີ, ນະວັດຕະກຳເພື່ອຂຸດຄົ້ນ ແລະ ເສີມຂະຫຍາຍຄວາມອາດສາມາດບົ່ມຊ້ອນ ແລະ ກຳລັງແຮງຂອງຊາດ.

⑤ ຕ້ອງຍົກສູງຄວາມເປັນເຈົ້າການ ໃນການກະກຽມຄວາມພ້ອມດ້ານຕ່າງໆ ເພື່ອຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ- 19 ທີ່ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກໍຄືແຜນພັດທະນາເສດຖະກິດ - ສັງຄົມ ໃນຊຸມປີຕໍ່ໜ້າ.

**2.2. ທິດທາງພື້ນຖານໃນການສືບຕໍ່ ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ, ສ້າງການຫັນປ່ຽນແຂງແຮງເລິກ ເຊິ່ງ ແລະ ຮອບດ້ານ.**

ທິດທາງຕົ້ນຕໍທັງເປັນເປົ້າໝາຍໃຈກາງ ຂອງການບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ **ແມ່ນຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນໜ້າທີ່ພື້ນຖານ ແລະ ຕ້ອງປະຕິບັດຢ່າງເປັນປະຈຳ; ການພັດທະນາເສດຖະກິດ ລວມທັງການແກ້ໄຂຄວາມຫຍຸ້ງຍາກດ້ານການເງິນ ແລະ ໜີ້ສິນເປັນໜ້າທີ່ໃຈກາງ, ການພັດທະນາຊັບພະຍາກອນມະນຸດ ແລະ ສະໜອງແຮງງານມີສີມື ໃຫ້ທັນບັນດາບັນຫາໂຄງການພັດທະນາ ໃນຂົງເຂດຕ່າງໆ ເປັນໜ້າທີ່ແຖວໜ້າ; ການປັບປຸງຄຸນນະພາບຂອງວຽກງານພັກ - ພະນັກງານ ເປັນອັນຕັດສິນ.**

## 2.3. ທິດທາງລວມຮອດປີ 2025.

① ສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຢ່າງແຂງແຮງ ຕິດພັນກັບການກໍ່ສ້າງຮາກຖານການເມືອງ ຕາມ 4 ເນື້ອໃນ 4 ຄາດໝາຍ ໃຫ້ໜັກແໜ້ນ, ຮັບປະກັນສະຖຽນລະພາບ ຄວາມໝັ້ນຄົງທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຄວາມສະຫງົບສຸກ ແລະ ປອດໄພຂອງປະຊາຊົນ.

② ຕັ້ງໜ້າແກ້ໄຂຄວາມຫຍຸ້ງຍາກດ້ານການເງິນ - ເງິນຕາ ແລະ ໜີ້ສິນສາທາລະນະ ຕິດພັນກັບການຍູ້ແຮງການພັດທະນາເສດຖະກິດ - ສັງຄົມ ໂດຍຂຸດຄົ້ນຄວາມອາດສາມາດ ແລະ ທ່າແຮງບົ່ມຊ້ອນຂອງຊາດ ຮັບປະກັນການພັດທະນາຕາມທິດຍົກລະດັບຄຸນນະພາບ, ມີຈຸດສຸມ, ສີຂຽວ ແລະ ຍືນຍົງ; ສູ້ຊົນບັນລຸຈັງຫວະການຂະຫຍາຍຕົວ ຂອງຜະລິດຕະພັນລວມພາຍໃນ (GDP) 4% ຕໍ່ປີຂຶ້ນໄປ.

③ ເພີ່ມທະວີການແກ້ໄຂບັນດາປັດໄຈພື້ນຖານ ດ້ານວັດທະນະທຳ-ສັງຄົມ ໃຫ້ມີລັກສະນະສົມສ່ວນກົມກຽວ, ສະເໝີພາບ, ຍຸຕິທຳ ແລະ ສີວິໄລ; ປະຊາຊົນພົ້ນຈາກຄວາມທຸກຍາກ ໂດຍພື້ນຖານ, ປະເທດຊາດພົ້ນຈາກສະຖານະພາບດ້ອຍພັດທະນາຢ່າງໜັກແໜ້ນ.

④ ປັບປຸງ, ບູລະນະລະບົບການເມືອງ ປະຊາທິປະໄຕປະຊາຊົນ ທີ່ພັກເປັນແກນນຳໃຫ້ມີຄວາມເຂັ້ມແຂງ, ໄປຄຽງຄູ່ກັບເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ຢ່າງແຂງແຮງ. ສູ້ຊົນປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ; ບູລະນະລະບົບອຳນາດລັດ ໃຫ້ເຂັ້ມແຂງ ແລະ ເຄື່ອນໄຫວໂປ່ງໃສ, ມີປະສິດທິພາບ; ປັບປຸງດ້ານການຈັດຕັ້ງ, ເນື້ອໃນ ແລະ ດ້ານແບບແຜນການເຄື່ອນໄຫວຂອງແນວ

ລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນຂອງພັກ ແລະ ອົງການຈັດຕັ້ງການ ເມືອງ - ສັງຄົມອື່ນໆ.

⑤ ຮັບປະກັນການເຄື່ອນໄຫວຕ່າງປະເທດ ຢ່າງເປັນເຈົ້າການ ແລະ ເປັນເຈົ້າຕົນເອງ ບົນພື້ນຖານຍຶດໝັ້ນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື, ເດັດດ່ຽວຕ້ານການແຊກແຊງຈາກພາຍນອກ ໃນທຸກຮູບແບບ ແລະ ຕັ້ງໜ້າເຂົ້າຮ່ວມຂະບວນການແກ້ໄຂບັນຫາຂັດແຍ່ງຕ່າງໆ ຢູ່ພາກພື້ນ ແລະ ໃນໂລກດ້ວຍສັນຕິວິທີ, ເອົາການທູດປ້ອງກັນເຫດເປັນຕົ້ນຕໍ, ຕໍ່ສູ້ເພື່ອຮັບປະກັນຜົນປະໂຫຍດຂອງທຸກຝ່າຍ ຢ່າງສົມເຫດສົມຜົນ.

**3. ວຽກງານຈຸດສຸມທີ່ຕ້ອງໄດ້ເອົາໃຈໃສ່ກຳແໜ້ນ ເພື່ອຈັດຕັ້ງຜັນຂະຫຍາຍເຂົ້າສູ່ຕົວຈິງ.**

**3.1. ຍົກລະດັບຄວາມສາມາດ ໃນການປົກປ້ອງອະທິປະໄຕ, ຮັກສາສະຖຽນລະພາບດ້ານການເມືອງ ແລະ ຄວາມສະຫງົບສຸກຂອງສັງຄົມ.**

- ເພີ່ມທະວີບົດບາດການນຳພາເດັດຂາດ, ໂດຍກົງ, ຮອບດ້ານຂອງພັກ ຕໍ່ກຳລັງປະກອບອາວຸດ.

- ສຸມໃສ່ສ້າງ ແລະ ປັບປຸງຕາໜ່າງປ້ອງກັນຊາດ - ປ້ອງກັນຄວາມສະຫງົບຢ່າງແຂງແຮງ, ສຶກສາອົບຮົມການເມືອງແນວຄິດ, ຍົກສູງສະຕິຮັກຊາດ, ສະຕິລະວັງຕົວຕໍ່ການເຄື່ອນໄຫວມ້າງເພຂອງອິດທິກຳລັງປໍລະປັກ, ກຳແໜ້ນການຜັນແປຂອງສະພາບການ.

- ສ້າງ, ປັບປຸງກໍາລັງໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ມີແບບແຜນທັນສະໄໝ, ເປັນກໍາລັງທີ່ຈິງຮັກພັກດີຕໍ່ປະຊາຊົນ, ຕໍ່ລະບອບໃໝ່.

- ຍົກລະດັບຄວາມສາມາດ ແລະ ຄວາມພ້ອມສູງໃນການປ້ອງກັນເຂດນໍ້າແດນດິນ, ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ.

- ຍົກສູງຄວາມສາມາດ ໃນການຕອບຕ້ານສົງຄາມທັນສະໄໝ, ສົງຄາມທັນປ່ຽນໂດຍສັນຕິ ແລະ ເປັນເຈົ້າການຮັບມືກັບບັນຫາໄພພິບັດຕ່າງໆ.

- ສ້າງພື້ນຖານອຸດສາຫະກໍາປ້ອງກັນຊາດທີ່ຈໍາເປັນຈໍານວນໜຶ່ງເພື່ອຮັບປະກັນໃຫ້ແກ່ການປະກອບອາວຸດ - ພາຫະນະເຕັກນິກທີ່ທັນສະໄໝໃຫ້ແກ່ກົມກອງ, ເຫຼົ່າຮົບ ໃນການເຄື່ອນໄຫວປະຕິບັດໜ້າທີ່ໃຫ້ມີຄວາມຊໍານິຊໍານານ.

- ປັບປຸງວຽກງານພາລະທິການ - ເຕັກນິກ ແລະ ລ້ຽງດູທັບຕາມທິດກຸ້ມຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງເທື່ອລະກ້າວ.

- ເພີ່ມທະວີວຽກງານສຶກສາປ້ອງກັນຊາດ - ປ້ອງກັນຄວາມສະຫງົບໃຫ້ເລິກເຊິ່ງ ແລະ ກວ້າງຂວາງແຕ່ສູນກາງລົງເຖິງທ້ອງຖິ່ນ, ຮາກຖານນັບທັງການສຶກສາທົ່ວໄປ, ເຮັດໃຫ້ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ກາຍເປັນສະຕິ ແລະ ຄວາມຮັບຜິດຊອບຂອງທຸກການຈັດຕັ້ງ ແລະ ທຸກຄົນຢ່າງແທ້ຈິງ.

- ຄົ້ນຄວ້າດ້ານຍຸດທະສາດ-ຍຸດທະບັ້ນຮົບ ແລະ ຈັດຕັ້ງຫັດແອບການທະຫານ, ຍົກລະດັບສິນລະປະຍຸດ - ຍຸດທະວິທີການທະຫານຂອງບັນດາເຫຼົ່າຮົບ.

- ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງຢ່າງແຂງແຮງ, ສ້າງທ່າສະໜາມ 3 ຂັ້ນ ຕິດພັນກັບການສ້າງບ້ານ - ກຸ່ມບ້ານພັດທະນາ ແລະ ວຽກງານ 3 ສ້າງ; ສະກັດກັ້ນ, ຕ້ານ ແລະ ແກ້ໄຂໜໍ່ແໜງກໍ່ຄວາມບໍ່ສະຫງົບໃຫ້ທັນເວລາ.

- ດຳເນີນການແກ້ໄຂບັນດາບັນຫາ ທີ່ເປັນພິດໄພໂດຍກົງຕໍ່ສັງຄົມ ຢ່າງເປັນລະບົບ ແລະ ມີປະສິດທິພາບ ໂດຍໃຫ້ມີການຫັນປ່ຽນກ້າວຂຶ້ນຢ່າງຈະແຈ້ງ.

## 3.2. ເສີມຂະຫຍາຍທຸກຄວາມອາດສາມາດ ແລະ ທ່າແຮງບົ່ມຊ້ອນ, ສ້າງຖານການຜະລິດ ແລະ ບໍລິການ ໃຫ້ເຂັ້ມແຂງ, ຮັບປະກັນການພັດທະນາແບບຍືນຍົງ ແລະ ເປັນເຈົ້າຕົນເອງ.

**① ຕັ້ງໜ້າພັດທະນາບັນດາທ່າແຮງບົ່ມຊ້ອນ ໃຫ້ເປັນຂະແໜງເສດຖະກິດປາຍແຫຼມ:** ບັນດາທ່າແຮງບົ່ມຊ້ອນດ້ານຊັບພະຍາກອນທຳມະຊາດ ຕ້ອງໄດ້ຮັບການສຳຫຼວດ, ຈັດສັນ, ຄຸ້ມຄອງ, ວາງແຜນຍຸດທະສາດພັດທະນາ ແລະ ກຳນົດນະໂຍບາຍອັນຖືກຕ້ອງ ທັງຈັດຕັ້ງປະຕິບັດຢ່າງເປັນລະບົບ ເພື່ອນຳໄປສູ່ສ້າງເປັນໂຄງປະກອບເສດຖະກິດ ທີ່ມີຂະແໜງຜະລິດ ແລະ ບໍລິການປາຍແຫຼມຂອງປະເທດ, ສ້າງຖານລາຍຮັບອັນໝັ້ນຄົງ ແລະ ເຂັ້ມແຂງ, ທັງນຳຜົນປະໂຫຍດຕົວຈິງ ໃຫ້ສັງຄົມຢ່າງທົ່ວເຖິງ. ໃນນັ້ນ:

+ ດຳເນີນການຈັດສັນເຂດຜະລິດ - ປຸງແຕ່ງກະສິກຳ ສຳລັບການສົ່ງອອກໃຫ້ເປັນຮູບປະທຳ, ໂດຍແກ້ໄຂຫຼາຍໆປັດໄຈພ້ອມໆກັນຢ່າງເປັນລະບົບ. ຕັ້ງໜ້າກະກຽມຄວາມພ້ອມດ້ານຕ່າງໆ ເພື່ອຮອງຮັບ

ແກ່ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ, ເປັນຕົ້ນແມ່ນທີ່ດິນ ແລະ ພື້ນຖານໂຄງລ່າງອື່ນໆ.

\+ ປັບປຸງແຜນຍຸດທະສາດພັດທະນາດ້ານພະລັງງານຄືນໃໝ່ ໂດຍເລີ່ມຈາກການຕີລາຄາ ແລະ ກຳແໜ້ນຄວາມສາມາດຜະລິດຕົວຈິງ ຂອງບັນດາໂຄງການດ້ານພະລັງງານທີ່ກຳລັງຜະລິດ, ບັນດາໂຄງການທີ່ກຳລັງກໍ່ສ້າງ ຫຼື ກຳລັງສຳຫຼວດ - ອອກແບບ ພ້ອມທັງຄຳນວນຢ່າງຖືກຕ້ອງຄວາມຕ້ອງການ ກໍຄືຄວາມສາມາດສະໜອງພະລັງງານຕົວຈິງ ຂອງທົ່ວປະເທດ ໃນແຕ່ລະໄລຍະ ເພື່ອດັດແກ້ຢ່າງທັນການໃນສ່ວນທີ່ບໍ່ເໝາະສົມ.

\+ ເພີ່ມທະວີການຄຸ້ມຄອງຕິດພັນກັບການຂຸດຄົ້ນ, ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ໃຫ້ເກີດປະໂຫຍດສູງສຸດ; ປັບປຸງລະບົບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນຢ່າງຄຸ້ມຄ່າ.

\+ ພັດທະນາອຸດສາຫະກຳການທ່ອງທ່ຽວໃຫ້ກາຍເປັນຂະແໜງເສດຖະກິດໃໝ່ ທີ່ມີສັກກະຍາພາບຂອງປະເທດ, ໂດຍສຸມການພັດທະນາແຫຼ່ງທ່ອງທ່ຽວທຳມະຊາດວັດທະນະທຳ - ປະຫວັດສາດ ແລະ ທ່ອງທ່ຽວກະສິກຳ.

\+ ເສີມຂະຫຍາຍທ່າໄດ້ປຽບດ້ານທີ່ຕັ້ງຂອງປະເທດ ແລະ ພັດທະນາພື້ນຖານໂຄງລ່າງທີ່ສາມາດຮອງຮັບການເຊື່ອມຈອດ - ເຊື່ອມໂຍງ.

\+ ລັດຕ້ອງປະຕິບັດບົດບາດຄຸ້ມຄອງຕໍ່ທີ່ດິນຂອງວິງຄະນາຍາດຢ່າງເຂັ້ມແຂງເປັນລະບົບ ແລະ ມີປະສິດທິພາບ ຕິດພັນກັບການດຳເນີນການຈັດສັນ ແລະ ວາງແຜນພັດທະນາ ໃຫ້ເກີດປະໂຫຍດສູງສຸດ.

+ ເສີມຂະຫຍາຍທ່າແຮງຂອງປະຊາກອນໜຸ່ມ ໂດຍສະເພາະ ກໍາລັງຊັບພະຍາກອນບຸກຄົນ ທີ່ໄດ້ຮັບການກໍ່ສ້າງ - ບໍາລຸງໃນໄລຍະຜ່ານມາ ຊຶ່ງສ່ວນໃຫຍ່ຍັງຢູ່ໃນໄວອອກແຮງງານ ໃຫ້ເກີດປະໂຫຍດສູງສຸດ ແລະ ກາຍເປັນແຮງຂັບດັນຕົ້ນຕໍ ໃນການພັດທະນາເສດຖະກິດ - ສັງຄົມ ຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ.

ການຂຸດຄົ້ນທຸກຄວາມອາດສາມາດ ຫຼື ທ່າແຮງບົ່ມຊ້ອນຂອງຊາດ ຕ້ອງຕິດພັນກັບການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ທັງຮັບປະກັນ ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ ບົນພື້ນຖານການນໍາໃຊ້ຜົນສໍາເລັດດ້ານວິທະຍາສາດ - ເຕັກໂນໂລຊີ ສະໄໝໃໝ່ຢ່າງເປັນລະບົບ ເຂົ້າໃນໂຄງການພັດທະນາຕົວຈິງ.

**② ສົ່ງເສີມພັດທະນາວິສາຫະກິດພາຍໃນໃຫ້ຂະຫຍາຍຕົວ ແລະ ເຂັ້ມແຂງ:**

+ ສືບຕໍ່ປັບປຸງຍຸດທະສາດ ນະໂຍບາຍ ແລະ ບັນດາມາດຕະການອັນຈໍາເປັນ ເພື່ອພັດທະນາວິສາຫະກິດພາຍໃນ.

+ ປະຕິຮູບລັດວິສາຫະກິດຢ່າງຈິງຈັງ ໂດຍກໍານົດແຈ້ງ ແລະ ປະຕິບັດຢ່າງເຂັ້ມງວດຫຼັກການຈັດຕັ້ງ ແລະ ເຄື່ອນໄຫວທີ່ທັງຮັບປະກັນການປົກປ້ອງຊັບສິນຂອງລັດ ບໍ່ໃຫ້ຕົກເຮ່ຍເສຍຫາຍ, ເດັດດ່ຽວປະຕິບັດການຄຸ້ມຄອງວິສາຫະກິດຂອງລັດ ຕາມກົນໄກຕະຫຼາດ ແລະ ຮັບປະກັນຜົນປະໂຫຍດຂອງລັດ ລວມໝູ່ ແລະ ຜູ້ອອກແຮງງານ; ແກ້ໄຂກົນໄກ ແລະ ລະບອບ ລະບຽບການຕ່າງໆທີ່ບໍ່ສອດຄ່ອງ.

+ ລັດກໍານົດນະໂຍບາຍສົ່ງເສີມສະເພາະອັນຈໍາເປັນ ເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດຈໍານວນໜຶ່ງທີ່ມີຄວາມພ້ອມ ບົນຕົວພັດທະນາໃຫ້ກາຍເປັນບັນດາວິສາຫະກິດນໍາໜ້າທາງທຸລະກິດ; ເພີ່ມທະວີການ

ຊີ້ນຳປັບປຸງສະພາອຸດສາຫະກຳ - ການຄ້າ ໃຫ້ມີການຈັດຕັ້ງທີ່ເຂັ້ມແຂງ ແລະ ສາມາດເສີມຂະຫຍາຍບົດບາດອັນແຂງແຮງ ໃນການກຳນົດທິດທາງ ຫຼື ຊີ້ແນະການພັດທະນາທຸລະກິດລວມ ແລະ ແຕ່ລະຂະແໜງຫຼັກໆ.

+ ລັດຕ້ອງມີການຊີ້ນຳປັບປຸງ ບັນດາປັດໄຈສະໜັບສະໜູນອັນຈຳເປັນ ສຳລັບການເຄື່ອນໄຫວທຸລະກິດໃນແຕ່ລະຂົງເຂດ ເພື່ອກະຕຸ້ນຢ່າງແຂງແຮງຕໍ່ຜູ້ປະກອບການ SME ຂະຫຍາຍການຜະລິດ ແລະ ການບໍລິການຕິດພັນກັບການປັບປຸງ ແລະ ຂະຫຍາຍຮູບແບບເສດຖະກິດຮ່ວມມືຂອງປະຊາຊົນ.

**③ ປັບປຸງສະພາບຄ່ອງໃຫ້ແກ່ງົບປະມານຂອງລັດ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງເງິນຕາ** ຕ້ອງເລີ່ມຈາກການປະຕິບັດວິໄນແຜນການ - ການເງິນຢ່າງເຂັ້ມງວດ, ຮັບປະກັນຄວາມສອດຄ່ອງລະຫວ່າງການສ້າງແຜນພັດທະນາທີ່ມີຈຸດສຸມ ແລະ ມີປະສິດທິຜົນກັບຄວາມສາມາດສຳລະສະສາງຂອງງົບປະມານ, ຈາກນັ້ນ ກ້າວເຖິງສ້າງຄວາມເຂັ້ມແຂງໃນການຄຸ້ມຄອງລາຍຮັບ - ລາຍຈ່າຍງົບປະມານ ແລະ ຍົກສູງປະສິດທິຜົນການລົງທຶນຂອງລັດ:

+ ສືບຕໍ່ປັບໂຄງສ້າງໜີ້ສາທາລະນະ ແລະ ສ້າງເງື່ອນໄຂການສຳລະສະສາງໜີ້ສິນແບບຕັ້ງໜ້າ.

+ ສ້າງລະບົບຄຸ້ມຄອງລາຍຮັບ - ລາຍຈ່າຍງົບປະມານຂອງລັດໃຫ້ເຂັ້ມແຂງ ດ້ວຍການປະຕິບັດເຂັ້ມງວດຫຼັກການແຜນລາຍຈ່າຍ ຕ້ອງບົນພື້ນຖານຄວາມສາມາດຂອງລາຍຮັບງົບປະມານຕົວຈິງ ແລະ ສ້າງໂຄງການລົງທຶນໃໝ່ຈາກງົບປະມານລັດ ທີ່ບໍ່ມີແຫຼ່ງສຳລະສະສາງອັນຈະແຈ້ງ...; ຕ້ອງປະຕິບັດບັນດາມາດຕະການ ເພີ່ມລາຍຮັບງົບປະມານຢ່າງ

ເຂັ້ມແຂງ ຕິດພັນກັບການຫັນລະບົບຄຸ້ມຄອງເກັບລາຍຮັບ ໃຫ້ທັນສະໄໝ; ຕ້ອງຖືການປະຢັດລາຍຈ່າຍງົບປະມານ, ໂດຍສະເພາະການໃຊ້ຈ່າຍບໍລິຫານເປັນວາລະແຫ່ງຊາດ ແລະ ຕິດພັນການປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ, ຫຼຸດຈຳນວນລັດຖະກອນໃນກົງຈັກ ຢ່າງຕໍ່ເນື່ອງ, ຫັນເປັນທັນສະໄໝຢ່າງແຂງແຮງ ພ້ອມທັງກຳນົດລະອຽດຈະແຈ້ງ ແລະ ຈັດຕັ້ງປະຕິບັດເຂັ້ມງວດການນຳໃຊ້ງົບປະມານ ແລະ ຊັບສິນບັດຂອງລັດ ສຳລັບລັດຖະກອນທຸກປະເພດ.

+ ປັບປຸງອົງປະກອບການລົງທຶນ ຈາກງົບປະມານຂອງລັດ ໂດຍຄຳນຶງເຖິງຄວາມສາມາດຕົວຈິງຂອງງົບປະມານ ແລະ ສຸມການລົງທຶນໃສ່ບາງເປົ້າໝາຍຕົ້ນຕໍຄື: ບັນດາໂຄງການພັດທະນາດ້ານໂຄງລ່າງທີ່ມີປະສິດທິຜົນອັນແທ້ຈິງຕາມບໍລິເວນເຂດແຄວ້ນ ທີ່ມີຄວາມສຳຄັນເປັນໄມ້ງັດໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມ ແລະ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ລວມທັງລົງທຶນພັດທະນາພື້ນຖານໂຄງລ່າງ - ວັດຖຸເຕັກນິກອັນຈຳເປັນໃນເຂດຈຸດສຸມຜະລິດສິນຄ້າ.

+ ຮັບປະກັນຄວາມໝັ້ນຄົງຂອງລະບົບເງິນຕາຂອງຊາດ ແລະ ການຮັກສາສະຖຽນລະພາບຂອງອັດຕາແລກປ່ຽນ ລະຫວ່າງເງິນກີບກັບສະກຸນເງິນຕ່າງປະເທດ; ປັບປຸງລະບົບການຄຸ້ມຄອງຄັງສຳຮອງຂອງຊາດໃຫ້ມີຄວາມເຂັ້ມແຂງ ແລະ ສ້າງຄັງສຳຮອງດ້ວຍຫຼາຍສະກຸນເງິນ ຫຼື ດ້ວຍຄຳ.

**④ ສ້າງການຫັນປ່ຽນອັນເປັນພື້ນຖານ ແລະ ແຂງແຮງໃນການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ:**

+ ຮີບຮ້ອນດຳເນີນການສຳຫຼວດ ຈັດສັນ ວາງແຜນພັດທະນາເຂດການຜະລິດ ແລະ ການບໍລິການແບບມີຈຸດສຸມ ຕາມບໍລິເວນເຂດ

ແຄວ້ນຕ່າງໆ, ໂດຍສະເພາະ ໃນບໍລິເວນທີ່ມີພື້ນຖານໂຄງລ່າງສະດວກ ແລະ ເຂົ້າເຖິງຕະຫຼາດງ່າຍ; ຍົກລະດັບຄວາມສາມາດການບໍລິການຜ່ານຂອງບັນດາດ່ານສາກົນ ແລະ ພັດທະນາຄວາມສາມາດຂອງການຂົນສົ່ງສິນຄ້າສົ່ງອອກ ແລະ ສິນຄ້າຂ້າມແດນ ໃຫ້ຢູ່ໃນມາດຖານນາໆຊາດ ເພື່ອສ້າງຄວາມເຊື່ອໝັ້ນ ໃນການໃຊ້ບໍລິການຂອງບັນດາຜູ້ປະກອບການ ແລະ ດຶງດູດຜູ້ປະກອບການຈາກພາຍໃນ ແລະ ຕ່າງປະເທດ ລົງທຶນໃນບັນດາໂຄງການທີ່ສຳຄັນຢູ່ປະເທດເຮົາ.

+ ສືບຕໍ່ປັບປຸງນະໂຍບາຍ, ລະບົບກົນໄກຄຸ້ມຄອງເຂດເສດຖະກິດພິເສດທີ່ມີແລ້ວ ເພື່ອສົ່ງເສີມໃຫ້ມີການລົງທຶນພື້ນຖານໂຄງລ່າງອັນຈຳເປັນ ແລະ ສ້າງເປັນບັນດາເຂດຕົ້ນຕໍ ດຶງດູດການລົງທຶນແບບມີຈຸດສຸມເຂົ້າໃນການຜະລິດ ແລະ ບໍລິການ.

+ ສຸມແກ້ໄຂບັນຫາທີ່ຍັງຫຍຸ້ງຍາກ ອືດອາດໃນການພິຈາລະນາໂຄງການລົງທຶນ ກໍຄືການຄຸ້ມຄອງການລົງທຶນ ໃຫ້ມີຄວາມໂປ່ງໃສ ວ່ອງໄວ ໂລ່ງລ່ຽນ ແລະ ເປັນລະບົບຮັດກຸມ ດ້ວຍການຫຼຸດຂອດບໍລິຫານທີ່ຖຸມເຄືອ, ເຊື່ອມລະຫວ່າງຂອດງານດ້ວຍເຄືອຂ່າຍອຸປະກອນທັນສະໄໝ; ສ້າງລະບົບຂໍ້ມູນທີ່ກ່ຽວຂ້ອງກັບບັນດາປັດໄຈຕົວຈິງໃນແຕ່ລະຂົງເຂດ ເພື່ອໃຫ້ຜູ້ປະສົງຢາກລົງທຶນໃນຂົງເຂດນັ້ນໆ ສາມາດເຂົ້າເຖິງຂໍ້ມູນກ່ຽວຂ້ອງແຕ່ຫົວທີ.

+ ລົງທຶນພັດທະນາຄວາມພ້ອມດ້ານພື້ນຖານໂຄງລ່າງ, ການຝຶກອົບຮົມ ແລະ ສະໜອງແຮງງານ ໃຫ້ບັນດາໂຄງການລົງທຶນຢ່າງເປັນລະບົບ.

+ ແກ້ໄຂອຸປະສັກຕ່າງໆ ເພື່ອສ້າງເງື່ອນໄຂ ແລະ ແຮງດຶງດູດການລົງທຶນ ກໍຄືລະດົມທຶນເຂົ້າໃນການພັດທະນາປະເທດຊາດ ໂດຍບໍ່ກະທົບເຖິງຄວາມໝັ້ນຄົງຂອງຊາດ.

**⑤ ສືບຕໍ່ພັດທະນາພື້ນຖານໂຄງລ່າງ ແລະ ລະບົບສາທາລະນຸປະໂພກຢູ່ຊົນນະບົດຢ່າງມີຈຸດສຸມ:**

+ ສົມທົບລະຫວ່າງການບູລະນະ ແລະ ຂະຫຍາຍພື້ນຖານໂຄງລ່າງຢູ່ຊົນນະບົດທີ່ມີແລ້ວ ກັບການດໍາເນີນການສໍາຫຼວດ, ກໍານົດແຜນພັດທະນາດ້ານໂຄງລ່າງ, ລະບົບສາທາລະນຸປະໂພກຢູ່ບາງເຂດຊົນນະບົດຫ່າງໄກສອກຫຼີກ, ເຂດຊາຍແດນທີ່ມີຄວາມຈໍາເປັນຮີບດ່ວນຢ່າງເໝາະສົມ ແລະ ມີຈຸດສຸມ.

+ ສ້າງສະພາບເອື້ອອໍານວຍແບບບູລິມະສິດ ຕໍ່ກິດຈະການລົງທຶນຂອງຜູ້ປະກອບການ ຢູ່ເຂດເມືອງທຸກຍາກ ຫຼື ເຂດທຸລະກັນດານ ໄປພ້ອມກັບການຊ່ວຍເຫຼືອຢ່າງຕັ້ງໜ້າຕໍ່ຄອບຄົວຂອງປະຊາຊົນ.

+ ຈັດສັນ ແລະ ພັດທະນາເປັນເຂດຈຸດສຸມ ເພື່ອສົ່ງເສີມການຜະລິດສິນຄ້າຂອງປະຊາຊົນຢູ່ຊົນນະບົດ, ເຂດຊຸມຊົນໃຫຍ່ ຫຼື ຕົວເມືອງນ້ອຍ; ເພີ່ມທະວີການສົ່ງເສີມ, ຊຸກຍູ້ການຜະລິດສິນຄ້າ - ບໍລິການ ເພື່ອຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສະໜອງສິນຄ້າສູ່ຕະຫຼາດເປັນປົກກະຕິ.

+ ຊຸກຍູ້ສົ່ງເສີມພາກທຸລະກິດດ້ານການຄ້າໃນຕົວເມືອງ ເພື່ອຮ່ວມມືກັບບັນດາຫົວໜ່ວຍຜູ້ຜະລິດຢູ່ຊົນນະບົດ ໂດຍການຈັດເທດສະການສະແດງສິນຄ້າຊຸມຊົນທ້ອງຖິ່ນ ຫຼື ໃນລະດັບພາກ.

**⑥ ຄຸ້ມຄອງ ແລະ ພັດທະນາຕົວເມືອງໃຫ້ເຂັ້ມແຂງ:**

+ ພັດທະນານະຄອນຫຼວງວຽງຈັນ ກາຍເປັນສູນກາງດ້ານການເມືອງ, ເສດຖະກິດ - ສັງຄົມ ແລະ ວັດທະນະທຳ ເພື່ອເປັນພະລັງຂັບເຄື່ອນເມືອງອັດສະລິຍະທີ່ສຳຄັນ ຂອງອະນຸພາກພື້ນອາຊີຄະເນ.

+ ວາງແຜນພັດທະນາຕົວເມືອງ ແລະ ສະໜອງທຶນຮອນໃຫ້ແກ່ການພັດທະນາບັນດາຕົວເມືອງໃຫຍ່ ຫຼື ເມືອງທີ່ເຊື່ອມຕໍ່ຕາມແລວເສດຖະກິດ ເພື່ອກາຍເປັນຕ່ອງໂສ້ສຳຄັນໃນການເຊື່ອມຈອດ - ເຊື່ອມໂຍງລະຫວ່າງປະເທດ.

+ ຮີບຮ້ອນສ້າງ, ປັບປຸງບັນດານິຕິກຳ, ມາດຕະຖານ ແລະ ຕົວຊີ້ວັດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດສັນ ແລະ ຄຸ້ມຄອງການພັດທະນາຕົວເມືອງນ້ອຍໃນຂຸມຊົນ ຢູ່ຊົນນະບົດແຕ່ຫົວທີ, ຫຼີກລຽງການຂະຫຍາຍຕົວເມືອງແບບຕາມເປັນຕາມເກີດ.

**⑦ ເພີ່ມທະວີການປົກປັກຮັກສາ ແລະ ແກ້ໄຂບັນຫາດ້ານສິ່ງແວດລ້ອມ:**

+ ຕ້ອງຖືການພັດທະນາແບບສີຂຽວລົມດຸນ ແລະ ສະກັດກັ້ນມົນລະພິດ ເປັນອົງປະກອບຕົ້ນຕໍ ຂອງການພັດທະນາແບບຍືນຍົງ ແລະ ການຄ້ຳປະກັນຄວາມໝັ້ນຄົງດ້ານເສດຖະກິດ - ສັງຄົມ; ປູກຈິດສຳນຶກໃຫ້ສັງຄົມ ຖືການພັດທະນາເສດຖະກິດ ຕ້ອງຄຽງຄູ່ກັບການປົກປ້ອງທຳມະຊາດ.

+ ຮີບຮ້ອນສ້າງລະບົບການຄຸ້ມຄອງປ່າໄມ້ໃຫ້ເຂັ້ມແຂງບົນພື້ນຖານຈັດສັນປ່າໄມ້ທີ່ຕ້ອງປົກປ້ອງ ແລະ ຟື້ນຟູຢ່າງຈະແຈ້ງ, ດຳເນີນມາດຕະການຄຸ້ມຄອງປ່າຢ່າງເຂັ້ມງວດໃນທຸກລະດັບ ເພື່ອຟື້ນຟູ

ປ່າໄມ້ ແລະ ປົກປັກຮັກສາແຫຼ່ງນໍ້າ, ສ້າງຄວາມສົມດູນຂອງລະບົບນິເວດຄືນໃໝ່.

+ ຈັດຕັ້ງປະຕິບັດບັນດາມາດຕະການຮັບປະກັນ ບໍ່ທຳລາຍສິ່ງແວດລ້ອມຂອງບັນດາໂຄງການພັດທະນາ.

+ ສ້າງ - ປັບປຸງ ເພີ່ມທະວີການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳກ່ຽວຂ້ອງກັບການຮັກສາສິ່ງແວດລ້ອມໃຫ້ເຂັ້ມແຂງ, ນຳໃຊ້ມາດຕະການກົດໝາຍຢ່າງເຂັ້ມງວດ ຕໍ່ອົງການຈັດຕັ້ງພາກລັດ ແລະ ຫົວໜ່ວຍເສດຖະກິດທຸກປະເພດທີ່ລະເມີດກົດໝາຍ ກໍ່ໃຫ້ເກີດຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ.

**3.3. ພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ, ສ້າງສັງຄົມທີ່ປະຊາຊົນເປັນເຈົ້າ ມີປະຊາທິປະໄຕ ສະເໝີພາບ ແລະ ຍຸຕິທຳ.**

+ ສຸມໃສ່ພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ, ໃນເງື່ອນໄຂໃໝ່ຂອງການພັດທະນາ ຕ້ອງສ້າງຄົນລາວໃຫ້ມີຄວາມພ້ອມໃນທຸກດ້ານ, ສາມາດກາຍເປັນກຳລັງຂັບດັນຕົ້ນຕໍ ໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

+ ຮັບປະກັນໃຫ້ຄົນລາວ ມີລະດັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ, ພັດທະນາດ້ານອາຊີບ ແລະ ມີສີມືການອອກແຮງງານຢ່າງບໍ່ຢຸດຢັ້ງ, ສາມາດຄົ້ນຄວ້າປະດິດສ້າງ ແລະ ເປັນເຈົ້າການນຳໃຊ້ວິທະຍາສາດ - ເຕັກໂນໂລຢີ ທີ່ທັນສະໄໝ ໂດຍສະເພາະ ແມ່ນໃນດ້ານເຕັກໂນໂລຢີຂ່າວສານ ແລະ ການສື່ສານ ໃຫ້ທຽມທັນກັບຄຸນນະພາບຂອງແຮງງານ ແລະ ບຸກຄະລາກອນ ຂອງບັນດາປະເທດໃນອານຸພາກພື້ນ.

+ ເອົາໃຈໃສ່ສົມທົບລະຫວ່າງ ສະຖາບັນການສຶກສາ, ອົງກອນສັງຄົມ ແລະ ຄອບຄົວ ເພື່ອເຮັດໃຫ້ການຮຽນຮູ້ສາຂາວິຊາຕ່າງໆ ຄຽງຄູ່

ກັບການພັດທະນາຄຸນຄ່າວັດທະນະທຳຂອງຊາດ, ຮຽນຮູ້ມູນເຊື້ອຄວາມສາມັກຄີປອງດອງ, ມີສະຕິຮັກຊາດ ແລະ ເສຍສະຫຼະເພື່ອຜົນປະໂຫຍດລວມ, ປູກຈິດສຳນຶກ ແລະ ຄວາມຮັບຜິດຊອບຕໍ່ສັງຄົມ, ສ້າງສະຕິເຄົາລົບກົດໝາຍ, ຕື່ນຕົວປະຕິບັດພັນທະພົນລະເມືອງ ແລະ ມີຈັນຍາບັນໃນການປະຕິບັດໜ້າທີ່ ເພື່ອສັງຄົມຂອງຄົນລາວ.

+ ສ້າງທຸກເງື່ອນໄຂ ແລະ ໂອກາດໃຫ້ຄົນລາວທຸກຄົນ ໄດ້ຮັບການພັດທະນາຮ່ວມກັນ ທັງສາມາດຊົມໃຊ້ໝາກຜົນຂອງການພັດທະນາ ຢ່າງຍຸຕິທຳ.

+ ສືບຕໍ່ດຳເນີນການແກ້ໄຂຄວາມທຸກຍາກຂອງປະຊາຊົນ ຢ່າງເປັນລະບົບ ແລະ ຮັບປະກັນຄວາມຍືນຍົງ.

+ ສ້າງ ແລະ ບູລະນະນະໂຍບາຍ ກໍຄືກົນໄກສົ່ງເສີມພິເສດເພື່ອພັດທະນາພື້ນຖານເສດຖະກິດ - ສັງຄົມ ຢູ່ເຂດຊົນນະບົດ, ເຜົ່າຊົນຫ່າງໄກ, ລວມທັງບັນດາເປົ້າໝາຍທີ່ຍັງດ້ອຍໂອກາດ ເພື່ອສ້າງໂອກາດແລະ ເງື່ອນໄຂອັນຈຳເປັນ ຮັບປະກັນໃຫ້ມີການພັດທະນາທີ່ເທົ່າທຽມກັນລະຫວ່າງເຜົ່າ ແລະ ຊັ້ນຄົນ, ເພດ, ໄວ ໃນສັງຄົມ.

+ ກຳນົດ ແລະ ຈັດຕັ້ງປະຕິບັດແຜນການ, ໂຄງການ ແລະ ບັນດາມາດຕະການຕົວຈິງ ໃນການສົ່ງເສີມການສ້າງອາຊີບທີ່ໝັ້ນຄົງ, ສ້າງຕຳແໜ່ງງານ ແລະ ເພີ່ມທະວີການຝຶກສີມືແຮງງານ ເພື່ອສະໜອງໃຫ້ຕຳແໜ່ງງານທີ່ເກີດຂຶ້ນຢ່າງພຽງພໍ ແລະ ມີຄຸນນະພາບ, ຄຸ້ມຄອງແຮງງານຈາກຕ່າງປະເທດຢ່າງຮັດກຸມ, ເຂັ້ມງວດ ເພື່ອຮັບປະກັນຜົນປະໂຫຍດຂອງຜູ້ອອກແຮງງານລາວ.

+ ຍົກລະດັບການສະກັດກັ້ນ ແລະ ແກ້ໄຂຜົນຮ້າຍຈາກບັນຫາຢາເສບຕິດ ໃຫ້ເປັນໜ້າທີ່ຕົ້ນຕໍທາງດ້ານສັງຄົມ ແລະ ເປັນສ່ວນໜຶ່ງໃນ

ວາລະແຫ່ງຊາດ ເຊິ່ງຕ້ອງປຸກລະດົມ ການເຂົ້າຮ່ວມຂອງທົ່ວສັງຄົມໃຫ້ແຂງແຮງ, ຕໍ່ເນື່ອງ.

**3.4. ປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກເຄື່ອນໄຫວຂອງບັນດາອົງການອໍານາດລັດໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ.**

- ແກ້ໄຂສະພາບຊໍ້າຊ້ອນດ້ານພາລະບົດບາດ ເພື່ອໃຫ້ຈະແຈ້ງ ແລະ ຮັດກຸມ ເຮັດໃຫ້ສາຍໃຍການຈັດຕັ້ງມີຄວາມກະທັດຮັດ, ຂະໜາດກົງຈັກບໍ່ໃຫຍ່ໂຕ ແຕ່ເປັນລະບົບໂລ່ງລ່ຽນ ແລະ ກ້າວສູ່ການເຊື່ອມລະຫວ່າງຂອດບໍລິຫານຕ່າງໆ ດ້ວຍອຸປະກອນທັນສະໄໝ ຄຽງຄູ່ກັບການເຮັດໃຫ້ຖັນແຖວລັດຖະກອນ ມີຈໍານວນໜ້ອຍລົງ ແຕ່ຄຸນນະພາບເພີ່ມຂຶ້ນ, ໃຊ້ຈ່າຍຢ່າງປະຢັດ, ຂັບເຄື່ອນວຽກງານຕາມກົດໝາຍຢ່າງມີປະສິດທິພາບ.

- ປັບປຸງກົນໄກການຄຸ້ມຄອງ ໃຫ້ເປັນລະບົບເອກະພາບ ແລະ ເຂັ້ມແຂງ ຄຽງຄູ່ກັບຮັບປະກັນປະຕິບັດແບບແຜນ "ໃຫ້ປະຊາຊົນໄດ້ຮູ້ ໄດ້ປຶກສາຫາລື ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ".

- ສືບຕໍ່ຜັນຂະຫຍາຍຍຸດທະສາດ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໄປພ້ອມໆກັບການແບ່ງຂອບເຂດສິດອໍານາດ ແລະ ໜ້າທີ່ລະຫວ່າງຂັ້ນບໍລິຫານຄືນໃໝ່ ຕາມທິດມອບຄວາມເປັນເຈົ້າໃຫ້ທ້ອງຖິ່ນຫຼາຍຂຶ້ນ ຄຽງຄູ່ກັບການຍົກລະດັບຄວາມສາມາດຂອງການຈັດຕັ້ງ - ບຸກຄະລາກອນ ໃຫ້ແກ່ທ້ອງຖິ່ນ.

- ຍົກສູງບົດບາດ, ຄຸນນະພາບ ແລະ ຄວາມສາມາດຂອງສະພາແຫ່ງຊາດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການສ້າງກົດໝາຍໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ - ສັງຄົມ ດ້ວຍກົດ

ໝາຍ, ການພິຈາລະນາຕົກລົງ ບັນຫາສຳຄັນພື້ນຖານຂອງປະເທດຊາດ, ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດ, ຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ຜົນຂອງການຕິດຕາມກວດກາ ຕ້ອງໄດ້ຮັບການພິຈາລະນາແກ້ໄຂ ຈາກອົງການລັດທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ທັນເວລາ. ເອົາໃຈໃສ່ຍົກສູງຂີດຄວາມສາມາດຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນການປະຕິບັດສິດ, ໜ້າທີ່ ຕາມທີ່ກຳນົດໃນກົດໝາຍ.

- ເພີ່ມທະວີຄວາມຮັບຜິດຊອບ ການດຳເນີນການກວດສອບຂອງບັນດາຫົວໜ່ວຍທີ່ນຳໃຊ້ງົບປະມານ ແລະ ຊັບສິນຂອງລັດ, ປັບປຸງແກ້ໄຂມາດຕະການແນະນຳຈາກຜົນການກວດສອບ ໃຫ້ເຂັ້ມງວດ, ເດັດຂາດ ແລະ ທັນເວລາ ຕາມກົດໝາຍທີ່ກ່ຽວຂ້ອງໄດ້ກຳນົດ.

- ສ້າງຄວາມໂປ່ງໃສໃນທຸກຂັ້ນຕອນຂອງການດຳເນີນຄະດີຕາມຂະບວນຍຸຕິທຳ, ສ້າງເງື່ອນໄຂຕົວຈິງ ແລະ ອຳນວຍຄວາມສະດວກໃຫ້ປະຊາຊົນ ສາມາດເຂົ້າເຖິງຂະບວນຍຸຕິທຳ ກໍຄືໃຊ້ການບໍລິການດ້ານກົດໝາຍຈາກລັດ ຫຼື ສັງຄົມ ເພື່ອປົກປ້ອງຄວາມເປັນທຳໃຫ້ຕົນເອງ ກໍຄືສິດຜົນປະໂຫຍດຂອງລັດ, ຂອງລວມໝູ່ ແລະ ຂອງປະຊາຊົນ.

- ຍົກລະດັບວຽກງານປະຊາສຳພັນ ລະຫວ່າງບັນດາອົງການຂອງລັດກັບສັງຄົມ ໂດຍຜ່ານສື່ໃຫ້ແຂງແຮງ ໂດຍຕິດພັນກັບການສ້າງລະບົບສື່ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງລັດ ໃຫ້ເຂັ້ມແຂງ ແລະ ສາມາດປະຕິບັດບົດບາດອັນຕັ້ງໜ້າໃນການເປັນສື່ກາງ ເພື່ອສະໜອງບັນດາຂໍ້

ມູນອັນຈຳເປັນ ໃນການເຄື່ອນໄຫວຂອງລັດ ແລະ ເປັນສື່ກາງໃຫ້ສັງຄົມ ສະແດງຄວາມຄິດເຫັນ ອັນສ້າງສັນຈາກສັງຄົມ ຕໍ່ການເຄື່ອນໄຫວ ວຽກງານຂອງອຳນາດລັດ ຢ່າງເປັນລະບົບ ວ່ອງໄວ ຊັດເຈນ;

**3.5. ເພີ່ມທະວີວຽກງານແນວໂຮມ ແລະ ວຽກງານມະຫາຊົນຂອງພັກ ໃນໄລຍະໃໝ່** ໃຫ້ສາມາດຕອບສະໜອງການຜັນຂະຫຍາຍ ແນວທາງຂອງພັກ ໃນການເຕົ້າໂຮມກຳລັງແຮງສັງລວມ ເພື່ອພັດທະນາ ເສດຖະກິດ - ສັງຄົມ, ປະຕິບັດບັນດາກົນໄກທາງການເມືອງ - ສັງຄົມ ຂອງລະບອບປະຊາທິປະໄຕປະຊາຊົນ ຢ່າງແຂງແຮງ, ຮັບປະກັນສິດ ເປັນເຈົ້າ, ປະຊາທິປະໄຕ ແລະ ຍຸຕິທຳ ໃນສັງຄົມ.

- ແນວລາວສ້າງຊາດ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ ແລະ ສະຫະພັນນັກ ຮົບເກົ່າແຫ່ງຊາດລາວ ກໍຄືອົງການຈັດຕັ້ງສັງຄົມຕ່າງໆ ທີ່ໄດ້ຮັບການສ້າງ ຕັ້ງ ແລະ ເຄື່ອນໄຫວສອດຄ່ອງຕາມກົດໝາຍຂອງ ສປປ ລາວ ເປັນກົນ ໄກພື້ນຖານ ໃນການປະຕິບັດວຽກງານມະຫາຊົນຂອງພັກ ຕິດພັນກັບ ການສູ້ຊົນຍົກລະດັບວຽກງານຂົນຂວາຍ ເຕົ້າໂຮມ ແລະ ສຶກສາອົບຮົມ ມະຫາຊົນ ຊັ້ນຄົນຕ່າງໆ ໃຫ້ມີຄວາມສາມັກຄີປອງດອງ, ຕື່ນຕົວ ແລະ ເປັນເຈົ້າການ ເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ສ້າງສາປະເທດ ຊາດ.

- ເດັດດ່ຽວແກ້ໄຂ ແລະ ສະກັດກັ້ນ ທຸກການເຄື່ອນໄຫວແອບ ອ້າງບັນຫາປະຊາທິປະໄຕ, ສິດທິມະນຸດ, ສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາຂອງປະຊາຊົນ... ເພື່ອດຳເນີນການທີ່ຂັດກັບກົດ ໝາຍ ແລະ ລະບຽບການ ເຊິ່ງຈະເປັນການມ້າງເພລະບອບການເມືອງ ແລະ ຄວາມໝັ້ນຄົງຂອງ ສປປ ລາວ.

- ຕັ້ງໜ້າເຄື່ອນໄຫວການທູດປະຊາຊົນ ເພື່ອໃຫ້ປະຊາຊົນບັນດາປະເທດຕ່າງໆ ເຂົ້າໃຈຢ່າງຖືກຕ້ອງ ຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ຂອງປະຊາຊົນລາວ, ເຜີຍແຜ່ມູນເຊື້ອ ແລະ ວັດທະນະທຳ ທີ່ດີງາມເປັນເອກະລັກຂອງລາວສູ່ສາກົນ ໃຫ້ນັບມື້ກວ້າງຂວາງ ແລະ ມີຊີວິດຊີວາ.

**3.6. ເພີ່ມທະວີຄວາມເປັນເຈົ້າການ ປະຕິບັດການພົວພັນກັບຕ່າງປະເທດ, ສ້າງເງື່ອນໄຂສະດວກ ແລະ ນຳຜົນປະໂຫຍດຕົວຈິງໃຫ້ແກ່ການພັດທະນາປະເທດຊາດ.**

- ສືບຕໍ່ຂະຫຍາຍການພົວພັນຮ່ວມມືແບບຫຼາຍທິດ, ຫຼາຍຝ່າຍ ຫຼາຍຮູບແບບ, ຫຼາຍລະດັບ ລະຫວ່າງລັດກັບລັດ ແລະ ລະຫວ່າງພັກເຮົາກັບພັກການເມືອງຂອງຕ່າງປະເທດ ບົນພື້ນຖານການເຄົາລົບເອກະລາດອຳນາດອະທິປະໄຕ ເຊິ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງມີຜົນປະໂຫຍດ.

- ເພີ່ມທະວີຄວາມເປັນເຈົ້າ ໃນການຈັດຕັ້ງປະຕິບັດ ບັນດາຂໍ້ຕົກລົງຮ່ວມມື ອັນເປັນພື້ນຖານ ກັບບັນດາປະເທດເພື່ອນມິດຍຸດທະສາດ ທີ່ໄດ້ຮ່ວມກັນຍົກການຮ່ວມມືສູ່ລະດັບສູງອັນໃໝ່ ໃຫ້ມີປະສິດທິຜົນຕົວຈິງກວ່າເກົ່າ, ໃນນັ້ນ ສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕິພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ - ຫວຽດນາມ ໃຫ້ເຂົ້າສູ່ລວງເລິກ; ເສີມຂະຫຍາຍສາຍພົວພັນທີ່ເປັນມູນ ເຊື້ອ ຄູ່ຮ່ວມມືຍຸດທະສາດຮອບດ້ານ, ໝັ້ນຄົງຍາວນານກັບ ສປ ຈີນ ຕິດພັນກັບການຈັດຕັ້ງປະຕິບັດແຜນແມ່ບົດຄູ່ຮ່ວມຊະຕາກຳລາວ - ຈີນ ໃຫ້ເກີດດອກອອກຜົນໃນທຸກດ້ານ.

- ສືບຕໍ່ຮັກສາ ແລະ ເພີ່ມທະວີສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມກັບບັນດາປະເທດອ້າຍນ້ອງ ແລະ ສະຫະພັນລັດເຊຍ, ເສີມຂະຫຍາຍສາຍພົວພັນກັບປະເທດເພື່ອນມິດອື່ນໆ.

- ສືບຕໍ່ຮັກສາການພົວພັນມິດຕະພາບອັນດີ ກັບບັນດາປະເທດເພື່ອນບ້ານໃກ້ຄຽງ ທັງສືບຕໍ່ແກ້ໄຂບັນດາຂໍ້ຂັດແຍ່ງ ຫຼື ຄວາມບໍ່ລົງລອຍລະຫວ່າງກັນ ດ້ວຍການເຈລະຈາ, ພ້ອມທັງຮັກສາ ແລະ ເພີ່ມທະວີການຮ່ວມມືດ້ານການຄ້າ, ການລົງທຶນລະຫວ່າງກັນ.

- ສືບຕໍ່ເຄື່ອນໄຫວຢ່າງຕັ້ງໜ້າ ໃນບັນດາອົງການຈັດຕັ້ງພາກພື້ນ ແລະ ສາກົນ ປະກອບສ່ວນສຳຄັນເຂົ້າໃນການປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືພັດທະນາ ຢູ່ພາກພື້ນ ແລະ ສາກົນ.

- ຕ້ອງເຮັດໃຫ້ການເຄື່ອນໄຫວຕ່າງປະເທດ ມີການຄຸ້ມຄອງຢ່າງລວມສູນເປັນເອກະພາບ, ມີການປະສານສົມທົບ ຢ່າງແໜ້ນແຟ້ນກັບວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ຕິດພັນກັບຍຸດທະສາດການພັດທະນາເສດຖະກິດ - ສັງຄົມ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ນັບທັງເຮັດໃຫ້ບັນດາໂຄງການຮ່ວມມື ແລະ ການຊ່ວຍເຫຼືອຂອງຕ່າງປະເທດ ມີປະສິດທິຜົນ ແລະ ນຳຜົນປະໂຫຍດສູງສຸດແກ່ປະເທດຊາດ.

**3.7. ເດັດດ່ຽວແກ້ໄຂຈຸດອ່ອນ - ຂໍ້ຄົງຄ້າງພາຍໃນພັກ, ຮັບປະກັນບົດບາດການເຄື່ອນໄຫວນຳພາຕົວຈິງທີ່ເຂັ້ມແຂງ ຂອງການຈັດຕັ້ງທຸກຂັ້ນ.**

**① ຢຶດໝັ້ນຫັດສະນະພື້ນຖານຂອງພັກ ກ່ຽວກັບສ້າງການຫັນປ່ຽນໃໝ່ດ້ານຈິນຕະນາການ, ຍົກລະດັບຄຸນນະພາບວຽກງານການເມືອງ - ແນວຄິດ ແລະ ທິດສະດີຂອງພັກ:**

+ ໃຫ້ຖັນແຖວພະນັກງານນໍາພາຂັ້ນຍຸດທະສາດ, ພະນັກງານຫຼັກແຫຼ່ງແຕ່ລະຂັ້ນ ຕ້ອງໄດ້ຮັບການປະກອບຄວາມຮູ້ລັດທິມາກ - ເລນິນທີ່ເປັນທິດສະດີພື້ນຖານກ່ຽວກັບການປະຕິວັດ ເວົ້າລວມ ແລະ ແນວຄິດໄກສອນ ພົມວິຫານ ທີ່ເປັນຜົນແຫ່ງການຄົ້ນຄວ້າ, ໝູນໃຊ້ ແລະ ປະດິດສ້າງທິດສະດີລວມ ເຂົ້າໃນພຶດຕິກໍາແຫ່ງການນໍາພາ ພາລະກິດປະຕິວັດໃນໄລຍະໃໝ່ຢູ່ປະເທດເຮົາ; ສືບຕໍ່ຮຽນຮູ້ບົດຮຽນການສ້າງສັງຄົມນິຍົມຢູ່ປະເທດອ້າຍນ້ອງ ກໍຄືບົດຮຽນການພັດທະນາເສດຖະກິດ - ສັງຄົມຂອງປະເທດຕ່າງໆ ເພື່ອກໍາແໜ້ນບັນຫາໃໝ່ໆທີ່ເລັ່ງທວງ ໃຫ້ມີການແກ້ໄຂໃນແຕ່ລະໄລຍະ.

+ ສູນກາງພັກ ຕ້ອງຮັບປະກັນເຮັດໃຫ້ບັນດາອົງການເສນາທິການ ຫຼື ອົງການວິຊາການຕ່າງໆ ທີ່ເຮັດໜ້າທີ່ໃນຂົງເຂດການເມືອງ - ແນວຄິດ ແລະ ທິດສະດີຂອງພັກ ໄດ້ຮັບການຍົກລະດັບຄວາມສາມາດໃນການເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນ.

+ ເພີ່ມທະວີການເຄື່ອນໄຫວດ້ານການເມືອງ ແລະ ນໍາພາແນວຄິດຢູ່ພາຍໃນການຈັດຕັ້ງພັກທຸກຂັ້ນ ຕິດພັນກັບການດໍາເນີນການປົວແປງພາຍໃນຢ່າງຕໍ່ເນື່ອງ ໂດຍຖືກການຕໍ່ສູ້ຕ້ານແນວຄິດຄອງເດີມທັດສະນະການເມືອງທີ່ຜິດເຂວ ແບບແຜນນໍາພາທີ່ບໍ່ຖືກຕ້ອງ ກໍຄືຄ່ານິຍົມທີ່ບໍ່ເໝາະສົມຢູ່ພາຍໃນຖັນແຖວສະມາຊິກພັກ... ເປັນເນື້ອໃນພື້ນຖານຂອງການດໍາເນີນຊີວິດຂອງຄະນະພັກແຕ່ລະຂັ້ນ ທັງດໍາເນີນການປຸກລະດົມຂະບວນການຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ ຄຸນສົມບັດສິນທໍາປະຕິວັດ ແລະ ຄວາມເປັນແບບຢ່າງນໍາໜ້າຂອງພະນັກງານສະມາຊິກພັກ.

**② ສືບຕໍ່ສ້າງຄວາມເຂັ້ມແຂງ ຂອງການຈັດຕັ້ງພັກແຕ່ລະຂັ້ນ ແລະ ຍົກສູງຄຸນນະພາບຂອງສະມາຊິກພັກ:**

+ ຕ້ອງສືບຕໍ່ປັບປຸງການຈັດຕັ້ງພັກແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາທີ່ຄົງຄ້າງຢູ່ພາຍໃນພັກ ແລະ ເຮັດໃຫ້ການຈັດຕັ້ງຮາກຖານພັກ ມີຄວາມປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ ເປັນແກນນຳໃນລະບົບການເມືອງ.

+ ປັບປຸງເນື້ອໃນນຳພາຂອງໜ່ວຍພັກ ຕິດພັນກັບການຍົກສູງຄວາມຮັບຜິດຊອບປະຕິບັດໜ້າທີ່ການເມືອງ ຕາມພາລະບົດບາດຂອງຕົນ ເພື່ອສ້າງໃຫ້ມີການຫັນປ່ຽນທີ່ຕັ້ງໜ້າໃນວຽກງານຕົວຈິງ.

+ ປັບປຸງຄຸນນະພາບການດຳເນີນຊີວິດຂອງໜ່ວຍພັກ ແລະ ຄະນະພັກແຕ່ລະຂັ້ນ ໂດຍສຸມໃສ່ກວດກາ - ປະເມີນຄວາມຄືບໜ້າໃນການປະຕິບັດບັນດາໜ້າທີ່ການເມືອງຕົວຈິງ, ລົງເລິກວິເຄາະໄຈ້ແຍກຈຸດທີ່ຍັງບໍ່ທັນປະຕິບັດໄດ້, ພິຈາລະນາຕໍ່ຄວາມຮັບຜິດຊອບ ຂອງແຕ່ລະບຸກຄົນສະມາຊິກພັກ ຕິດພັນກັບການຕິຊົມຕົນເອງ ແລະ ຕິຊົມກັນຢ່າງແຂງແຮງ ແລະ ແບບສ້າງສັນ, ທັງເຊີດຊູສະຕິຮັບຜິດຊອບ ແລະ ຮ່ວມກັນປຶກສາຫາລືຈິງຈັງ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ສາມາດກຳນົດແຜນເຄື່ອນໄຫວ ແກ້ໄຂບັນຫາເກົ່າທີ່ຍັງຄົງຄ້າງ ແລະ ຮັບມືກັບບັນຫາທີ່ເກີດໃໝ່ ຢ່າງເປັນເຈົ້າການ.

+ ເອົາໃຈໃສ່ຍົກສູງຄຸນນະພາບຂອງສະມາຊິກພັກ ຕິດພັນກັບເພີ່ມທະວີການຄຸ້ມຄອງດ້ານລະບຽບວິໄນ, ຊຸກຍູ້ສົ່ງເສີມຂະບວນການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ຕິດພັນກັບການສຶກສາອົບຮົມແນວຄິດ ແລະ ຄຸນສົມບັດຂອງປະທານໄກສອນ ພົມວິຫານ, ພັດທະນາດ້ານຄວາມຮູ້ ແລະ ປະສົບການໃນ

ການເຄື່ອນໄຫວນຳພາການເມືອງ ແລະ ວິຊາສະເພາະໃຫ້ສະມາຊິກພັກ ໃຫ້ສູງຂຶ້ນເລື້ອຍໆ. ໃນການຂະຫຍາຍສະມາຊິກພັກໃໝ່ ຕ້ອງຖືຄຸນນະພາບເປັນຫຼັກ, ເດັດດ່ຽວແກ້ໄຂສະມາຊິກພັກ ທີ່ເສຍທາດຂາດຄຸນ ຂາດສະຕິຮັບຜິດຊອບຕໍ່ໜ້າທີ່ ແລະ ຂາດຄວາມເປັນແບບຢ່າງ ໃນການດຳລົງຊີວິດ ຫຼື ມີການລະເມີດວິໄນຂອງພັກ ແລະ ກົດໝາຍຂອງລັດອອກຈາກການຈັດຕັ້ງ ດ້ວຍວິທີການ ແລະ ມາດຕະການຕົວຈິງ ຢ່າງເດັດຂາດ ແລະ ທັນການ.

**③ ສົມທົບແໜ້ນ ລະຫວ່າງການເພີ່ມທະວີການນຳພາແບບລວມສູນເອກະພາບຂອງສູນກາງພັກ ກັບຄວາມເປັນເຈົ້າການປະດິດສ້າງຂອງຄະນະພັກ ຢູ່ແຕ່ລະຂົງເຂດ ແລະ ແຕ່ລະຂັ້ນ ໃນການຈັດຕັ້ງຜັນຂະຫຍາຍບັນດາມະຕິຂອງພັກ.**

+ ສູນກາງພັກ, ໂດຍສະເພາະແມ່ນກົມການເມືອງ ແລະ ຄະນະເລຂາທິການສູນກາງ ຕ້ອງຮັບປະກັນບົດບາດເປັນໃຈກາງ ໃນການຫັນມະຕິກອງປະຊຸມໃຫຍ່ຂອງພັກ ແລະ ມະຕິ - ຄຳສັ່ງ ຂອງສູນກາງພັກເປັນບັນດາເນື້ອໃນຕົ້ນຕໍໃນທາງປະຕິບັດ, ພ້ອມທັງສ້າງ ແລະ ປະຕິບັດກົນໄກການຊີ້ນຳ ຕິດຕາມ ກວດກາການປະຕິບັດບັນດາເນື້ອໃນເຫຼົ່ານັ້ນຢູ່ທຸກຂົງເຂດ ແລະ ທຸກຂັ້ນ ຢ່າງເປັນລະບົບ.

+ ບັນດາຄະນະພັກ ແລະ ຜູ້ນຳພາ - ຄຸ້ມຄອງໃນທຸກຂົງເຂດ ແລະ ທຸກຂັ້ນ ຕ້ອງຮັບຜິດຊອບໂດຍກົງຕໍ່ການຜັນຂະຫຍາຍມະຕິ, ຄຳສັ່ງຂອງຂັ້ນເທິງ ໃຫ້ກາຍເປັນໜ້າວຽກຕົວຈິງຢ່າງເປັນເຈົ້າການ ແລະ ປະດິດສ້າງ, ພ້ອມທັງ ຕິດຕາມຊຸກຍູ້ຄຽງຄູ່ກັບການຕິດຕາມກວດກາການປະຕິບັດບັນດາໜ້າທີ່ ແລະ ຄຸ້ມຄອງດ້ານລະບຽບວິໄນ ຕໍ່ພະນັກງານ -

ສະມາຊິກພັກ ໃນຄວາມຮັບຜິດຊອບຂອງຕົນ, ຮັບປະກັນໃຫ້ເກີດຂະບວນການຕົວຈິງ ແລະ ມີໝາກຜົນອັນຈະແຈ້ງ.

+ ມີການຕິດຕາມຊີ້ນຳ ກວດກາ ແລະ ປະເມີນຜົນຢ່າງເປັນປະຈຳຂອງສູນກາງພັກ ຕໍ່ຄະນະພັກຂັ້ນຕ່າງໆ ໂດຍຜ່ານບັນດາອົງການທີ່ກ່ຽວຂ້ອງຂອງສູນກາງພັກ.

**④ ເພີ່ມທະວີການຕິດຕາມກວດກາ ແລະ ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ຢູ່ພາຍໃນພັກ.**

+ ຄະນະພັກແຕ່ລະຂັ້ນ ຕ້ອງຖືການຕິດຕາມຊຸກຍູ້, ກວດກາ ແລະ ຕີລາຄາຕໍ່ການເຄື່ອນໄຫວຂອງການຈັດຕັ້ງລວມໝູ່ ກໍຄືຂອງບຸກຄົນພະນັກງານ - ສະມາຊິກພັກ ໃນການປະຕິບັດບັນດາຫຼັກການຈັດຕັ້ງເຄື່ອນໄຫວອັນເປັນຖັ້ນຖານຂອງພັກ ເປັນເນື້ອໃນສຳຄັນ ແລະ ເປັນແບບແຜນທີ່ຂາດບໍ່ໄດ້ໃນການນຳພາຂອງຕົນ ທັງຖືການຕີຖອຍ ແລະ ສະກັດກັ້ນບັນດາປະກົດການຫຍໍ້ທໍ້ພາຍໃນການຈັດຕັ້ງ ແລະ ຖັນແຖວພະນັກງານ - ສະມາຊິກພັກ ທີ່ຢູ່ໃນທຸກຂົງເຂດວຽກງານ ແລະ ທຸກຂັ້ນ.

+ ຕ້ອງເອົາໃຈໃສ່ກວດກາ ແລະ ຕີລາຄາຢ່າງເປັນລະບົບ ກ່ຽວກັບສະຕິຕື່ນຕົວຕໍ່ການຈັດຕັ້ງ ຄວາມສາມາດປະຕິບັດໜ້າທີ່ ແລະ ການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ, ຄວາມເປັນແບບຢ່າງໃນການດຳລົງຊີວິດຂອງສະມາຊິກພັກ, ພ້ອມທັງແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງ ຂອງແຕ່ລະເປົ້າໝາຍຢ່າງທັນການ ແລະ ເຂັດຂາດ.

+ ເພີ່ມຄວາມເອົາໃຈໃສ່ ໃນການຕິດຕາມ - ກວດກາ ແກ້ໄຂການລະເມີດລະບຽບກົດໝາຍ, ສວຍໃຊ້ໜ້າທີ່ຕຳແໜ່ງ, ອາດຍາສິດ ແລະ ສະພາບຫຍໍ້ທໍ້ອື່ນໆ ໃນການຈັດຕັ້ງ ແລະ ຖັນແຖວສະມາຊິກພັກ, ພະນັກງານ.

+ ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ທັງຕ້ອງຮັບປະກັນບົດບາດເປັນໃຈກາງ ແຫ່ງຄວາມສາມັກຄີເປັນປຶກແຜ່ນ, ທັງເປັນສູນລວມໃນການຊີ້ນຳປະຕິບັດການປັບປຸງປົວແປງພັກ ໃຫ້ປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ ໂດຍຕິດພັນກັບການເຮັດໃຫ້ການກວດກາຂອງພັກ ກໍຄືການກວດກາຕາມສາຍລັດ ແລະ ຂອງການຈັດຕັ້ງມະຫາຊົນ ເຄື່ອນໄຫວຢ່າງເປັນລະບົບ ແລະ ມີປະສິດທິພາບ.

+ ຕ້ອງດຳເນີນການປັບປຸງບູລະນະກົງຈັກການຈັດຕັ້ງ, ກົນໄກ, ລະບຽບການເຄື່ອນໄຫວ ແລະ ຍົກລະດັບຄວາມສາມາດຂອງບຸກຄະລາກອນ ຄະນະກວດກາຂອງພັກແຕ່ລະຂັ້ນ.

### 3.8. ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ໃນວຽກງານພະນັກງານ.

**① ສ້າງ ແລະ ປະຕິບັດແຜນກຳນົດພະນັກງານຢ່າງເປັນລະບົບ:**

+ ດຳເນີນການບຳລຸງ - ກໍ່ສ້າງພະນັກງານ ທີ່ນອກໃນເປົ້າໝາຍຢ່າງເປັນລະບົບ ຜ່ານໂຮງຮຽນ ແລະ ຜ່ານຂະບວນການຕົວຈິງ;

+ ຊຸກຍູ້ ແລະ ປຸກລະດົມການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນໃນການປະພຶດປະຕິບັດຂອງພະນັກງານ - ສະມາຊິກພັກ ທີ່ນອນໃນແຜນກຳນົດ, ບັນລຸຕາມມາດຖານ ແລະ ເງື່ອນໄຂ ໃຫ້ແກ່ຂະບວນການເລືອກເຟັ້ນ ແລະ ຈັດວາງເຂົ້າໃນຕຳແໜ່ງນຳພາ - ຄຸ້ມຄອງ.

+ ທຸກຂັ້ນຕອນຂອງການຈັດຕັ້ງປະຕິບັດແຜນກຳນົດພະນັກງານ ຕ້ອງສອດຄ່ອງກັບຫຼັກການພື້ນຖານຂອງພັກ, ຮັບປະກັນລັກສະນະພາວະວິໄສເປີດເຜີຍ, ຢູ່ໃນຄວາມຮັບຜິດຊອບໂດຍກົງ ແລະ ເດັດຂາດຂອງຄະນະພັກແຕ່ລະຂັ້ນ.

**② ປັບປຸງລະບອບເລືອກເຟັ້ນ ແລະ ສັບຊ້ອນພະນັກງານ:**

+ ປັບປຸງບູລະນະມາດຕະຖານ ພະນັກງານນຳພາຄຸ້ມຄອງແຕ່ລະປະເພດ ໃຫ້ລະອຽດ, ສ່ອງແສງຢ່າງຈະແຈ້ງ ເຖິງເປົ້າໝາຍຕອບສະໜອງການເລັ່ງທວງ ຂອງສະພາບການໃນໄລຍະໃໝ່.

+ ປະຕິບັດເຂັ້ມງວດ ການຕີລາຄາປະເມີນຜົນພະນັກງານຕາມມາດຖານແຕ່ລະດ້ານ ພ້ອມທັງພິຈາລະນາພະນັກງານ ໂດຍອີງໃສ່ສະຕິຄວາມຮັບຜິດຊອບ, ຄວາມເສຍສະລະເພື່ອສ່ວນລວມ, ຄວາມສາມາດປະດິດສ້າງ ແລະ ກ້າເຮັດ ກ້າຮັບຜິດຊອບ ແລະ ປະສິດທິຜົນຕົວຈິງໃນການປະຕິບັດໜ້າທີ່ໄລຍະຜ່ານມາ ເພື່ອເປັນບ່ອນອີງໃນການພິຈາລະນາແຕ່ງຕັ້ງສັບຊ້ອນພະນັກງານ.

+ ຖືການພິຈາລະນາແບບ "ມີຂຶ້ນ - ມີລົງ" "ມີເຂົ້າ - ມີອອກ" ແລະ ມີການເຄື່ອນຍ້າຍບ່ອນປະຈຳການ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານກາຍເປັນເລື່ອງປົກກະຕິ ໃນການຈັດວາງ, ສັບຊ້ອນພະນັກງານ.

+ ປັບປຸງບູລະນະບັນດາຂໍ້ກຳນົດອັນລະອຽດ ກ່ຽວກັບການເລື່ອນ ແລະ ປົດຕຳແໜ່ງພະນັກງານ

**③ ປັບປຸງລະບອບນະໂຍບາຍ ແລະ ສະຫວັດດີການຕໍ່ພະນັກງານຢ່າງຕັ້ງໜ້າ ແລະ ສົມເຫດສົມຜົນ:**

+ ປັບປຸງແກ້ໄຂເງິນເດືອນ ແລະ ລະບອບນະໂຍບາຍສະຫວັດດີການຕ່າງໆ ຕໍ່ພະນັກງານ - ລັດຖະກອນ ເພື່ອຮັບປະກັນລາຍຮັບປົກກະຕິແຕ່ລະເດືອນຂອງເຂົາເຈົ້າ ບໍ່ຕ່ຳກວ່າຄວາມຈຳເປັນ ຂັ້ນພື້ນຖານຂອງການດຳລົງຊີວິດ ແລະ ຮັບປະກັນການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນການ, ຄຽງຄູ່ກັບການຫຼຸດຜ່ອນຈຳນວນພົນ

ໃນກົງຈັກ, ເພີ່ມບໍລິມາດວຽກທີ່ແຕ່ລະຄົນຕ້ອງແບກຫາບ ແລະ ທັນ ເປັນທັນສະໄໝໃນລະບົບການຈັດຕັ້ງກົງຈັກ ຂອງບັນດາການຈັດຕັ້ງໃນ ລະບົບການເມືອງ.

+ ຕ້ອງກຳນົດຢ່າງຈະແຈ້ງ ຮັດກຸມ ແລະ ປະຕິບັດຢ່າງໂປ່ງໃສ ລະບອບອຸດໜູນຜົນງານດີເດັ່ນ ທີ່ຕິດພັນກັບການປະດິດສ້າງ ໃນການ ປະຕິບັດໜ້າທີ່, ລວມທັງໃນການພັດທະນາຄວາມສາມາດ ການນຳໃຊ້ ຜົນສຳເລັດຂອງວິທະຍາສາດ - ເຕັກໂນໂລຊີ ເພື່ອປັບປຸງສະມັດຕະພາບ ງານຕົວຈິງ.

**④ ປະຕິບັດລະບອບຄຸ້ມຄອງ, ຕິດຕາມກວດກາ ແລະ ບັນດາ ມາດຕະການທາງວິໄນ ຕໍ່ພະນັກງານຢ່າງເຂັ້ມງວດ.**

+ ການຄຸ້ມຄອງພະນັກງານ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເປັນລະບົບ ນັບແຕ່ການເກັບກຳບັນຊີ ສະຖິຕິ, ປະຫວັດການເຄື່ອນ ໄຫວ ແລະ ການປ່ຽນແປງຂອງສະພາບພະນັກງານ - ສະມາຊິກພັກ ແລະ ລັດຖະກອນ.

+ ສ້າງ ແລະ ປັບປຸງລະບອບລະບຽບການ ໃຫ້ເປັນລະບົບຮັດ ກຸມ ເພື່ອສ້າງສະພາບແວດລ້ອມອັນດີ ໃຫ້ພະນັກງານປັບປຸງຕົນເອງ ແລະ ເສີມຂະຫຍາຍການປະດິດສ້າງ, ຮັບປະກັນປົກປ້ອງພະນັກງານທີ່ ກ້າຄິດ ກ້າເຮັດ ກ້າບຸກທະລຸ ເພື່ອຜົນປະໂຫຍດລວມ.

+ ຖືສຳຄັນການປະເມີນຜົນຕໍ່ພະນັກງານ ຊຶ່ງນອກຈາກພິຈາລະ ນາຈາກຜົນສຳເລັດໃນວຽກງານຕົວຈິງແລ້ວ ຍັງຜ່ານການທາບທາມທາງ ສຽງຈາກມະຫາຊົນ ແລະ ສັງຄົມ ຕໍ່ພະນັກງານທີ່ພວມຢູ່ໃນຕຳແໜ່ງ ໂດຍຮັບປະກັນລັກສະນະ ປະຊາທິປະໄຕ ເປີດເຜີຍ ແລະ ມີຫຼັກການ.

+ ສ້າງກົນໄກກວດກາຄວບຄຸມການໃຊ້ສິດອຳນາດ ໃນການປະຕິບັດໜ້າທີ່ຂອງພະນັກງານນຳພາ - ຄຸ້ມຄອງແຕ່ລະຂັ້ນ.

+ ເສີມຂະຫຍາຍບົດບາດຕິດຕາມກວດກາ ຂອງບັນດາການຈັດຕັ້ງທີ່ເປັນຕົວແທນຂອງປະຊາຊົນ, ທັງຮັບປະກັນໃຫ້ທຸກຄຳເຫັນ ຫຼື ການຕຳໜິສິ່ງຂ່າວ ກ່ຽວກັບພຶດຕິກຳບໍ່ເໝາະສົມຂອງພະນັກງານ ຕ້ອງໄດ້ຮັບພິຈາລະນາ ແລະ ແກ້ໄຂຢ່າງຖືກຕ້ອງຈາກຄະນະພັກ ທີ່ກ່ຽວຂ້ອງ.

## III. ມາດຕະການ ແລະ ວິທີການ ໃນການສືບຕໍ່ນຳພາຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XI ຂອງພັກ.

1). ໃຫ້ກຳມະການສູນກາງພັກ, ຄະນະພັກແຕ່ລະຂັ້ນ ຕ້ອງຄົ້ນຄວ້າ, ກຳແໜ້ນບັນດາທັດສະນະພື້ນຖານ, ແນວຄິດຊີ້ນຳ, ບັນດາເນື້ອໃນໃຈກາງ ແລະ ບາງບັນຫາໃໝ່ໃນລາຍງານການເມືອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ. ກຳແໜ້ນເປົ້າໝາຍ ແລະ ໜ້າທີ່ລວມ, ບັນດາຄາດໝາຍຕົ້ນຕໍ ໃນການພັດທະນາປະເທດຊາດໃນ 5 ປີ ຕໍ່ໜ້າ; ເຂົ້າໃຈເນື້ອໃນຂອງແຕ່ລະຂົງເຂດທີ່ໄດ້ຍົກຂຶ້ນໃນລາຍງານການເມືອງ ໂດຍສະເພາະແມ່ນທິດທາງ, ໜ້າທີ່ຢ່າງຖືກຕ້ອງ ເພື່ອສ້າງແຜນດຳເນີນງານ, ແຜນການ, ປັບປຸງກົນໄກ, ນະໂຍບາຍແນໃສ່ເສີມຂະຫຍາຍບັນດາໝາກຜົນທີ່ຍາດມາໄດ້, ແກ້ໄຂບັນຫາອ່ອນ - ຄົງຄ້າງ ໃນແຕ່ລະຂົງເຂດວຽກງານ, ຂະແໜງການ. ບັນດາທິດທາງ, ໜ້າທີ່ລວມທີ່ໄດ້ກຳນົດຕ້ອງໄດ້ຄົ້ນຄວ້າລະອຽດ ຕິດພັນກັບເງື່ອນໄຂຄວາມສາມາດຂອງທ້ອງຖິ່ນ, ຂະແໜງການຕົນ ເພື່ອຊີ້ນຳການຈັດຕັ້ງປະຕິບັດໃຫ້ມີໝາກຜົນຕົວຈິງ.

2). ມອບໃຫ້ຄະນະພັກ ກະຊວງ, ອົງການ ແລະ ທ້ອງຖິ່ນ ເປັນຜູ້ຮັບຜິດຊອບຈັດຕັ້ງການເຊື່ອມຊຶມ ແລະ ຜັນຂະຫຍາຍເປັນອັນລະອຽດຕິດແທດກັບຂະແໜງການ ແລະ ທ້ອງຖິ່ນຂອງຕົນ ໂດຍແມ່ນ

ສະຫາຍເລຂາຄະນະພັກ ເປັນຜູ້ນໍາພາຊີ້ນໍາໂດຍກົງ. ແຕ່ລະອົງຄະນະພັກ ຕ້ອງມີຄວາມຮັບຜິດຊອບນໍາພາສ້າງແຜນການຈັດຕັ້ງເຊື່ອມຊຶມ ຮໍ່າຮຽນ ແລະ ຜັນຂະຫຍາຍປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ສະມາຊິກພັກ, ພະນັກງານ ແລະ ຊັ້ນຄົນຕ່າງໆ ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ. ການຈັດຕັ້ງເຊື່ອມຊຶມ, ຮໍ່າຮຽນມະຕິ ຕ້ອງມີການຕີລາຄາ, ປະເມີນຜົນ, ເນັ້ນຄວາມເຂົ້າໃຈ ແລະ ຄວາມສາມາດຂອງສະມາຊິກພັກ - ພະນັກງານ ໃນການຫັນມະຕິເຂົ້າສູ່ວຽກງານຕົວຈິງຂອງຂະແໜງການ ແລະ ທ້ອງຖິ່ນຂອງຕົນ, ຫຼີກເວັ້ນການເຮັດແບບຮູບການ, ເປັນພຽງຄໍາຂວັນ ແລະ ຄໍາຮຽກຮ້ອງແບບລວມໆ.

- ມອບໃຫ້ ຄະນະພັກ ຢູ່ແຕ່ລະບ່ອນເປັນຜູ້ຈັດຕັ້ງປະຕິບັດໂດຍສົມທົບກັບການເສີມຂະຫຍາຍພາລະບົດບາດ, ໜ້າທີ່ຂອງຄະນະໂຄສະນາອົບຮົມແຕ່ລະຂັ້ນ, ໃນນັ້ນ ສະຫາຍເລຂາຄະນະພັກກະຊວງ, ອົງການ, ແຂວງ, ນະຄອນຫຼວງ ແລະ ເມືອງ ເປັນຜູ້ຊີ້ນໍາ - ບັນຊາໂດຍກົງ, ສະຫາຍເລຂາ ແລະ ຄະນະປະຈໍາພັກ ເປັນຜູ້ຮັບຜິດຊອບບັນຍາຍເອກະສານ. ສໍາລັບຢູ່ຮາກຖານ ແມ່ນໃຫ້ເລຂາພັກເມືອງ ຫຼື ຄະນະປະຈໍາພັກເມືອງ ເປັນຜູ້ຊີ້ນໍາ.

- ມອບໃຫ້ຄະນະເລຂາທິການສູນກາງພັກ ຮັບຜິດຊອບຊີ້ນໍາການ ຈັດຕັ້ງເຊື່ອມຊຶມມະຕິ XI ສໍາລັບນັກທຸລະກິດ ໂດຍມີການສ້າງເນື້ອໃນສະເພາະທີ່ເນັ້ນການສ້າງ ແລະ ປະຕິບັດກົນໄກຄຸ້ມຄອງຕາມກົດໝາຍທີ່ເຂັ້ມງວດ ແລະ ໂປ່ງໃສ; ການສ້າງ ແລະ ປັບປຸງວິສາຫະກິດ ທີ່ມີລະບົບການບໍລິຫານທຸລະກິດທີ່ທັນສະໄໝ, ເຂັ້ມແຂງ ແລະ ເຄື່ອນໄຫວຢ່າງໂປ່ງໃສ, ສ້າງຄວາມພ້ອມແກ່ການແຂ່ງຂັນ ແລະ ເຊື່ອມໂຍງ; ຕ້ານ, ສະກັດກັ້ນບັນດາປະກົດການຫຍໍ້ທໍ້ ໃນການຄຸ້ມຄອງຂອງລັດຕໍ່

ເສດຖະກິດ ແລະ ໃນການສວຍໃຊ້ຊ່ອງວ່າງຂອງກົດໝາຍ ເພື່ອດຳເນີນທຸລະກິດທີ່ບໍ່ໂປ່ງໃສ ແລະ ບໍ່ຮັບປະກັນຄວາມຍືນຍົງ. ຄະນະໂຄສະນາອົບຮົມສູນກາງພັກ ສືບຕໍ່ເປັນເຈົ້າການກະກຽມເອກະສານ ຮັບໃຊ້ເປົ້າໝາຍດັ່ງດ່າວ.

- ບັນດາສະຖາບັນຄົ້ນຄວ້າ, ສິດສອນທິດສະດີການເມືອງໃຫ້ອີງໃສ່ມະຕິ ເພື່ອສ້າງເນື້ອໃນຫຼັກສູດ, ຫົວຂໍ້ຄົ້ນຄວ້າທິດສະດີ - ສັງລວມພຶດຕິກຳ ເພື່ອຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ; ຮີບຮ້ອນປັບປຸງຫຼັກສູດ, ເນື້ອໃນສິດສອນທິດສະດີການເມືອງໃຫ້ສອດຄ່ອງກັບແຕ່ລະເປົ້າໝາຍລະອຽດ.

- ວຽກງານໂຄສະນາກ່ຽວກັບມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ຕ້ອງໄດ້ດຳເນີນຢ່າງກວ້າງຂວາງ, ເລິກເຊິ່ງ ແລະ ຕໍ່ເນື່ອງດ້ວຍຮູບການ, ວິທີການ ທີ່ຫຼາກຫຼາຍ, ອຸດົມສົມບູນ, ຈັບອົກຈັບໃຈ ແລະ ສອດຄ່ອງກັບແຕ່ລະເປົ້າໝາຍ ເພື່ອທຸກຊັ້ນຄົນໃນສັງຄົມ ໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ. ສື່ມວນຊົນປະເພດຕ່າງໆ ສືບຕໍ່ເຜີຍແຜ່ບັນດາເນື້ອໃນຕົ້ນຕໍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກໍຄືເນື້ອໃນເອກະສານເຊື່ອມຊຶມ ຢ່າງເປັນປະຈຳ ແລະ ຕໍ່ເນື່ອງ ເພື່ອປຸກລະດົມ ແລະ ຍູ້ຂະບວນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະ ຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ຟົດຟື້ນ, ແຂງແຮງ ແລະ ປະກົດຜົນເປັນຈິງ.

3). ອີງໃສ່ທີ່ຕັ້ງ, ບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບການເມືອງ ທີ່ໄດ້ຮັບການມອບໝາຍ, ອົງການນຳຂອງພັກ - ລັດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ມີຄວາມຮັບຜິດຊອບໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ດັ່ງນີ້:

- ຢູ່ຂັ້ນສູນກາງ, ຄະນະບໍລິຫານງານສູນກາງພັກ ດຳເນີນການເຊື່ອມຊຶມໃນກອງປະຊຸມຄົບຄະນະຄັ້ງທີ 2 ໂດຍຜັນຂະຫຍາຍເປັນແຜນດຳເນີນງານໝົດສະໄໝທີ XI ເຊິ່ງນອກຈາກຊີ້ນຳບັນຫາທີ່ມີລັກສະນະກວມລວມແລ້ວ, ຍັງຈະໄດ້ກຳນົດຫົວຂໍ້ສະເພາະ ທີ່ມີລັກສະນະຍຸດທະສາດ ທີ່ນອນຢູ່ໃນວາລະການຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ ຕະຫຼອດສະໄໝທີ XI ທັງການສ້າງຄວາມເຂັ້ມແຂງດ້ານການພັດທະນາເສດຖະກິດ - ສັງຄົມ, ການປັບປຸງກໍ່ສ້າງລະບົບການເມືອງ, ການບູລະນະ ແລະ ປັບປຸງກົງຈັກ - ພະນັກງານ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ກັບການແກ້ໄຂບັນຫາທີ່ອັດຕັນ, ກົດໜ່ວງຖ່ວງດຶງ ແລະ ເປັນອຸປະສັກອັນໃຫຍ່ຫຼວງ ຕໍ່ການຈັດຕັ້ງປະຕິບັດໃນໄລຍະຜ່ານມາ.

- ບົນພື້ນຖານ 6 ເປົ້າໝາຍ, 23 ແຜນງານ ແລະ 300 ກວ່າໂຄງການທີ່ໄດ້ວາງອອກ ໃນແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ IX, ມອບໃຫ້ລັດຖະບານ ໄຈ້ອອກມາເປັນໂຄງການໃຫຍ່ລະດັບຊາດ, ເປັນບັນດາໂຄງການເລັ່ງດ່ວນທີ່ຍົກເປັນວາລະແຫ່ງຊາດ ເຊິ່ງຕ້ອງໄດ້ສຸມການຊີ້ນຳ, ສຸມກຳລັງຄົນ, ສຸມທຶນຮອນ ແລະ ການເຂົ້າຮ່ວມຂອງສັງຄົມ ເພື່ອແກ້ໄຂບັນຫາໃຫ້ຕົກໄປເປັນກ້າວໆ ເຊັ່ນ: <u>ບັນຫາໂຄວິດ-19, ບັນຫາໜີ້ສິນ, ການເພີ່ມລາຍຮັບ, ການຄຸ້ມຄອງອັດຕາແລກປ່ຽນເງິນຕາຕ່າງປະເທດ, ການສົ່ງເສີມການຜະລິດພາຍໃນ - ຄຸ້ມຄອງລາຄາສິນຄ້າ, ບັນຫາປະຢັດ - ຕ້ານການຟຸມເຟືອຍ, ການປະຕິຮູບລັດວິສາຫະກິດ, ບັນຫາທີ່ດິນ, ການແກ້ໄຂຄວາມທຸກຍາກ, ບັນຫາຢາເສບຕິດ, ບັນຫາແຮງງານ, ບັນຫາຂອດຂັ້ນບໍລິຫານ, ບັນຫາກົງຈັກ - ພະນັກງານ, ບັນຫາເງິນເດືອນ - ນະໂຍບາຍອຸດໜູນຕໍ່ພະນັກງານ</u> ແລະ

ບັນຫາອື່ນໆ. ສິ່ງສຳຄັນທີ່ສຸດທີ່ມີຄວາມໝາຍເປັນຂໍກະແຈ ແມ່ນຕ້ອງຮີບຮ້ອນວາງແຜນປະຕິຮູບ ໂຄງສ້າງເສດຖະກິດ, ກົນໄກແບ່ງຂັ້ນຄຸ້ມຄອງເສດຖະກິດຕາມທິດສູນກາງ ປະຕິບັດພາລະບົດບາດຄຸ້ມຄອງມະຫາພາກ, ທ້ອງຖິ່ນເປັນເຈົ້າການຮັບຜິດຊອບນໍາພາ, ຊີ້ນໍາ ແລະ ບັນຊາຮອບດ້ານ.

ໃນການແກ້ໄຂບັນຫາຕົວຈິງ ໃນແຕ່ລະໄລຍະ, ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ຊີ້ນໍາລັດຖະບານຕັ້ງໜ້າປັບປຸງ, ດັດແກ້ ຫຼື ອອກແຜນນະໂຍບາຍ, ລະບອບ, ກົນໄກ, ນິຕິກໍາຕ່າງໆ ເພື່ອແກ້ໄຂ ແລະ ຈັດຕັ້ງປະຕິບັດໃຫ້ເປັນຈິງ.

- ຄະນະພັກ ກະຊວງ, ອົງການ ແລະ ແຂວງ ເປັນເຈົ້າການຄົ້ນຄວ້າ, ກວດກາຄືນ ແຜນດໍາເນີນງານຂອງຕົນ ກໍຄືແຜນພັດທະນາເສດຖະກິດ - ສັງຄົມ ຂອງຂະແໜງການ ແລະ ທ້ອງຖິ່ນ ອັນໃດບໍ່ທັນສອດຄ່ອງກັບມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XI ຫຼື ບໍ່ທັນຈະແຈ້ງ - ຊັດເຈນ ແມ່ນຕ້ອງປັບປຸງ - ເພີ່ມຕື່ມ ໃຫ້ສອດຄ່ອງ ແລະ ເປັນລະບົບກວ່າເກົ່າ, ທັງຊີ້ນໍາການຜັນຂະຫຍາຍ ເປັນແຜນປະຕິບັດງານຂອງຕົນ ແລະ ຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດໃຫ້ເປັນລະບົບ, ຕໍ່ເນື່ອງ, ເປັນຂະບວນການຕົວຈິງຂອງມະຫາຊົນຢ່າງກວ້າງຂວາງ ແລະ ແຂງແຮງ.

- ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ບັນດາອົງການເສນາທິການຊ່ວຍສູນກາງພັກ ຄົ້ນຄວ້າ ອອກນິຕິກໍາ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດລະບຽບຂອງພັກ ສະໄໝທີ XI ໃຫ້ຄົບຖ້ວນ ແລະ ສາມາດຈັດຕັ້ງປະຕິບັດໃຫ້ສັກສິດ, ເຂັ້ມງວດ ແລະ ມີປະສິດທິຜົນ.

4). ດຳເນີນການປັບປຸງກົງຈັກ, ພະນັກງານ ໃຫ້ມີຄວາມສອດຄ່ອງກັບສະພາບເສດຖະກິດ - ສັງຄົມ ກໍຄືຄວາມສາມາດຕົວຈິງຂອງປະເທດຊາດ ແລະ ທ່າອ່ຽງຍຸກສະໄໝ ຕາມທິດຫຼຸດຜ່ອນກຳລັງພົນ, ເພີ່ມຄວາມສາມາດ ໃນການເຄື່ອນໄຫວຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານຂອງກົງຈັກຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

5). ປັບປຸງກົນໄກການນຳພາຊີ້ນຳ, ລະບອບແບບແຜນເຮັດວຽກຂອງສູນກາງພັກ, ລັດຖະບານ ແລະ ກະຊວງ, ອົງການ, ທ້ອງຖິ່ນໃນການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ໃຫ້ມີວິທະຍາສາດ ແລະ ແທດຕົວຈິງ.

ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ລົງເຄື່ອນໄຫວຊີ້ນຳຢູ່ທ້ອງຖິ່ນ ແລະ ຂະແໜງການຕ່າງໆ ຢ່າງແຂງແຮງ ແລະ ຕໍ່ເນື່ອງ, ຮັບປະກັນກຳນົດຈຸດສຸມຂອງບັນຫາ ທີ່ຈະຕ້ອງສຸມແກ້ໄຂໃນແຕ່ລະບ່ອນ. ຫ້ອງວ່າການສູນກາງພັກ ສົມທົບກັບບັນດາຄະນະພັກແຂວງ, ກະຊວງ, ອົງການ ເພື່ອກະກຽມເນື້ອໃນເຄື່ອນໄຫວໃຫ້ຈະແຈ້ງ, ທັງຊ່ວຍສູນກາງ ຕິດຕາມການຈັດຕັ້ງຜັນຂະຫຍາຍໃນແຕ່ລະໄລຍະຢ່າງຕໍ່ເນື່ອງ ແລະ ແທດກັບຕົວຈິງ.

6). ດຳເນີນການກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໄລຍະກາງສະໄໝ ຕິດພັນກັບການດຳເນີນຊີວິດການເມືອງ ປັບປຸງປົວແປງພັກ ແລະ ການປະເມີນຄວາມຮັບຜິດຊອບຂອງຄະນະພັກ - ຄະນະນຳແຕ່ລະຂັ້ນ (ສູນກາງ, ກະຊວງ, ອົງການ, ແຂວງ ແລະ ເມືອງ). ຈາກນັ້ນສຸມໃສ່ແກ້ໄຂຜົນການດຳເນີນຊີວິດການເມືອງ, ຜົນການປະເມີນຜົນຄວາມຮັບຜິດຊອບແຕ່ລະກໍລະນີຢ່າງເຂັ້ມງວດ ຕາມກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ.

7). ພາຍຫຼັງຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃນໄລຍະຕົ້ນສຳເລັດ, ໃຫ້ແຕ່ລະຄະນະພັກ ສະຫຼຸບຕີລາຄາ, ຖອດຖອນບົດຮຽນ ລາຍງານຄະນະເລຂາທິການສູນກາງພັກ (ໂດຍຜ່ານຫ້ອງວ່າການສູນກາງພັກ). ພ້ອມນັ້ນກໍໃຫ້ມີການປະເມີນຜົນເປັນແຕ່ລະໄລຍະ ການຜັນຂະຫຍາຍປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຂອງກະຊວງ - ອົງການ ແລະ ທ້ອງຖິ່ນຂອງຕົນ ເພື່ອດັດປັບໃຫ້ສອດຄ່ອງ, ພ້ອມທັງປະຕິບັດລະບອບລາຍງານຕໍ່ສູນກາງ ຢ່າງເປັນປົກກະຕິ.

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

## 1. ອະລຳພະບົດ

ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແມ່ນແຜນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໃຫ້ກາຍເປັນແນວທາງການປະຕິບັດໃນແຕ່ລະຂົງເຂດວຽກງານ ແຕ່ສູນກາງລົງເຖິງທ້ອງຖິ່ນ, ແຜນດັ່ງກ່າວນີ້ ໄດ້ຖືກຮ່າງຂຶ້ນຕາມຄຳສັ່ງ ເລກທີ 05/ນຍ, ລົງວັນທີ 21 ພຶດສະພາ 2019, ໄປຄຽງຄູ່ກັບການປະເມີນກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ໄດ້ນຳໃຊ້ວິທີວິທະຍາ ໂດຍອີງໃສ່ຜົນໄດ້ຮັບ (Outcome Based Approach) ຄືກັບການສ້າງແຜນ 5 ປີ ຄັ້ງທີ VIII ທີ່ຜ່ານມາ. ຂະບວນການສ້າງແຜນ 5 ປີ ຄັ້ງທີ IX ໄດ້ຜ່ານຂະບວນການຄົ້ນຄວ້າສາມະນາ, ກຳນົດຫົວຂໍ້ວິທະຍາສາດຕ່າງໆ, ການເກັບກຳຂໍ້ມູນ ແລະ ວິເຄາະວິໄຈຢ່າງເລິກເຊິ່ງ, ພ້ອມດຽວກັນນັ້ນ ກໍໄດ້ດຳເນີນການທາບທາມປະກອບຄຳເຫັນຢ່າງກວ້າງຂວາງ ຈາກຮາກຖານຂຶ້ນມາ, ແລກປ່ຽນກັບບັນດາກະຊວງຂະແໜງການ, ນັກຄົ້ນຄວ້າ - ນັກວິທະຍາສາດ, ບັນດາຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ, ໄດ້ນຳສະເໜີ ແລະ ຂໍທິດຊີ້ນຳຈາກກອງປະຊຸມສູນກາງ, ຄະນະເລຂາທິການ

ແລະ ກົມການເມືອງຫຼາຍຄັ້ງ, ຫຼ້າສຸດກໍໄດ້ຖືກຮັບຮອງເອົາໂດຍ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ແລະ ກະກຽມສະເໜີຂໍການຮັບຮອງຢ່າງເປັນທາງການ ຈາກກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະມາເຖິງນີ້.

**2. ຈຸດປະສົງ, ລະດັບຄາດໝາຍ:**

- ເພື່ອເຊື່ອມຊຶມເນື້ອໃນສຳຄັນ ຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ເຂົ້າສູ່ລວງເລິກ, ເຫັນໄດ້ສະພາບຄວາມເປັນຈິງຂອງການພັດທະນາປະເທດເຮົາ ໃນໄລຍະ 5 ປີທີ່ຜ່ານມາ ແລະ ທິດທາງຈຸດສຸມໃນ 5 ປີ ຕໍ່ໜ້າ ໄປພ້ອມກັບການຈັດຕັ້ງຜັນຂະຫຍາຍມະຕິ XI ຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ.

- ເພື່ອໃຫ້ບັນດາກະຊວງ, ຂະແໜງການ, ສູນກາງ ແລະ ທ້ອງຖິ່ນ ນຳໄປຈັດຕັ້ງຜັນຂະຫຍາຍໃຫ້ເປັນແຜນງານ, ໂຄງການ ບົນພື້ນຖານແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນຂອງຕົນ, ພ້ອມທັງຈັດລຽງບຸລິມະສິດຢ່າງມີຈຸດສຸມ, ລະດົມແຫຼ່ງທຶນເຂົ້າໃສ່ຢ່າງມີປະສິດທິຜົນ, ແຕ່ງຕັ້ງບຸກຄະລາກອນທີ່ມີຄຸນນະພາບ ເຂົ້າໃສ່ແຕ່ລະໜ້າວຽກ ດ້ວຍຄວາມຮັບຜິດຊອບສູງ.

- ເພື່ອຮັບປະກັນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ບັນລຸຕາມລະດັບຄາດໝາຍ, ທິດທາງໜ້າທີ່ ແລະ ບັນດາຕົວຊີ້ບອກທີ່ໄດ້ກຳນົດໄວ້, ໂດຍຕ້ອງມີການປະສານສົມທົບຢ່າງສະໜິດແໜ້ນພາຍໃນຂະແໜງການ ແລະ ທ້ອງຖິ່ນດ້ວຍກັນ, ປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ, ລັດຖະບານ - ຄູ່ຮ່ວມພັດທະນາ, ພາກລັດ - ພາກເອກະຊົນ ແລະ

ອົງການຈັດຕັ້ງທາງສັງຄົມຢ່າງກົມກຽວ ເຮັດໃຫ້ການຈັດຕັ້ງປະຕິບັດມີຄວາມສອດຄ່ອງ, ຄ່ອງແຄ້ວ, ໂລ່ງລ່ຽນ ແລະ ມີປະສິດທິຜົນ.

- ເພື່ອພ້ອມກັນ ສ້າງການຫັນປ່ຽນໃໝ່ຢ່າງຮອບດ້ານ, ເລິກເຊິ່ງ ເພື່ອການບຸກທະລຸແກ້ໄຂບັນຫາຫຍຸ້ງຍາກຂອງການພັດທະນາ ທີ່ປະເທດພວກເຮົາພວມປະເຊີນຢູ່ໃນປະຈຸບັນ ເປັນຕົ້ນແມ່ນ ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ - ການເງິນ - ເງິນຕາ, ການແກ້ໄຂຄວາມແຕກໂຕນທາງດ້ານສັງຄົມ ແລະ ປະກົດການຫຍໍ້ທໍ້ຕ່າງໆ ເພື່ອສູ້ຊົນນໍາພາປະເທດຂອງພວກເຮົາ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນນັບມື້ນັບດີຂຶ້ນເປັນກ້າວໆ.

**3. ເນື້ອໃນຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງ ທີ IX (2021-2025):**

**I. ພາກທີ 1: ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).**

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໄດ້ດໍາເນີນມາໃນສະພາບການສາກົນ ແລະ ພາກພື້ນ ມີການຜັນແປຢ່າງສັບສົນ ທັງມີກາລະໂອກາດ, ແຕ່ກໍມີສິ່ງທ້າທາຍທົດສອບນາໆປະການ ທີ່ສົ່ງຜົນກະທົບຕໍ່ການປົກປັກຮັກສາ ແລະ ສ້າງສາປະເທດຂອງພວກເຮົາບໍ່ໜ້ອຍ. ສໍາລັບຢູ່ພາຍໃນຂອງປະເທດເຮົາ ຄຽງຄູ່ກັບຂໍ້ສະດວກ ກໍພົບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ, ຄວາມບອບບາງທາງດ້ານເສດຖະກິດມະຫາພາກບວກກັບຜົນກະທົບ ຈາກໄພພິບັດທາງທໍາມະຊາດທີ່ຮ້າຍແຮງຢ່າງເນື່ອງ

ນິຕິລຽນຕິດ, ການລະບາດພະຍາດຕາມລະດູການ ລວມທັງການລະບາດ ຂອງພະຍາດໂຄວິດ - 19 ແລະ ອື່ນໆ ຊຶ່ງໄດ້ເຮັດໃຫ້ການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງນີ້ ເຕັມໄປດ້ວຍຄວາມສ່ຽງ, ມີຫຼາຍດ້ານບໍ່ໄດ້ຕາມລະດັບຄາດໝາຍທີ່ວາງໄວ້. ເຖິງຢ່າງໃດກໍ່ຕາມ, ໃນໄລຍະ 5 ປີ ຜ່ານມາ, ໂດຍພາຍໃຕ້ການຊີ້ນຳ - ນຳພາຂອງກົມການເມືອງສູນກາງພັກ ກໍຄືການຊຸກຍູ້ຕິດຕາມ ແລະ ກວດກາຢ່າງໃກ້ຊິດຂອງສະພາແຫ່ງຊາດ, ຄະນະລັດຖະບານຊຸດທີ 8 ໂດຍໄດ້ຮັບການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າຂອງຂະແໜງການ, ທ້ອງຖິ່ນ, ປະຊາຊົນບັນດາເຜົ່າ ແລະ ບັນດາຄູ່ຮ່ວມພັດທະນາ ເຮັດໃຫ້ທິດທາງຄາດໝາຍຫຼາຍດ້ານຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໄດ້ຮັບການຈັດຕັ້ງປະຕິບັດສຳເລັດຫຼາຍປະການ, ຊຶ່ງສາມາດສະຫລຸບຕີລາຄາໂດຍສັງເຂບ ດັ່ງນີ້:

### 1. ເປົ້າໝາຍດ້ານເສດຖະກິດ :

1.1. <u>ດ້ານການເຕີບໂຕຂອງເສດຖະກິດ</u> ສະເລ່ຍ 5 ປີ ເພີ່ມຂຶ້ນປະມານ 5,8% ຕໍ່ປີ, ຫຼຸດຄາດໝາຍທີ່ກຳນົດໄວ້ (ມະຕິສະພາ: 7,2%), GDP ຕໍ່ຫົວຄົນໃນປີ 2020 ບັນລຸໄດ້ 2.664 ໂດລາສະຫະລັດ ເທົ່າກັບ 89,45% ຂອງແຜນການ (ມະຕິສະພາ: 2.978 ໂດລາສະຫາລັດ), ໃນນີ້: ຂະແໜງກະສິກຳຂະຫຍາຍຕົວ 2,1% ກວມເອົາ 16,60% ຂອງ GDP, ຂະແໜງອຸດສາຫະກຳຂະຫຍາຍຕົວ 9,1% ກວມເອົາ 33,0% ຂອງ GDP, ຂະແໜງບໍລິການຂະຫຍາຍຕົວ 4,8% ກວມເອົາ 39,50% ຂອງ GDP ແລະ ພາສີ - ອາກອນ ຜະລິດຕະພັນ ແລະ ການນຳເຂົ້າຂະຫຍາຍຕົວ 5,2% ກວມເອົາ 10,9% ຂອງ GDP.

1.2 <u>ເສດຖະກິດມະຫາພາກ</u>ໂດຍລວມແລ້ວ ສືບຕໍ່ໄດ້ຮັບການຄຸ້ມຄອງໄດ້ໃນລະດັບທີ່ແນ່ນອນພໍສົມຄວນ ຊຶ່ງສະແດງອອກ ດັ່ງນີ້:

• ການລະດົມທຶນທົ່ວສັງຄົມປະຕິບັດໄດ້ 169.744,6 ຕື້ກີບ ເທົ່າກັບ 97,9% ຂອງແຜນການ ຫຼື ເທົ່າກັບ 26,9% ຂອງ GDP ໃນນີ້: ການລົງທຶນຈາກງົບປະມານລັດ ປະຕິບັດໄດ້ 17.099,9 ຕື້ກີບ ເທົ່າກັບ 10,1% ຂອງການລົງທຶນທັງໝົດ (ມະຕິສະພາ: 12-15%); ການລົງທຶນຈາກການຊ່ວຍເຫລືອທາງການ ເພື່ອການພັດທະນາ (ODA) ປະຕິບັດໄດ້ 29.666,1 ຕື້ກີບ ເທົ່າກັບ 17,5% ຂອງການລົງທຶນທັງໝົດ (ມະຕິສະພາ:15-24%); ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ 86.127,6 ຕື້ກີບ ເທົ່າກັບ 50,7% ຂອງການລົງທຶນທັງໝົດ (ມະຕິສະພາ: 40-49%); ການລົງທຶນຈາກລະບົບການເງິນ - ເງິນຕາ ປະຕິບັດໄດ້ 36.851 ຕື້ກີບ ເທົ່າກັບ 21,7% ຂອງການລົງທຶນທັງໝົດ (ມະຕິສະພາ21-23%).

• ໃນ 5 ປີຜ່ານມາ ເຖິງວ່າການເກັບລາຍຮັບພົບຄວາມຫຍຸ້ງຍາກຫຼາຍກໍ່ຕາມ, ແຕ່ລັດຖະບານ ໄດ້ເອົາໃຈໃສ່ແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ທີ່ມີລັກສະນະຊໍາເຮື້ອ ແລະ ສະສົມມາຫຼາຍປີໄດ້ທັງໝົດ 11.008,69 ຕື້ກີບ.

• ເກັບລາຍຮັບໄດ້ທັງໝົດ 120.672 ຕື້ກີບ ເທົ່າກັບ 98,4% ຂອງແຜນດັດແກ້, ສະເລ່ຍເທົ່າກັບ 15,9% ຂອງ GDP, ລາຍຈ່າຍທັງໝົດປະຕິບັດໄດ້ 15.351 ຕື້ກີບ ເທົ່າກັບ 19,8% ຂອງແຜນດັດແກ້ ສະເລ່ຍເທົ່າກັບ 23,3% ຂອງ GDP, ຂາດດຸນງົບປະມານສະເລ່ຍໄລຍະ 5 ປີ ຢູ່ໃນລະດັບ 4,23% ຂອງ GDP (ມະຕິສະພາ: ບໍ່ເກີນ 5% ຂອງ GDP), ອັດຕາເງິນເຟີ້ສະເລ່ຍຢູ່ໃນລະດັບ 2,57% ຕໍ່ປີ (ມະຕິສະພາ:

ຕ່ຳກວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ), ອັດຕາແລກປ່ຽນເງິນກີບທຽບໃສ່ໂດລາສະຫາລັດສະເລ່ຍອ່ອນຄ່າ 2,57% ແລະ ເງິນກີບທຽບໃສ່ເງິນບາດອ່ອນຄ່າ 5,0% (ມະຕິສະພາ: ± 5%), ຄັງສຳຮອງເງິນຕາຕ່າງປະເທດຢູ່ໃນລະດັບທີ່ສາມາດ ກຸ້ມການນຳເຂົ້າໄດ້ສະເລ່ຍ 4,26 ເດືອນ (ມະຕິສະພາ: ໃຫ້ໄດ້ຫລາຍກວ່າ 5 ເດືອນຂຶ້ນໄປ), ປະລິມານເງິນລວມ (M2) ເພີ່ມຂຶ້ນຕາມຈັງຫວະການຂະຫຍາຍຕົວຂອງເສດຖະກິດ ສະເລ່ຍໃນລະດັບ 13,48%ຕໍ່ປີ (ມະຕິສະພາ: ໃນລະດັບບໍ່ເກີນ 24%).

1.3. <u>ດ້ານການຜະລິດ, ການປຸງແຕ່ງ ແລະ ການບໍລິການ:</u> ເຫັນວ່າມີທ່າຂະຫຍາຍຕົວຕໍ່ເນື່ອງ ເຊິ່ງໃນນັ້ນມູນຄ່າການຜະລິດອຸດສາຫະກຳປຸງແຕ່ງແລະຫັດຖະກຳປະຕິບັດໄດ້ 52.728 ຕື້ກີບ ສະເລ່ຍເພີ່ມຂຶ້ນ 9,2% ຕໍ່ປີ, ມູນຄ່າການຈໍລະຈອນສິນຄ້າສະເລ່ຍເພີ່ມຂຶ້ນ 10,2% ຕໍ່ປີ, ການສົ່ງອອກກະແສໄຟຟ້າ 19.605 ລ້ານກິໂລວັດໂມງເທົ່າກັບ 7.203 ລ້ານໂດລາສະຫະລັດ ທຽບໃສ່ແຜນການ 5 ປີ ຄັ້ງທີ VII ເພີ່ມຂຶ້ນ 164%; ມູນຄ່າການສົ່ງອອກແຮ່ທາດປະຕິບັດໄດ້ 6,66 ຕື້ໂດລາສະຫະລັດ, ມູນຄ່າການສົ່ງອອກໃນເຂດເສດຖະກິດພິເສດປະຕິບັດໄດ້ 1,81 ຕື້ໂດລາສະຫະລັດ ໃນນີ້, ພົ້ນເດັ່ນແມ່ນເຂດເສດຖະກິດພິເສດສະຫວັນ - ເຊໂນ.

## 2. ບາງເປົ້າໝາຍສຳຄັນທາງດ້ານສັງຄົມ:

2.1. <u>ວຽກງານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ:</u> ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ຕໍ່ເນື່ອງຄຽງຄູ່ກັບການກໍ່ສ້າງຮາກຖານການເມືອງຕາມ 4 ເນື້ອໃນ 4 ຄາດໝາຍ ແລະ ວຽກງານ 3 ສ້າງ ແລະ ໄດ້ມີຄວາມຄືບໜ້າເປັນກ້າວໆ. ຖ້າອີງຜົນການ

ສຳຫຼວດ LECS 6 ແລະ ດຳລັດ 348/ນຍ ແມ່ນບາງຄາດໝາຍບໍ່ໄດ້ຕາມແຜນ, ແຕ່ອີງໃສ່ມາດຖານ 309/ນຍ ແມ່ນ ພວກເຮົາສາມາດບັນລຸໄດ້ຕາມແຜນການວາງໄວ້.ໃນປີ 2019 ຄອບຄົວທຸກຍາກຍັງເຫຼືອ 62.384 ຄອບຄົວ ຫຼື ເທົ່າກັບ 5,16% ຂອງຄອບຄົວທັງໝົດ; ອີງຕາມຜົນການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຄົວເຮືອນຄັ້ງທີ 6 (LECS 6) ໃນປີ 2018 - 2019 ເຊິ່ງໃຊ້ມາດຖານສາກົນເຫັນວ່າ ອັດຕາຄວາມທຸກຍາກຍັງເຫຼືອປະມານ 18,3% ຂອງປະຊາກອນທັງໝົດ (ຫຼຸດລົງຈາກ 23,2% ອີງຕາມຜົນການສຳຫຼວດ LECS 5 ໃນປີ (2012-2013) ຫຼື 13,5% ຂອງຄົວເຮືອນທັງໝົດ (ມະຕິສະພາ: ອັດຕາຄວາມທຸກຍາກຕໍ່າກວ່າ 10%).

2.2. <u>ດ້ານການສຶກສາ:</u> ກໍໄດ້ຮັບການພັດທະນາຕໍ່ເນື່ອງ, ໃນນັ້ນຄາດໝາຍສາມາດບັນລຸໄດ້ຕາມແຜນ ມີ 3 ຄາດໝາຍ, ນອກຈາກນີ້ຄາດໝາຍຈຳນວນໜຶ່ງ ມີຄວາມຄືບໜ້າດີ ແຕ່ບໍ່ບັນລຸແຜນມີ 10 ຄາດໝາຍ ແລະ ຄາດໝາຍມີທ່າອ່ຽງທົດຖອຍ ມີ 2 ຄາດໝາຍ.

2.3. <u>ດ້ານສາທາລະນະສຸກ:</u> ໄດ້ສືບຕໍ່ເອົາໃຈໃສ່ ແລະ ບັນລຸໄດ້ຕາມແຜນມີ5ຄາດໝາຍ ແລະ ຍັງມີຄວາມສ່ຽງຈະບໍ່ບັນລຸໄດ້ຕາມແຜນ ມີ 6 ຄາດໝາຍ, ພົ້ນເດັ່ນແມ່ນໄດ້ມີຜົນສຳເລັດສູງໃນການຕ້ານ ແລະ ສະກັດກັ້ນການລະບາດຂອງໂຄວິດ - 19.

### 3. ບາງເປົ້າໝາຍສຳຄັນທາງດ້ານສິ່ງແວດລ້ອມ:

ໄດ້ປັບປຸງລະບົບການຂຶ້ນທະບຽນ, ອອກໃບຕາດິນທີ່ທັນສະໄໝ ຊຶ່ງໃນໄລຍະ 5 ປີ ສາມາດອອກໃບຕາດິນໄດ້ 589.262 ກວ່າຕອນ (ມະຕິສະພາ: 400.000 ຕອນ); ໄດ້ວາງ ແລະ ປະຕິບັດຄຳສັ່ງເລກທີ 15/ນຍ ວ່າດ້ວຍຄຸ້ມຄອງການຂຸດຄົ້ນໄມ້ ແລະ ທຸລະກິດໄມ້ໄດ້ຮັບໝາກຜົນທີ່ໜ້າພໍໃຈ. ໄດ້ເອົາໃຈໃສ່ຟື້ນຟູປ່າທີ່ເສື່ອມໂຊມ ແລະ ສິ່ງ

ເສີມການປູກໄມ້ຢ່າງຕັ້ງໜ້າ ເຊິ່ງມາຮອດປະຈຸບັນມີເນື້ອທີ່ປົກຫຸ້ມປ່າໄມ້ກວມເອົາ 62% ຂອງເນື້ອທີ່ທົ່ວປະເທດ ຫຼຸດແຜນວາງໄວ້ (ມະຕິສະພາ: 70%). ນອກຈາກນັ້ນ, ຍັງໄດ້ເອົາໃຈໃສ່ຄຸ້ມຄອງສິ່ງແວດລ້ອມຕາມກົດໝາຍ ແລະ ນິຕິກໍາຢ່າງແຂງແຮງສົມຄວນ.

**4. ວຽກງານປົ່ນອ້ອມຫຼາຍຂະແໜງການ:**

ສືບຕໍ່ປັບປຸງກົງຈັກຂອງລັດຖະບານ ໃຫ້ມີຄວາມກະທັດຮັດຄ່ອງຕົວ ຕາມທິດ 3 ສ້າງ ທັງສືບຕໍ່ຊຸກຍູ້ສົ່ງເສີມການຄົ້ນຄວ້າ ແລະ ນໍາໃຊ້ວິທະຍາສາດເຕັກໂນໂລຊີເປັນກ້າວໆ ເຂົ້າໃນການພັດທະນາເສດຖະກິດ - ສັງຄົມ ແລະ ມີຜົນສໍາເລັດຫຼາຍໂຄງການ ຊຶ່ງສາມາດປະຫຍັດເວລາ, ງົບປະມານ, ຈໍານວນພະນັກງານໃນການປະຕິບັດໜ້າທີ່ຂອງຫຼາຍຂົງເຂດ; ໄດ້ເອົາໃຈໃສ່ໃນການສົ່ງເສີມ ແລະ ພັດທະນາແມ່ຍິງ, ເຍົາວະຊົນ ແລະ ໄວໜຸ່ມ; ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກໄດ້ຄ່ອຍໆຫຼຸດລົງ; ສໍາເລັດການສ້າງກົດໝາຍ ວ່າດ້ວຍຄວາມສະເໝີພາບຍິງ - ຊາຍ ແລະ ໄດ້ເຊື່ອມສານວຽກງານບົດບາດຍິງ - ຊາຍ ແລະ ການສົ່ງເສີມຄວາມກ້າວໜ້າແມ່ຍິງເຂົ້າໃນທຸກຂົງເຂດວຽກງານ.

**5. ການຈັດຕັ້ງປະຕິບັດເງື່ອນໄຂ ການອອກຈາກສະຖານະພາບຄວາມດ້ອຍພັດທະນາ (LDC), ເປົ້າໝາຍການພັດທະນາແບບຍືນຍົງ SDGs ແລະ ຍຸດທະສາດການເຕີບໂຕສີຂຽວ:**

+ ການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ: ໄດ້ເຊື່ອມສານບັນດາຕົວຊີ້ບອກເຂົ້າໃນແຜນ 5 ປີ ຄັ້ງທີ VIII ໄດ້ 60% ຂອງຕົວຊີ້ບອກໃນແຜນຄັ້ງທີ VIII ແລະ ປະຕິບັດຕົວຈິງມີຄວາມຄືບໜ້າສົມຄວນ; ສິ່ງພົ້ນເດັ່ນ ໃນປີ 2018 ສປປ ລາວ ໄດ້ສະເໜີບົດລາຍ

ງານແບບສະໝັກໃຈແຫ່ງຊາດ ເປັນຄັ້ງທຳອິດ ຢູ່ອົງການສະຫະປະຊາຊາດ, ທີ່ນິວຢອກເຊິ່ງຈະສາມາດລາຍງານຄວາມຄືບໜ້າໄດ້ 124 ຕົວຊີ້ບອກໃນທັງໝົດ 142 ຕົວຊີ້ວັດຂອງສາກົນ.

+ ອີງຕາມຜົນຂອງການປະເມີນ ຂອງຄະນະກຳມະການນະໂຍບາຍ ເພື່ອການພັດທະນາ (CDP) ຂອງສະຫະປະຊາຊາດ ໃນປີ 2018 ເຫັນວ່າສປປລາວສາມາດບັນລຸ 2 ໃນ 3 ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ຄື: ລາຍໄດ້ແຫ່ງຊາດ (GNI) ບັນລຸໄດ້ 1.996 ໂດລາສະຫະລັດ ລື່ນຄາດໝາຍ (ຄາດໝາຍ:1.230ໂດລາສະຫະລັດ) ແລະ ດັດສະນີຊັບສິນມະນຸດ (HAI) ບັນລຸໄດ້ 72,8 ລື່ນຄາດໝາຍ (ຄາດໝາຍ: ໃຫ້ຫຼາຍວ່າ 66), ສ່ວນດັດສະນີຄວາມບອບບາງດ້ານເສດຖະກິດ (EVI) ປະຕິບັດໄດ້ 33,7 ບໍ່ບັນລຸຄາດໝາຍ (ຄາດໝາຍ: ໃຫ້ຕໍ່າກວ່າ 32).

+ ສປປ ລາວ ໄດ້ໃຫ້ຄວາມສຳຄັນການພັດທະນາເສດຖະກິດ - ສັງຄົມຕາມທິດສີຂຽວ ໂດຍໄດ້ສ້າງກົນໄກຈັດຕັ້ງປະຕິບັດ ເພື່ອຮັບຜິດຊອບວຽກງານເຕີບໂຕສີຂຽວລະດັບຊາດ ໃນປີ 2016 ແລະ ໄດ້ສຳເລັດສ້າງ ແລະ ເຊື່ອມສານຍຸດທະສາດການເຕີບໂຕສີຂຽວເຂົ້າໃນແຜນ VIII ຈຳນວນໜຶ່ງ ແລະ ຈະສືບຕໍ່ເຊື່ອມສານເຂົ້າໃນແຜນ IX ຕໍ່ໄປ.

**6. ຂໍ້ຄົງຄ້າງ, ອຸປະສັກ ແລະ ສິ່ງທ້າທາຍໃນໄລຍະ 5 ປີ ທີ່ຜ່ານມາ:** (1) ການຂະຫຍາຍຕົວຂອງເສດຖະກິດ ບໍ່ທັນຕໍ່ເນື່ອງຕາມທິດທີ່ວາງໄວ້, ຄຸນນະພາບຂອງການເຕີບໂຕເສດຖະກິດຍັງບໍ່ສູງ ແລະ ໝັ້ນທ່ຽງ; (2) ຄວາມຫຍຸ້ງຍາກທາງດ້ານເສດຖະກິດ - ການເງິນ - ເງິນຕາ ແລະ ບັນຫາໜີ້ສາທາລະນະ ຍັງບໍ່ທັນສາມາດແກ້ໄຂໄດ້ທີ່ມີລັກສະນະຕັ້ງໜ້າເທື່ອ, ການປະຕິບັດວິໄນແຜນການ - ການເງິນ ຍັງຫຼົ້ມເຫຼວ, ສະ

ຖຽນລະພາບຂອງລະບົບເງິນຕາຍັງບອບບາງ, ຄັງສຳຮອງເງິນຕາຕ່າງປະເທດບາງໄລຍະຍັງຕໍ່າກວ່າແຜນການທີ່ວາງໄວ້; (3) ການປັບປຸງສະພາບແວດລ້ອມດ້ານການລົງທຶນ ແລະ ດຳເນີນທຸລະກິດ ຍັງເຮັດບໍ່ທັນໄດ້ດີຕາມນະໂຍບາຍ ແລະ ຄຳສັ່ງ ທີ່ວາງອອກ, ຍັງມີຫຼາຍຈຸດທີ່ຂາດຄວາມໂປ່ງໃສທີ່ເປັນການກົດໜ່ວງຖ່ວງດຶງ; (4) ການຊຸກຍູ້ສົ່ງເສີມຜູ້ປະກອບການພາຍໃນ ໂດຍສະເພາະວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ແລະ ຈຸນລະວິສາຫະກິດ (MSME) ຍັງບໍ່ທັນແຂງແຮງ, ບັນດາວິສາຫະກິດພາຍໃນປະເທດສ່ວນຫຼາຍ ຍັງຂາດປະສິດທິພາບໃນການແຂ່ງຂັນ, ລັດວິສາຫະກິດ (SOE) ສ່ວນຫຼາຍດຳເນີນທຸລະກິດທີ່ຂາດທຶນ ແລະ ມີໜີ້ສິນຄຸມເຄືອ; (5) ການເສີມຂະຫຍາຍ, ນຳໃຊ້ທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນ ແລະ ປັດໄຈອື່ນໆຂອງຊາດ ຄຽງຄູ່ກັບການນຳໃຊ້ກາລະໂອກາດ, ເງື່ອນໄຂໃໝ່ໆທີ່ເກີດຈາກການຮ່ວມມືສາກົນ ຍັງບໍ່ທັນແຂງແຮງ ແລະ ບໍ່ທັນສົມຄູ່; (6) ການຫັນເປັນທັນສະໄໝ ຍັງບໍ່ທັນບຸກທະລຸໄດ້ເທົ່າທີ່ຄວນ, ການກໍ່ສ້າງ ແລະ ຍົກລະດັບດ້ານວິຊາການ - ເຕັກນິກໃນຫຼາຍຂົງເຂດ ຍັງບໍ່ທັນສາມາດຕອບສະໜອງຄວາມຕ້ອງການຂອງບັນດາໂຄງການພັດທະນາໃນແຕ່ລະໄລຍະ; (7) ປະກົດການຫຍໍ້ທໍ້ໃນສັງຄົມ ຍັງບໍ່ທັນແກ້ໄດ້ຢ່າງເປັນຮູບປະທຳ, ໄພວ່າງງານຍັງຢູ່ໃນລະດັບສູງ, ການຄຸ້ມຄອງດັດສົມ ແລະ ກະຈາຍລາຍໄດ້ບໍ່ທັນທົ່ວເຖິງເທົ່າທີ່ຄວນ ພາໃຫ້ມີສະພາບຄວາມແຕກໂຕນທາງດ້ານສັງຄົມ ລະຫວ່າງເຂດແຄ້ວນຕ່າງໆ ລວມທັງຕົວເມືອງກັບຊົນນະບົດ; (8) ການບໍລິຫານລັດ ແລະ ການຄຸ້ມຄອງສັງຄົມດ້ວຍກົດໝາຍ ເຖິງວ່າມີຄວາມເອົາໃຈໃສ່ ແຕ່ບໍ່ທັນເຂັ້ມງວດເທົ່າທີ່ຄວນ, ຍັງມີປະກົດການລະເມີດກົດໝາຍ, ລະເມີດອິດທິສ່ວນບຸກຄົນຢູ່ຢ່າງເປັນປະຈຳ, ບັນຫາຄວາມຍຸຕິ

ທຳໃນສັງຄົມ ຍັງບໍ່ໄດ້ຮັບການແກ້ໄຂຢ່າງເຖິງຖອງ. ການແບ່ງຂັ້ນຄຸ້ມຄອງຕາມທິດ 3 ສ້າງ ຍັງບໍ່ທັນມີການຫັນປ່ຽນຢ່າງຕັ້ງໜ້າ; (9) ພະນັກງານຈຳນວນໜຶ່ງ ຍັງຂາດຄວາມຮັບຜິດຊອບ, ຍັງມີປະກົດການສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວທາງກົງ ຫຼື ທາງອ້ອມ.

**7. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:**

(1) ການນຳພາ - ຊີ້ນຳຜັນຂະຫຍາຍແຜນ 5 ປີ ຄັ້ງທີ VIII ຕິດພັນກັບການປະຕິບັດມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໃຫ້ເປັນອັນລະອຽດຢູ່ຂະແໜງການ ແລະ ທ້ອງຖິ່ນຍັງບໍ່ທັນດຳເນີນໄດ້ຢ່າງຈິງຈັງ, ເຮັດໃຫ້ຜົນໄດ້ຮັບເມື່ອທຽບໃສ່ທ່າແຮງທີ່ມີຂອງປະເທດ ບໍ່ທັນສູງ; (2) ການປະຕິບັດກົດໝາຍ, ລະບຽບການບໍ່ເຄັ່ງຄັດ ກາຍເປັນຊ່ອງວ່າງໃຫ້ເກີດມີປະກົດການລະເມີດວິໄນແຜນການ - ການເງິນ, ການສວຍໃຊ້ໜ້າທີ່ຕຳແໜ່ງທີ່ບໍ່ຖືກຕ້ອງແລະ ອື່ນໆ; (3) ຄວາມຮຽກຮ້ອງຕ້ອງການໃນການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນຮາກຖານ ມີສູງແຕ່ຄວາມສາມາດໃນການສະໜອງງົບປະມານມີຈຳກັດ; (4) ເສດຖະກິດມະຫາພາກມີຄວາມບອບບາງ, ການຜະລິດພາຍໃນຍັງບໍ່ແຂງແຮງ, ການສົ່ງອອກ ແລະ ການໄຫຼເຂົ້າຂອງເງິນຕາຕ່າງປະເທດບໍ່ສົມດຸ່ນ; (5) ສະພາບໄພພິບັດທຳມະຊາດ (ນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດ), ສັນຄູກັນນ້ຳຂອງເຂື່ອນໄຟຟ້າແຕກ; ການລະບາດຂອງພະຍາດ Covid - 19; ສົງຄາມການຄ້າ ແລະ ຄວາມຂັດແຍ່ງກັນຂອງປະເທດມະຫາອຳນາດ ໄດ້ສົ່ງຜົນກະທົບຕໍ່ການປະຕິບັດຄາດໝາຍຕ່າງໆ ຂອງແຜນ VIII ຢ່າງຫຼີກລ່ຽງບໍ່ໄດ້.

## 8. ບົດຮຽນທີ່ຖອດຖອນໄດ້ຈໍານວນໜຶ່ງດັ່ງນີ້:

(1) ຮັບປະກັນສະຖຽນລະພາບທາງດ້ານການເມືອງ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງປະຊາຊົນບັນດາເຜົ່າ ພາຍໃນຊາດ ພາຍໃຕ້ການນໍາພາຂອງພັກ ພ້ອມກັນຈັດຕັ້ງຜັນຂະຫຍາຍວຽກງານ 3 ສ້າງເຂົ້າສູ່ລວງເລິກຕິດພັນກັບ **"ຂະບວນການຮັກຊາດ ແລະ ພັດທະນາ"** ແມ່ນເງື່ອນໄຂສໍາຄັນ ແລະ ຈໍາເປັນຂອງຄວາມສໍາເລັດ ຫຼື ບໍ່ສໍາເລັດຂອງແຜນການ; (2) ຮັບປະກັນຄວາມສອດຄ່ອງລະຫວ່າງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ກັບບັນດາຍຸດທະສາດການພັດທະນາເສດຖະກິດ - ສັງຄົມ ຮອດປີ 2025, ວິໄສທັດ 2030, ເປົ້າໝາຍການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ, ການເຕີບໂຕສີຂຽວແມ່ນຫຼັກການຂອງການພັດທະນາແບບຕໍ່ເນື່ອງ; (3) ການເພີ່ມປະສິດທິພາບການບໍລິຫານລັດຕາມກົດໝາຍ, ປະຕິບັດກົດໝາຍ ແລະ ລະບຽບການຢ່າງເຄັ່ງຄັດ ແມ່ນປັດໄຈຕັດສິນຄຸນນະພາບຂອງການພັດທະນາ ລວມທັງການແກ້ໄຂຄວາມທຸກຍາກ ແລະ ຫຼຸດຜ່ອນຄວາມແຕກໂຕນໃນສັງຄົມ; (4) ຖືເອົາການພັດທະນາເສດຖະກິດເປັນໃຈກາງ ເພື່ອຊຸກຍູ້ ແລະ ສະໜັບສະໜູນໃຫ້ການພັດທະນາສັງຄົມ, ຮັກສາຮີດຄອງປະເພນີອັນດີງາມ ແລະ ປົກປັກຮັກສາສະພາບແວດລ້ອມ ຕາມທິດຍືນຍົງ ແລະ ສີຂຽວ; (5) ການສ້າງສະພາບແວດລ້ອມອັນອໍານວຍ ທີ່ເປັນລະບົບຕໍ່ເນື່ອງໃນນີ້ລວມທັງການວາງນະໂຍບາຍ, ກົນໄກທີ່ສອດຄ່ອງ, ມີຖານຂໍ້ມູນດ້ານຕ່າງໆທີ່ຊັດເຈນ, ໂຄງລ່າງພື້ນຖານເສດຖະກິດທີ່ສະດວກ ແມ່ນເປັນປັດໄຈສໍາຄັນ ໃນການດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາ; (6) ການເພີ່ມທະວີປະຕິບັດຍຸດທະສາດ

ຫັນເປັນອຸດສາຫະກຳທັນສະໄໝຕາມທິດອຸດສາຫະກຳ 4.0 ຕິດພັນກັບການສ້າງຄວາມເຂັ້ມແຂງ ໃນການພັດທະນາດ້ານບຸກຄະລາກອນ ທີ່ສອດຄ່ອງກັບໂຄງປະກອບເສດຖະກິດ ແມ່ນເປັນປັດໄຈສຳຄັນສຳລັບການຂັບເຄື່ອນການພັດທະນາປະເທດ ໄປຕາມທິດທີ່ພັກເຮົາວາງໄວ້; (7) ການສຶກສາອົບຮົມຄົນໃນທົ່ວສັງຄົມ ໃຫ້ຮູ້ປະຢັດມັດທະຍັດ ໃຫ້ມີລະບຽບວິໄນ ເປັນປັດໄຈສຳຄັນໜຶ່ງໃນການພັດທະນາ ໃຫ້ມີຄວາມໝັ້ນທ່ຽງຍືນຍົງຂອງປະເທດ.

**9. ບາງບັນຫາສຳຄັນຕົ້ນຕໍ ທີ່ຈະຕ້ອງເອົາໃຈໃສ່ແກ້ໄຂຢ່າງຮີບດ່ວນໃນ 5 ປີຕໍ່ໜ້າ:**

(1) ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການພັດທະນາຕາມທິດ 3 ສ້າງ ເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານສັງຄົມ (ລະຫວ່າງຄົນຮັ່ງ ແລະ ຄົນທຸກ, ຕົວເມືອງແລະຊົນນະບົດ), ສຸມໃສ່ຮັບປະກັນການເຂົ້າເຖິງ ການບໍລິການສາທາລະນະ (ສຶກສາ, ສາທາ) ຢູ່ເຂດຫ່າງໄກສອກຫຼີກໃຫ້ໄດ້ໂດຍພື້ນຖານ; (2) ແກ້ໄຂຄວາມບອບບາງທາງດ້ານເສດຖະກິດເປັນຕົ້ນແມ່ນ: ການເຕີບໂຕສ່ວນໃຫຍ່ທີ່ເອື່ອຍອີງໃສ່ແຕ່ການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ບໍ່ທັນມີປະສິດທິຜົນເທົ່າທີ່ຄວນ, ຄຸນນະພາບຂອງການເຕີບໂຕບໍ່ສູງ, ບໍ່ທັນສາມາດກະຈາຍລາຍໄດ້ຢ່າງທົ່ວເຖິງ, ຖານການຜະລິດ ຍັງບໍ່ທັນມີພື້ນຖານໜັກແໜ້ນ ແລະ ໝັ້ນຄົງ; ການອຳນວຍຄວາມສະດວກ ໃຫ້ແກ່ທຸລະກິດຍັງບໍ່ທັນໂລ່ງລ່ຽນ ແລະ ແກ່ຍາວ; (3) ແກ້ໄຂຄວາມບອບບາງດ້ານການເງິນ, ແກ້ໄຂບັນຫາໜີ້ສິນສາທາລະນະ, ການເກັບລາຍຮັບບໍ່ຄົບຖ້ວນ ແລະ ມີການຮົ່ວໄຫຼບໍ່ສົມຄູ່ກັບຄວາມສາມາດບົ່ມຊ້ອນ, ງົບປະມານບໍ່ພຽງພໍກັບຄວາມຈຳເປັນຂອງການພັດທະນາ (ສ່ວນຫຼາຍ ແມ່ນສຸມໃສ່

ແກ້ໜີ້ສິນ ທີ່ບໍ່ມີລັກສະນະກະຕຸ້ນລະບົບເສດຖະກິດ); (4) ແກ້ໄຂຄວາມບອບບາງທາງດ້ານເງິນຕາ: ດ້ານການຄ້າເຫັນວ່າມີການເກີນດຸນ, ແຕ່ດຸນການຊຳລະກັບຕ່າງປະເທດ (BOP) ມີທ່າອ່ຽງຫຼຸດລົງ, ລາຄາສິນຄ້າມີທ່າອ່ຽງເພີ່ມສູງຂຶ້ນ (ເງິນເຟີ້) ແລະ ອັດຕາແລກປ່ຽນມີການເໜັງຕີງແຮງໃນບາງໄລຍະພາໃຫ້ເກີດມີຕະຫຼາດນອກລະບົບ, ສະພາບເງິນຝືດ, ເງິນເຟີ້ ແລະ ຄ່າຄອງຊີບຖີບຕົວສູງຂຶ້ນ; (5) ແກ້ໄຂຜົນກະທົບການລະບາດພະຍາດໂຄວິດ - 19 ເປັນຕົ້ນບັນຫາແຮງງານ (ການວ່າງງານ), ການຟື້ນຟູທຸລະກິດທີ່ໄດ້ຮັບຜົນກະທົບຈາກການລະບາດດັ່ງກ່າວ ໃຫ້ຄືນສູ່ສະພາບປົກກະຕິ; (6) ແກ້ໄຂການຄຸ້ມຄອງລັດ, ຄຸ້ມຄອງສັງຄົມໃຫ້ມີປະສິດທິພາບ ຫັນເຂົ້າສູ່ການຄຸ້ມຄອງດ້ວຍກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດລວມທັງການປັບປຸງ ແລະ ສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ແກ່ການດຶງດູດການລົງທຶນ, ແກ້ໄຂປະກົດການສວຍໃຊ້ໜ້າທີ່ຂອງພະນັກງານໃນທາງທີ່ບໍ່ຖືກຕ້ອງ; (7) ສຸມໃສ່ແກ້ໄຂການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ມີຈຸດສຸມ, ສົ່ງເສີມວິຊາຊີບ ແລະ ການຫັນເປັນຊ່ຽວຊານ ຕິດພັນກັບການຫັນເປັນທັນສະໄໝໃນຍຸກ 4.0 ແລະ ວິຖີຊີວິດແບບໃໝ່ (New Normal).

## II. ພາກທີ 2: ທິດທາງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025).

ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ເປັນແຜນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ເປັນແຜນປະຕິບັດຍຸດທະສາດຂອງການພັດທະນາ ຮອດປີ 2025 ແລະ ວິໄສທັດ 2030 ຂອງພັກເຮົາ. ຄາດໝາຍ ລວມຂອງແຜນດັ່ງກ່າວແມ່ນ: (1) ສືບຕໍ່ກະກຽມທຸກເງື່ອນໄຂ ເພື່ອນຳພາ

ປະເທດຊາດອອກຈາກສະຖານະພາບດ້ອຍພັດທະນາ, ປະຊາຊົນມີວຽກເຮັດງານທຳ, ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ 2030 ແລະ ຜັນຂະຫຍາຍຍຸດທະສາດ ການເຕີບໂຕສີຂຽວແຫ່ງຊາດໃຫ້ມີປະສິດທິຜົນສູງ; (2) ບຸກທະລຸແກ້ໄຂຈຸດອ່ອນຂໍ້ຄົງຄ້າງ, ອຸປະສັກຕ່າງໆໃນການພັດທະນາ ເປັນຕົ້ນແມ່ນບັນຫາເສດຖະກິດ - ການເງິນ - ເງິນຕາ ລວມທັງຜົນກະທົບມາຈາກພະຍາດໂຄວິດ - 19, ການປ່ຽນແປງດິນຟ້າອາກາດ, ສົງຄາມການຄ້າ ແລະ ສະພາບທີ່ບໍ່ແນ່ນອນ ຢູ່ໃນຂົງເຂດສາກົນ; (3) ເສີມຂະຫຍາຍປັດໄຈ ແລະ ທ່າແຮງບົ່ມຊ້ອນຂອງຊາດໂດຍນຳໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ICT) ທີ່ເໝາະສົມໃຫ້ກາຍເປັນກຳລັງແຮງ ແລະ ພື້ນຖານການຜະລິດ ແລະ ບໍລິການທີ່ເປັນປາຍແຫຼມ, ເປັນຫົວຈັກໃຫ້ແກ່ການເຕີບໂຕ ເພື່ອສ້າງພື້ນຖານໃຫ້ແກ່ຄວາມເຂັ້ມແຂງ ແລະ ເປັນເຈົ້າຕົນເອງເພິ່ງຕົນເອງທາງດ້ານເສດຖະກິດເປັນກ້າວໆ.

ເພື່ອປະຕິບັດໃຫ້ໄດ້ 3 ທິດທາງລວມດັ່ງກ່າວນີ້, ແຜນການ 5 ປີ ຄັ້ງທີ IX, ພວກເຮົາ ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ແຂງແຮງ ແລະ ເຂົ້າສູ່ລວງເລິກກວ່າເກົ່າ ເພື່ອສືບຕໍ່ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງຕ່າງໆ ແລະ ປະຄັບປະຄອງເສດຖະກິດຂອງປະເທດເຮົາ ບໍ່ໃຫ້ຕົກເຂົ້າສູ່ສະພາວະວິກິດ. ສະນັ້ນ, ໃນແຜນການ 5 ປີ ຄັ້ງນີ້, ຈຶ່ງຈຳເປັນຕ້ອງໄດ້ຫັນໄປສູ່ **ຄຸນນະພາບ, ມີຈຸດສຸມ, ຍືນຍົງ ແລະ ສີຂຽວ** ດັ່ງມີລາຍລະອຽດລຸ່ມນີ້:

**1. ແຜນການ 5 ປີ ຄັ້ງທີ IX ໄດ້ກຳນົດ ມີ 6 ເປົ້າໝາຍ ແລະ 25 ແຜນວຽກຈຸດສຸມ ແລະ ໂຄງການຕົ້ນຕໍບູລິມະສິດຈຳນວນໜຶ່ງ.**

- <u>ເປົ້າໝາຍທີ 01:</u> ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ:

1. <u>ບາງຄາດໝາຍແລະຕົວຊີ້ບອກ:</u>

- <u>ດ້ານງົບປະມານ:</u> ສູ້ຊົນປະຕິບັດລາຍຮັບງົບປະມານທັງໝົດໃຫ້ໄດ້ຢ່າງໜ້ອຍ 179.500 ຕື້ກີບ ເທົ່າກັບ 17,0% ຂອງ GDP, ໃນນີ້ລາຍຮັບຈາກພາສີ - ອາກອນ ປະມານ 166.753 ຕື້ກີບ ແລະ ລາຍຮັບທີ່ບໍ່ແມ່ນພາສີ - ອາກອນ ປະມານ 23.000 ຕື້ກີບ. ດ້ານລາຍຈ່າຍສູ້ຊົນບໍ່ໃຫ້ເກີນ 190.000 ຕື້ກີບ ເທົ່າກັບ 18,0% ຂອງ GDP, ໃນນີ້ລາຍຈ່າຍບໍລິຫານປົກກະຕິ ປະມານ 130.000 ຕື້ກີບ ແລະ ລາຍຈ່າຍການລົງທຶນລັດ ປະມານ 59.500 ຕື້ກີບ. ຮັບປະກັນການຂາດດຸນງົບປະມານ ທັງໝົດ 10.500 ຕື້ກີບ ຫຼື ປະມານ 1% ຂອງ GDP.

- <u>ດ້ານເງິນຕາ:</u> ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບສະເລ່ຍບໍ່ເກີນ 6%, ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິເໜັງຕີງໃນກອບ 5% ຕໍ່ປີທຽບໃສ່ເງິນໂດລາສະຫະລັດ, ສູ້ຊົນໃຫ້ຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າໄດ້ບໍ່ຫຼຸດ 3 ເດືອນ ແລະ ຄວບຄຸມປະລິມານເງິນ $M_2$ ເພີ່ມຂຶ້ນສະເລ່ຍບໍ່ເກີນ 20% ຕໍ່ປີ.

- <u>ສູ້ຊົນລະດົມການລົງທຶນທັງໝົດ</u>ໃຫ້ໄດ້ ປະມານ 204.559 ຕື້ກີບ, ເທົ່າກັບ 19,4% ຂອງ GDP ໃນນີ້: ການລົງທຶນຈາກງົບປະມານພາຍໃນ ປະມານ 10-11% ຂອງການລົງທຶນທັງໝົດ, ODA ປະມານ 18,7% ຂອງການລົງທຶນທັງໝົດ, ການລົງທຶນເອກະຊົນພາຍໃນ ແລະຕ່າງປະເທດ (FDI) ປະມານ 49% ຂອງການລົງທຶນທັງໝົດ ແລະ ການລົງທຶນອື່ນໆ ປະມານ 22% ຂອງການລົງທຶນທັງໝົດ.

- <u>ສູ້ຊຶນເຮັດໃຫ້ເສດຖະກິດຂະຫຍາຍຕົວ</u> ສະເລ່ຍຕໍ່ປີ ໃນລະດັບ 4% ຂຶ້ນໄປ, ມູນຄ່າ GDP ລວມ 5 ປີ ເທົ່າກັບ 1.057.689 ຕື້ກີບ, GDP ຕໍ່ຫົວຄົນ ໃຫ້ໄດ້ 2.887 ໂດລາສະຫາລັດ ໃນປີ 2025 ໃນນີ້: ຂະແໜງກະສິກໍາຂະຫຍາຍຕົວສະເລ່ຍ ໃນລະດັບ 2,5%; ຂະແໜງອຸດສາຫະກໍາຂະຫຍາຍຕົວສະເລ່ຍ ໃນລະດັບ 4,1%; ຂະແໜງບໍລິການຂະຫຍາຍຕົວສະເລ່ຍ ໃນລະດັບ 6%. ຮອດປີ 2025 ສູ້ຊຶນໂຄງປະກອບເສດຖະກິດຂະແໜງກະສິກໍາ ແລະ ປ່າໄມ້ກວມເອົາ 15,3%, ຂະແໜງອຸດສາຫະກໍາ ກວມເອົາ 32,3% ແລະ ຂະແໜງບໍລິການກວມເອົາ 41,3% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

2. <u>ແຜນວຽກຈຸດສຸມ:</u> (1) ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ; (2) ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ; (3) ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ; (4) ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ; (5) ພັດທະນາວິສາຫະກິດຂອງລັດ ແລະ ເສດຖະກິດຮ່ວມໝູ່ຂອງປະຊາຊົນ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງ ເພື່ອສ້າງພື້ນຖານໜັກແໜ້ນ ໃຫ້ແກ່ການຜະລິດ ແລະ ການບໍລິການສັງຄົມ ທັງປະກອບສ່ວນສ້າງລາຍຮັບເຂົ້າງົບປະມານລັດ ໃຫ້ສົມກັບການລົງທຶນ.

3. <u>ການປະຕິຮູບໂຄງສ້າງເສດຖະກິດເພື່ອສ້າງຄວາມເຂັ້ມແຂງພາຍໃນ ກ້າວຂຶ້ນເພິ່ງຕົນເອງແລະກຸ້ມຕົນເອງ</u>:

1) ປັບປຸງລະບົບກົນໄກ ແລະ ມາດຕະການທີ່ຄົບຊຸດ ເພື່ອແກ້ໄຂບັນຫາທີ່ຫຍຸ້ງຍາກທາງດ້ານເສດຖະກິດ - ການເງິນ, ຮັບປະກັນໃຫ້

ການເຕີບໂຕມີຄຸນນະພາບ, ເສດຖະກິດມະຫາພາກ ມີສະຖຽນລະພາບໃນລະດັບທີ່ແນ່ນອນ; 2) ປັບປຸງໂຄງສ້າງເສດຖະກິດ ໃຫ້ມີຄຸນນະພາບ ແລະຍືນຍົງຕາມຂະແໜງການ, ຕາມພາກສ່ວນເສດຖະກິດ ແລະ ຕາມເຂດແຄ້ວນ; 3) ສືບຕໍ່ພັດທະນາເຂດແຄ້ວນ (ພາກເໜືອ, ພາກກາງ ແລະ ພາກໃຕ້) ຕາມທ່າແຮງໄດ້ປຽບຂອງແຕ່ລະພາກ ໃຫ້ເຂົ້າສູ່ລວງເລິກ, ມີຄວາມສອດຄ່ອງກົມກຽວ, ສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອສ້າງສຳພັນເສດຖະກິດທີ່ມີຄຸນນະພາບ ແລະ ມີຄວາມສົມດູນຫຼາຍຂຶ້ນ; ສຸມໃສ່ພັດທະນາຕາມແລວທາງເສດຖະກິດລາວ - ຈີນ, ແລວທາງເໜືອ - ໃຕ້, ແລວທາງຕາເວັນອອກ - ຕາເວັນຕົກ, ບັນດາເຂດເສດຖະກິດພິເສດ ຕົວເມືອງທັນສະໄໝ, ທ່າບົກ ແລະ ການບໍລິການໂລຈິສຕິກ, ນິຄົມອຸດສາຫະກຳ, ອຸດສາຫະກຳດ້ານການທ່ອງທ່ຽວ (ທຳມະຊາດ, ປະຫວັດສາດ, ວັດທະນະທຳ ແລະ ການຜະລິດກະສິກຳ); 4) ເສີມຂະຫຍາຍບັນດາປັດໄຈ, ຄວາມອາດສາມາດບົ່ມຊ້ອນ ທີ່ໄດ້ປຽບພາຍໃນປະເທດ ໃຫ້ກາຍເປັນທ່າແຮງ ແລະ ກາຍເປັນຂະແໜງເສດຖະກິດປາຍແຫຼມຂອງຊາດ ໂດຍສະເພາະແມ່ນ: (1) ຂຸດຄົ້ນທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ເປັນຕົ້ນ: ທີ່ດິນ, ປ່າໄມ້ ແລະ ນ້ຳຢ່າງເປັນລະບົບ, (2) ທ່າແຮງທາງດ້ານອຸດສາຫະກຳປຸງແຕ່ງຈາກກະສິກຳ, ຫັດຖະກຳ ແລະ ອຸດສາຫະກຳຜະລິດວັດສະດຸກໍ່ສ້າງ, (3) ທ່າແຮງທາງດ້ານທ່ອງທ່ຽວ, (4) ທ່າແຮງທາງດ້ານການເຊື່ອມຈອດຕາມແລວທາງເສດຖະກິດຕ່າງໆ ລວມທັງແລວທາງລົດໄຟລາວ - ຈີນ, (5) ທ່າແຮງດ້ານພະລັງງານ - ບໍ່ແຮ່, (6) ທ່າແຮງທາງດ້ານການມີປະຊາກອນໜຸ່ມ ແລະ (7) ທ່າແຮງດ້ານການນຳໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ICT) ແລະ ວິທະຍາສາດເຕັກໂນໂລຊີທີ່ທັນສະໄໝ; 5) ຕັ້ງໜ້າຊຸກຍູ້ສົ່ງເສີມຜູ້ປະ

ກອບການພາຍໃນ ໂດຍສະເພາະ SME ແລະ MSME ໃຫ້ມີຄວາມເຂັ້ມແຂງ, ສາມາດປະກອບສ່ວນເຂົ້າ ໃນຕ່ອງໂສ້ການຜະລິດຂອງພາກພື້ນ ແລະ ສາກົນ, ທັງເປັນເງື່ອນໄຂສໍາລັບການດຶງດູດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ເພີ່ມຂຶ້ນທີ່ຮັບປະກັນທັງປະລິມານ ແລະ ຄຸນນະພາບ; 6) ປະຕິຮູບການລົງທຶນຂອງລັດໃຫ້ມີປະສິດທິຜົນ, ສາມາດເປັນພື້ນຖານອໍານວຍຄວາມສະດວກໃຫ້ແກ່ການລົງທຶນຂອງພາກເອກະຊົນ ແລະ ການແກ້ໄຂຄວາມທຸກຍາກ; 7) ພັດທະນາພື້ນຖານໂຄງລ່າງ ແລະ ລະບົບສາທາລະນຸປະໂພກຢ່າງມີຈຸດສຸມ, ຍົກສູງລະດັບຊີວິດການເປັນຢູ່ ແລະ ຄຸນນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນ; 8) ປົກປັກຮັກສາສິ່ງແວດລ້ອມຢ່າງຕັ້ງໜ້າ, ເຝົ້າລະວັງ ແລະ ກຽມຄວາມພ້ອມຮັບມືກັບໄພພິບັດທໍາມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນຢ່າງທັນການ.

4. <u>ໂຄງການຕົ້ນຕໍ ໃນການສະໜັບສະໜູນໃຫ້ບັນລຸເປົ້າໝາຍ:</u> ຈໍານວນ 170 ໂຄງການ.

• <u>ເປົ້າໝາຍທີ 02:</u> ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນໍາໃຊ້ວິທະຍາສາດ - ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດແລະການບໍລິການ:

1. <u>ບາງຄາດໝາຍ ແລະ ຕົວຊີ້ບອກ:</u>

- ສູ້ຊົນເຮັດໃຫ້ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ ໃຫ້ຫຼຸດລົງເຫຼືອ 15%; ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງ ບໍ່ໄດ້ມາດຕະຖານໃຫ້ໄດ້ 26%; ອັດຕາການຕາຍຂອງເດັກນ້ອຍລຸ່ມ 1 ປີ ໃຫ້ຫຼຸດລົງເຫຼືອ 20/1.000 ຂອງເດັກເກີດມີ

ຊີວິດ; ອັດຕາການຕາຍຂອງເດັກຕ່ຳກວ່າ 5 ປີ ໃຫ້ຫຼຸດລົງເຫຼືອ 30/1.000 ຂອງເດັກເກີດມີຊີວິດ;

- ອັດຕາເຂົ້າຮຽນຂອງເດັກ 5 ປີ ໃຫ້ບັນລຸໄດ້ 86% ໃນປີ 2025; ອັດຕາການເຂົ້າຮຽນລວມຊັ້ນ ມ.4 ໃຫ້ບັນລຸສູງກວ່າ 74%; ສູ້ຊົນໃຫ້ມີນັກຮຽນທີ່ຮຽນຈົບ ຈາກມັດທະຍົມຕົ້ນ ເຂົ້າຮຽນຕໍ່ອາຊີວະສຶກສາ ແລະ ເຝິກອົບຮົມວິຊາຊີບໃຫ້ບັນລຸສູງກວ່າ 5% ຂອງຈຳນວນນັກຮຽນມັດທະຍົມຕົ້ນ;

- ຄວບຄຸມອັດຕາວ່າງງານໃຫ້ຫຼຸດລົງຈາກ 20% ໃນປີ 2020ມາເປັນ 15% ໃນປີ 2025 ສະເລ່ຍຫຼຸດລົງປີລະ 1%;

- ສົ່ງເສີມການຄົ້ນຄວ້າ ແລະ ພັດທະນາ ໂດຍເພີ່ມການລົງທຶນໃສ່ (R&D) ຈາກ 1% ຂອງງົບປະມານມາເປັນ 2%.

1. <u>ແຜນວຽກຈຸດສຸມ:</u> (1) ການປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພຊະນາການຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ; (2) ປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ແລະ ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ; (3) ກຳລັງແຮງງານໄດ້ຮັບການພັດທະນາດ້ານສີມື, ຄວາມສຳນານງານ ແລະ ມີລະບຽບວິໄນສູງຂຶ້ນທັງມີຄວາມຫຼາກຫຼາຍວິຊາຊີບ, ມີວຽກເຮັດງານທຳທີ່ໝັ້ນຄົງ, ມີລາຍໄດ້ສູງຂຶ້ນ; (4) ສົ່ງເສີມ ແລະ ນຳໃຊ້ການຄົ້ນຄວ້າ - ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ - ສັງຄົມ.

3. <u>ໂຄງການຕົ້ນຕໍ ໃນການສະໜັບສະໜູນໃຫ້ບັນລຸເປົ້າໝາຍ:</u> ຈຳນວນ 42 ໂຄງການ.

• <u>ເປົ້າໝາຍທີ 03:</u> ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ:

1. <u>ບາງຄາດໝາຍແລະຕົວຊີ້ບອກ:</u>

- ອີງຕາມຜົນການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ຄົວເຮືອນຄັ້ງທີ 6 (LECS6): ອັດຕາຄວາມທຸກຍາກໃຫ້ຫຼຸດລົງຍັງເຫຼືອ 13,9% ຂອງປະຊາກອນທັງໝົດ, ອັດຕາຄົວເຮືອນທຸກຍາກໃຫ້ຫຼຸດລົງຍັງເຫຼືອ 9,5% ຂອງຄົວເຮືອນທັງໝົດ;

- ອີງຕາມດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາສະບັບ ເລກທີ 348/ນຍ: ສູ້ຊົນເຮັດໃຫ້ຄອບຄົວພົ້ນທຸກເພີ່ມຂຶ້ນຈາກ 971.900 ຄອບຄົວ ມາເປັນ 204,360 ຄອບຄົວ (ເພີ່ມຂຶ້ນ 964.149 ຄອບຄົວມາເປັນ 1.168.509 ຄອບຄົວ); ສູ້ຊົນເຮັດໃຫ້ບ້ານພົ້ນທຸກໃຫ້ໄດ້ 3.104 ບ້ານ ເພີ່ມຂຶ້ນຈາກ 4.792 ບ້ານ ມາເປັນ 7.896 ບ້ານ; ສ້າງຄອບຄົວພັດທະນາໃຫ້ໄດ້ 245.754 ຄອບຄົວ; ສ້າງບ້ານພັດທະນາໃຫ້ໄດ້ 4.420 ບ້ານ;

- ຊຸກຍູ້ສ້າງເງື່ອນໄຂໃຫ້ການນຳທີ່ເປັນເພດຍິງທຸກຂັ້ນ ໂດຍສະເລ່ຍໃຫ້ໄດ້ 20% ຂຶ້ນໄປ; ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ບັນຈຸຊັບຊ້ອນເຂົ້າສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພດຍິງກວມ 30% ຂຶ້ນໄປ; ດັດຊະນີຄວາມບໍ່ສະເໝີພາບຍິງ - ຊາຍ ໃຫ້ຫລຸດລົງເປັນ 0,430; ດັດສະນີການພັດທະນາຄວາມສະເໝີພາບຍິງ - ຊາຍ ໃຫ້ເພີ່ມຂຶ້ນເປັນ 0,984;

- ຝຶກອົບຮົມວິຊາຊີບ ແລະ ສ້າງວຽກເຮັດງານທຳໃຫ້ແກ່ຊາວໜຸ່ມໃນສາຂາວິຊາຊີບຕ່າງໆ ໃຫ້ໄດ້ 20% ຂອງຈຳນວນຊາວໜຸ່ມທີ່ວ່າງງານ; ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນ

ພາລະກິດປະຕິວັດຊາດປະຊາທິປະໄຕ ໃນ 5 ເປົ້າໝາຍບູລິມະສິດໃຫ້ໄດ້ 15.000 ທ່ານ ແລະ ເປົ້າໝາຍທົ່ວໄປໃຫ້ໄດ້ 1.000 ທ່ານ, ຄາດຄະເນງົບປະມານທັງໝົດ 418,82 ຕື້ກີບ; ກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມທຸລະກິດໃຫ້ໄດ້ 50.000 ເຮັກຕາ, ສະເລ່ຍ 10.000 ເຮັກຕາ/ປີ.

2. <u>ແຜນວຽກຈຸດສຸມ:</u> (1) ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງທຸກຍາກໄດ້ຮັບການພັດທະນາ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ; (2) ພື້ນຖານໂຄງລ່າງການບໍລິການດ້ານສາທາລະນຸປະໂພກໄດ້ຮັບການປັບປຸງ ແລະ ສະໜອງໃຫ້ປະຊາຊົນຢ່າງທົ່ວເຖິງ; (3) ສົ່ງເສີມແລະສ້າງໂອກາດໃຫ້ແມ່ຍິງ ແລະ ເດັກໄດ້ຮັບການພັດທະນາ, ມີຄວາມສະເໝີພາບຍິງ - ຊາຍ ເພື່ອປະກອບສ່ວນຢ່າງເຕັມທີ່ ໃນການພັດທະນາເສດຖະກິດ - ສັງຄົມ; (4) ສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມ ໃຫ້ມີຄຸນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ; (5) ປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບພາກອິດສະຫລະ ເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິຜົນດີຂຶ້ນ; (6) ການກວດກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນ ມີຄວາມປອດໄພຈາກລະເບີດບໍ່ທັນແຕກ ເພີ່ມຂຶ້ນເທື່ອລະກ້າວ.

3. <u>ໂຄງການສະໜັບສະໜູນໃຫ້ບັນລຸເປົ້າໝາຍ:</u> ຈຳນວນ 36 ໂຄງການ.

• <u>ເປົ້າໝາຍທີ 04:</u> ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ:

1. <u>ບາງຄາດໝາຍ ແລະ ຕົວຊີ້ບອກ:</u>

- ສູ້ຊົນໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນຫຼາຍກວ່າ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2025; ສູ້ຊົນແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານຂັ້ນແຂວງໃຫ້ສຳເລັດທຸກແຂວງ ແລະ ນະຄອນຫຼວງວຽງຈັນ ຮອດປີ 2030; ຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ໃຫ້ໄດ້ປະມານ 30 ລ້ານໂຕນ; ສູ້ຊົນຂຶ້ນທະບຽນອອກໃບຕາດິນໃຫ້ໄດ້ 1,6 ລ້ານຕອນໃນຂອບເຂດທົ່ວປະເທດ;

- ສ້າງຕັ້ງສະຖານີອຸຕຸນິຍົມໃໝ່ 45 ແຫ່ງ ແລະ ສະຖານີອຸທົກກະສາດໃໝ່ 25 ແຫ່ງ; ສູ້ຊົນສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນສູນກາງ ແລະ ສ້າງກອງທຶນຄຸ້ມຄອງໄພພິບັດໃຫ້ໄດ້ 17 ແຂວງ, ນະຄອນຫຼວງວຽງຈັນ ແລະ 56 ເມືອງ.

2. <u>ແຜນວຽກຈຸດສຸມ:</u> (1) ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ; (2) ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ; (3) ການກຽມຄວາມພ້ອມຮັບມືຈາກໄພພິບັດຕ່າງໆ.

3. <u>ໂຄງການສະໜັບສະໜູນໃຫ້ບັນລຸເປົ້າໝາຍ:</u> ຈຳນວນ 19 ໂຄງການ.

• <u>ເປົ້າໝາຍທີ 05:</u> ການສ້າງພື້ນຖານໂຄງລ່າງ ທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ:

1. <u>ບາງຄາດໝາຍ ແລະ ຕົວຊີ້ບອກ:</u>

- ປະລິມານຜູ້ໂດຍສານ ແລະ ສິນຄ້າໃນຕາໜ່າງການເຊື່ອມໂຍງ - ເຊື່ອມຈອດ ກັບບັນດາປະເທດໃນພາກພື້ນ ໃນທຸກຮູບແບບການ

ຂົນສົ່ງເພີ່ມຂຶ້ນ 7% ຕໍ່ປີ; ຂະຫຍາຍສະຖານນີຮັບ - ສົ່ງສັນຍານມືຖື ລະບົບ 3G ຄອບຄຸມໃຫ້ໄດ້ 100%, 4G ໃຫ້ໄດ້ 90% ແລະ 5G ໃຫ້ໄດ້ 50% ຂອງພື້ນທີ່ທົ່ວປະເທດ; ສູ້ຊົນຫັນເປັນທັນສະໄໝໃນການຊຳລະສະສາງ ແລະ ການເກັບລາຍຮັບເຂົ້າງົບປະມານດ້ວຍລະບົບຕ່າງໆ ເປັນຕົ້ນຜ່ານໂທລະສັບມືຖື (Mobile Money) ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດໃນສັງຄົມ, ວິຖີຊີວິດປົກກະຕິແບບໃໝ່ ແລະ ການພັດທະນາເສດຖະກິດດິຈິຕອນ ໃນໄລຍະໃໝ່, ສ້າງຕະຫຼາດເອເລັກໂທນິກ, ການບໍລິການສ້າງພັກສິນຄ້າ ແລະ ທ່າບົກ; ສູ້ຊົນເຮັດໃຫ້ອັດຕາການເຊື່ອມໂຍງການຄ້າທັງໝົດຕໍ່ລວມຍອດຜະລິດຕະພັນພາຍໃນ (ອັດຕາການເປີດປະເທດ) ໃຫ້ໄດ້ຫຼາຍກວ່າ 70% ໃນປີ 2025.

2. <u>ແຜນວຽກຈຸດສຸມ:</u> (1) ພື້ນຖານໂຄງລ່າງໄດ້ຮັບການພັດທະນາທີ່ສາມາດເຊື່ອມຈອດ - ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ; (2) ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ; (3) ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ; (4) ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

3. <u>ໂຄງການສະໜັບສະໜູນ ໃຫ້ບັນລຸເປົ້າໝາຍ:</u> ຈຳນວນ 134 ໂຄງການ.

• <u>ເປົ້າໝາຍທີ 06:</u> ການຄຸ້ມຄອງ - ບໍລິຫານລັດ ມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງ ຕາມທິດການປົກຄອງດ້ວຍກົດໝາຍ ທີ່ສັກສິດ ແລະ ເຂັ້ມງວດ:

1. <u>ບາງຄາດໝາຍແລະຕົວຊີ້ບອກ:</u>

- ສູ້ຊົນການບໍລິຫານລັດເປັນທັນສະໄໝ ແລະ ປັບປຸງການບໍລິຫານລັດເປັນ E-goverment; ສ້າງເທດສະບານ/ນະຄອນ ຊຶ່ງເປັນອົງການປົກຄອງທ້ອງຖິ່ນໃນຕົວເມືອງ ໃຫ້ໄດ້ຢ່າງໜ້ອຍ 8 ແຫ່ງ; ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດໃຫ້ໄດ້ຢ່າງໜ້ອຍ 2/3 ຂອງຈຳນວນແຂວງທັງໝົດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານໃຫ້ໄດ້ 1/3 ຂອງຈຳນວນເມືອງທັງໝົດ, ບ້ານເປັນຫົວໜ່ວຍພັດທະນາໃຫ້ໄດ້ 2/3 ຂອງຈຳນວນບ້ານທັງໝົດ; ສູ້ຊົນສ້າງສູນບໍລິການຜ່ານປະຕູດຽວ ຢູ່ຂັ້ນເມືອງໃຫ້ໄດ້ຢ່າງໜ້ອຍ 50% ຂອງຈຳນວນເມືອງທັງໝົດ ແລະ ຂັ້ນແຂວງຈຳນວນໜຶ່ງຕາມເງື່ອນໄຂ;

- ຊຸກຍູ້ ແລະ ປະກອບເຄື່ອງມື, ອຸປະກອນທີ່ທັນສະໄໝ ທີ່ຈຳເປັນໃຫ້ອົງການສານປະຊາຊົນສູງສຸດ, ອົງການສອບສວນ - ສືບສວນ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ, ອົງການໄອຍະການປະຊາຊົນສູງສຸດສູ້ຊົນອອກຄຳຖະແຫຼງໃຫ້ໄດ້ 90%, ສູ້ຊົນຕັດສິນ - ພິພາກສາຄະດີໃຫ້ບັນລຸໄດ້ 85% ດ້ວຍຄຸນນະພາບທີ່ດີ ແລະ ຈັດຕັ້ງປະຕິບັດຄຳຕັດສິນທີ່ຍັງຄ້າງ ແລະ ຄຳຕັດສິນເຂົ້າໃໝ່ໃຫ້ໄດ້ 80%, ໃນນັ້ນ 20% ແມ່ນໃຫ້ຈັດຕັ້ງປະຕິບັດສຳເລັດ ແລະ ປິດສຳນວນຄະດີ.

2. <u>ແຜນວຽກຈຸດສຸມ:</u> (1) ຍົກສູງປະສິດທິພາບການປົກຄອງ - ການຄຸ້ມຄອງບໍລິຫານລັດ ໃຫ້ມີຄວາມກະທັດຮັດ,ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານສາມສ້າງໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ; (2) ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນ ໃຫ້ມີຄວາມເປັນເອກະພາບ ແລະວ່ອງໄວຂຶ້ນ; (3) ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

3. <u>ໂຄງການສະໜັບສະໜູນໃຫ້ບັນລຸເປົ້າໝາຍ:</u> ຈຳນວນ 40 ໂຄງການ.

**2. ເປົ້າໝາຍນຳພາປະເທດຊາດ ອອກຈາກສະຖານະພາບດ້ອຍພັດທະນາ, ບັນດາເປົ້າໝາຍການພັດທະນາແບບຍືນຍົງ ແລະ ການເຕີບໂຕສີຂຽວ:**

- ສືບຕໍ່ຈັດຕັ້ງປະຕິບັດຄາດໝາຍ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ເພື່ອຮັກສາໄດ້ 2 ຄາດໝາຍທີ່ບັນລຸເງື່ອນໄຂແລ້ວ (ໃນປີ 2018) ແລະ ຈະມີການປະເມີນຕື່ມອີກຄັ້ງທີ 2 (ໃນປີ2021) ຊຶ່ງຕາມປົກກະຕິແລ້ວ ຈະມີໄລຍະເວລາຂ້າມຜ່ານ 3 ປີ (2021-2024) ແຕ່ເນື່ອງຈາກວ່າ ພວກເຮົາໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກການແຜ່ລະບາດຂອງພະຍາດ covid - 19 ຈຶ່ງຈຳເປັນຕ້ອງໄດ້ຂໍເລື່ອນເວລາອອກໄປຕື່ມ, ເພື່ອຮັບປະກັນໃຫ້ການອອກຈາກສະຖານະພາບຄວາມດ້ອຍພັດທະນາຢ່າງມີຄຸນນະພາບ.

- ສືບຕໍ່ເຊື່ອມສານ ແລະ ຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ຍຸດທະສາດການເຕີບໂຕສີຂຽວຢ່າງແຂງແຮງ ແລະ ເຂົ້າສູ່ລວງເລິກກວ່າເກົ່າ ໂດຍມີການກຳນົດຄາດໝາຍ, ຕົວຊີ້ບອກ ແລະ ວຽກງານຈຸດສຸມໃຫ້ເປັນອັນລະອຽດເຂົ້າໃນແຜນການ 5 ປີ ຄັ້ງທີ IX ລວມທັງແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ; ປັບປຸງຂອດຕິດຕາມປະເມີນຜົນ ການຈັດຕັ້ງປະຕິບັດແຜນໃຫ້ລະອຽດ ແລະ ຈະແຈ້ງກວ່າເກົ່າ; ປັບປຸງຂອດປະສານງານສາຍຕັ້ງ - ສາຍຂວາງ, ລະບົບການສະຫລຸບລາຍງານ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ, ທັນກຳນົດເວລາ ແລະ ສອດຄ່ອງກັບສະພາບຕົວຈິງ ໃນແຕ່ລະໄລຍະ.

## III. ພາກທີ 3: ມາດຕະການ ແລະ ກົນໄກຈັດຕັ້ງປະຕິບັດ:

### 1. ມາດຕະການ:

1). <u>ເພີ່ມທະວີການຄຸ້ມຄອງເສດຖະກິດມະຫາພາກ</u>ໃຫ້ມີຄວາມເຂັ້ມແຂງໝັ້ນທ່ຽງ ແລະ ຍືນຍົງ, ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີຄຸນນະພາບ ເພື່ອສ້າງສະພາບຄ່ອງໃນລະບົບການເງິນ - ງົບປະມານຂອງລັດ ດ້ວຍການສຳຫຼວດຖານລາຍຮັບໃຫ້ຖືກຕ້ອງຊັດເຈນ, ປັບປຸງລະບົບການຄຸ້ມຄອງລາຍຮັບ - ລາຍຈ່າຍ ງົບປະມານດ້ວຍເຄື່ອງມືທັນສະໄໝ ແລະ ປະຕິບັດວິໄນການເງິນໃຫ້ເຂັ້ມງວດເຄັ່ງຄັດ, ກຳນົດນະໂຍບາຍເງິນຕາ ແລະ ຄຸ້ມຄອງອັດຕາແລກປ່ຽນຢ່າງມີໄຫວພິບຕາມກົນໄກຕະຫຼາດ ແລະ ມີການດັດສົມຂອງລັດ, ປັບປຸງໂຄງປະກອບຂອງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ເໝາະສົມກັບສະພາບເສດຖະກິດໃນໄລຍະໃໝ່, ຄຸ້ມຄອງອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL) ຂອງລະບົບທະນາຄານໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ; ສ້າງຄວາມເຂັ້ມແຂງ ໃຫ້ແກ່ລັດວິສາຫະກິດ

ດ້ວຍການຫັນໄປສູ່ຮູບແບບລັດຮ່ວມມືກັບເອກະຊົນ; ຊຸກຍູ້ລະດົມການລົງທຶນຈາກພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ເພີ່ມຂຶ້ນດ້ວຍການປັບປຸງສິ່ງອໍານວຍຄວາມສະດວກ, ປັບປຸງກົນໄກ ແລະ ລະບຽບການໃຫ້ມີຄວາມວ່ອງໄວ, ກະທັດຮັດ, ທັນສະໄໝ ແລະ ມີຄວາມໂປ່ງໃສ;

2). ຍົກສູງຄຸນນະພາບ ຂອງການພັດທະນາຊັບພະຍາກອນມະນຸດ ແລະ ນໍາໃຊ້ແຮງງານໜຸ່ມ ດ້ວຍການຄົ້ນຄວ້າ ແລະ ວິໄຈກ່ຽວກັບຂະແໜງທີ່ເປັນບູລິມະສິດ ເພື່ອສຸມການລົງທຶນໃສ່ຂະແໜງນັ້ນ ເປັນຕົ້ນຫຼັກສູດການຮຽນ - ການສອນ ທີ່ສົ່ງເສີມໃຫ້ນັກຮຽນ ມີທັກສະໃນການແກ້ໄຂບັນຫາ, ຮັບປະກັນການຫັນປ່ຽນຈິນຕະນາການຂອງຊັບພະຍາກອນມະນຸດ ໂດຍສະເພາະສະຕິຕໍ່ການຕັ້ງປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ, ຄວາມດຸໝັ່ນ, ອົດທົນ, ລະບຽບວິໄນສູງ, ການຄົ້ນຄວ້າຮໍ່າຮຽນ ແລະ ອື່ນໆ ເພື່ອປະກອບສ່ວນຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ - ສັງຄົມ ຢ່າງເຕັມສ່ວນ;

3). ສົ່ງເສີມຊີວິດການເປັນຢູ່ທີ່ດີ, ສັງຄົມທີ່ໜ້າຢູ່ ແລະ ສັງຄົມທີ່ຍຸຕິທໍາ ດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ, ເພີ່ມທະວີການປະຕິບັດຍຸດທະສາດ ການປົກປ້ອງສັງຄົມແຫ່ງຊາດ ແລະ ຍຸດທະສາດແຫ່ງຊາດ ເພື່ອສົ່ງເສີມວຽກເຮັດງານທໍາໃນຊົນນະບົດ, ເພີ່ມທະວີການປະສານງານລະຫວ່າງຂະແໜງກະສິກໍາ - ປ່າໄມ້, ອຸດສາຫະກໍາ ແລະ ການຄ້າແລະພາກສ່ວນກ່ຽວຂ້ອງຂອງຂັ້ນສູນກາງ ແລະ ທ້ອງຖິ່ນ ດໍາເນີນການຊຸກຍູ້ຕິດຕາມການປູກ, ການລ້ຽງ ແລະ ສ້າງກຸ່ມການຜະລິດ ແລະ ສະຫະກອນ ຕາມທ່າແຮງໄດ້ປຽບຂອງຕົນ;

4). <u>ເພີ່ມທະວີການປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ</u> ດ້ວຍການຍົກສູງບົດບາດວຽກງານເຕືອນໄພລ່ວງໜ້າ, ການຍົກລະດັບຄວາມສາມາດ ໃຫ້ແກ່ການກູ້ໄພ, ບັນເທົາທຸກ ແລະ ຟື້ນຟູຄວາມເສຍຫາຍທີ່ເກີດຂຶ້ນ ຈາກໄພພິບັດ, ຄວາມສາມາດໃນການປັບຕົວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງດ້ານສິ່ງແວດລ້ອມຢ່າງເຂັ້ມງວດ;

5). <u>ເພີ່ມທະວີການຮ່ວມມື, ເຊື່ອມຈອດ ແລະ ເຊື່ອມໂຍງກັບພາກພື້ນແລະສາກົນ</u> ດ້ວຍການຮ່ວມມືດ້ານການຄ້າການສົ່ງອອກ ເພື່ອສົ່ງເສີມການຜະລິດ ແລະ ການສົ່ງອອກ; ສ້າງພື້ນຖານໂຄງລ່າງ, ບັນດາເຄື່ອງມື, ນິຕິກໍາທີ່ຈໍາເປັນໃຫ້ສອດຄ່ອງ ແລະ ໄດ້ມາດຕະຖານສາກົນລວມທັງການນໍາໃຊ້ເຄື່ອງມືໄອຊີທີທີ່ທັນສະໄໝ ເຂົ້າມາຊ່ວຍອໍານວຍຄວາມສະດວກໃນການເຂົ້າເຖິງ ແລະ ຄຸ້ມຄອງໂຄງລ່າງພື້ນຖານຫຼາຍຂຶ້ນ;

6). <u>ປັບປຸງການຄຸ້ມຄອງບໍລິຫານພາກລັດ ໃຫ້ມີຄວາມໂປ່ງໃສ</u> ເຮັດໃຫ້ທົ່ວສັງຄົມມີສ່ວນຮ່ວມ ໃນການປະກອບຄໍາຄິດຄໍາເຫັນຕໍ່ການພັດທະນາດ້ວຍຫຼາຍຮູບແບບ ເພື່ອສັງລວມຄວາມຄິດຄວາມເຫັນກ່ຽວກັບການປັບປຸງບໍລິການພາກລັດຢ່າງປະດິດສ້າງ.

**2. ກົນໄກ ແລະ ການແບ່ງຄວາມຮັບຜິດຊອບຈໍານວນໜຶ່ງ ໃຫ້ແກ່ຂະແໜງການແລະທ້ອງຖິ່ນ:**

1) ກະຊວງການເງິນ ຮີບຮ້ອນຫັນເປັນທັນສະໄໝ ໃນການຄຸ້ມຄອງການເກັບລາຍຮັບ ແລະ ລາຍຈ່າຍໃຫ້ໄວກວ່າເກົ່າ; ຊຸກຍູ້ບັນດາຫົວໜ່ວຍທຸລະກິດ ໃຫ້ເຂົ້າຮ່ວມໃນລະບົບການເສຍອາກອນ ມູນຄ່າເພີ່ມເພື່ອເພີ່ມລາຍຮັບງົບປະມານ; ຄົ້ນຄວ້າການຫັນລັດວິສາຫະກິດ ທີ່ບໍ່ມີ

ປະສິດທິຜົນໄປຮ່ວມການອື່ນ; ອອກນະໂຍບາຍວາລະປະຢັດແຫ່ງຊາດຂຶ້ນ ເພື່ອໃຫ້ມີການໃຊ້ຈ່າຍໃນສິ່ງທີ່ຈໍາເປັນ;

2) ທະນາຄານແຫ່ງ ສປປ ລາວ ສືບຕໍ່ຄຸ້ມຄອງ ແລະ ຮັກສາສະຖຽນລະພາບເງິນຕາໃຫ້ມີຄວາມໝັ້ນທ່ຽງ, ເໜັງຕີງໃນຂອບທີ່ກໍານົດໄວ້ດ້ວຍການຫຼຸດຊ່ອງວ່າງຄວາມແຕກຕ່າງ ລະຫວ່າງອັດຕາແລກປ່ຽນໃນຕະຫຼາດ ແລະ ນອກຕະຫຼາດ; ກໍານົດອັດຕາດອກເບ້ຍທີ່ເໝາະສົມ ເພື່ອສົ່ງເສີມການຜະລິດ ແລະ ການບໍລິການ ພ້ອມທັງປ່ອຍສິນເຊື່ອ ໃຫ້ໄປຕາມເປົ້າໝາຍບູລິມະສິດຂອງລັດຖະບານ ແລະ ຄາດໝາຍທີ່ກໍານົດໄວ້; ເພີ່ມທະວີການຄຸ້ມຄອງທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກໃຫ້ເຄື່ອນໄຫວຕາມກົດໝາຍ-ລະບຽບການ ແລະ ການບໍລິຫານໜີ້ສິນທີ່ມີປະສິດທິພາບ; ຈັດປະເພດລູກຄ້າ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງໂຄວິດ - 19 ເພື່ອຮັບປະກັນການໃຫ້ນະໂຍບາຍຖືກກຸ່ມເປົ້າໝາຍ ເພື່ອຈໍາກັດພາລະແບກຫາບ ໃຫ້ແກ່ລະບົບທະນາຄານໃນຕໍ່ໜ້າ;

3) ກະຊວງແຜນການ ແລະ ການລົງທຶນ ສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປັບປຸງບັນດາລະບຽບການ, ກົນໄກໃນການດໍາເນີນທຸລະກິດ ແລະ ວຽກງານບໍລິການອອກໃບອະນຸຍາດການລົງທຶນ ແລະ ໃບອະນຸຍາດດໍາເນີນທຸລະກິດຕາມຄໍາສັ່ງ ເລກທີ 02/ນຍ ແລະ 03/ນຍ ຢ່າງມີປະສິດທິຜົນ ເພື່ອດຶງດູດການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ;

4) ກະຊວງກະສິກໍາ - ປ່າໄມ້ ແລະ ກະຊວງ ອຸດສາຫະກໍາ ແລະ ການຄ້າ ສືບຕໍ່ຊຸກຍູ້ຂະແໜງການຜະລິດ ເພື່ອຊົມໃຊ້ພາຍໃນ ແລະ ການຜະລິດ ເພື່ອສົ່ງອອກ ໂດຍສະເພາະການຜະລິດບັນດາສິນຄ້າທີ່ມີຕະ

ຫຼາດຮອງຮັບ ເປັນຕົ້ນ ໂຄຕ້າທີ່ໄດ້ຮັບຈາກ ສປ ຈີນ ເຊັ່ນ: ເຂົ້າ, ສັດລ້ຽງ ແລະ ພືດຈຳນວນໜຶ່ງ ເພື່ອວາງແຜນການຜະລິດ ຫຼື ໂຄງການຜະລິດໃໝ່ ເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດ;

5) ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສືບຕໍ່ໂຄສະນາສົ່ງເສີມການທ່ອງທ່ຽວ ລາວທ່ຽວລາວ ເພື່ອກະຕຸ້ນເສດຖະກິດ, ແນະນຳບັນດາຫົວໜ່ວຍທຸລະກິດທ່ອງທ່ຽວ ປັບປຸງສະຖານທີ່ທ່ອງທ່ຽວ ແລະ ການບໍລິການສະຖານທີ່ພັກ-ຮ້ານອາຫານໃຫ້ມີຄຸນນະພາບ; ສົມທົບກັບພາກສ່ວນກ່ຽວຂ້ອງແຕ່ລະຂັ້ນ ໂຄສະນາເຜີຍແຜ່ກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດພະຍາດໂຄວິດ - 19; ຊຸກຍູ້ ແລະ ຍົກລະດັບຂະບວນການ "ລາວທ່ຽວລາວ - ລາວຊົມໃຊ້ຜະລິດຕະພັນລາວ";

6) ກະຊວງສາທາລະນະສຸກ ເພີ່ມທະວີການການຄຸ້ມຄອງ, ການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການການປ້ອງກັນ, ສະກັດກັ້ນ ແລະ ການແກ້ໄຂການແຜ່ລະບາດຂອງພະ ຍາດໂຄວິດ - 19 ຢ່າງປົກກະຕິ ແລະ ທັນການ; ສືບຕໍ່ເອົາໃຈໃສ່ການຂະ ຫຍາຍຕາໜ່າງສາທາລະນະສຸກ ໄປຫາເຂດຫ່າງໄກສອກຫຼີກ;

7) ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພີ່ມທະວີການເຝົ້າລະວັງ ການປ່ຽນແປງດິນຟ້າອາກາດ ເພື່ອໃຫ້ປະຊາຊົນຮັບຮູ້ຂໍ້ມູນຂ່າວສານ ແລະ ກະກຽມຮັບມືກັບຜົນກະທົບຈາກໄພພິບັດຕ່າງໆ ຢ່າງທັນການ, ພ້ອມດຽວກັນນັ້ນ ກໍເອົາໃຈໃສ່ສືບຕໍ່ຜັນຂະຫຍາຍນິຕິກຳຕ່າງໆ ໃນການປົກປັກຮັກສາສິ່ງແວດລ້ອມຢ່າງເຂັ້ມງວດ;

8) ຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້າວາງແຜນການຜະລິດ ແລະ ການບໍລິການ ຕາມທ່າແຮງບົ່ມຊ້ອນທີ່ໄດ້ປຽບຂອງຕົນ ເພື່ອນຳ

ໃຊ້ທາງດ່ວນ, ເສັ້ນທາງລົດໄຟລາວ - ຈີນ ຕາມແລວທາງເສດຖະກິດຕ່າງໆ ຢ່າງມີປະສິດທິຜົນ; ປະສານງານກັນຢ່າງກົມກຽວ ການຈັດຕັ້ງຜັນຂະ ຫຍາຍທິດການພັດທະນາເຂດແຄ້ວນຢ່າງມີຈຸດສຸມ, ບໍ່ຊໍ້າຊ້ອນກັນ, ແຕ່ສະໜັບສະໜູນເຊິ່ງກັນ ແລະ ກັນ.

**ສະຫຼຸບລວມແລ້ວ, ເພື່ອເຮັດໃຫ້ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ IX (2021-2025) ສາມາດປະຕິບັດຢ່າງມີຜົນສໍາ ເລັດສູງ**, ບັນດາຂະແໜງການ ແລະ ທ້ອງຖິ່ນຕ້ອງເປັນເຈົ້າການ ແລະ ຍົກສູງຄວາມຮັບຜິດຊອບໃຫ້ຫຼາຍຂຶ້ນ ໂດຍຫັນບັນດາຄາດໝາຍ, ແຜນວຽກຈຸດສຸມໃຫ້ເປັນອັນລະອຽດຕາມພາລະບົດບາດຂອງຕົນ ໃຫ້ສອດ ຄ່ອງລະຫວ່າງແຜນງານ, ແຜນເງິນ ແລະ ແຜນຄົນ. ພ້ອມກັນນັ້ນ, ຕ້ອງເພີ່ມທະວີການປະສານງານລະຫວ່າງພາກລັດດ້ວຍກັນ (ສາຍຕັ້ງ ແລະ ສາຍຂວາງ), ພາກລັດກັບເອກະຊົນກ່ຽວກັບການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນແຜນພັດທະນາເສດຖະກິດ - ສັງຄົມ ຢ່າງເປັນລະບົບປົກກະຕິ ຕາມສິດໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ. ສືບຕໍ່ຈັດຕັ້ງຜັນຂະຫຍາຍ 4 ບຸກທະລຸ ຢ່າງຕັ້ງໜ້າຄື: ບຸກທະລຸທາງດ້ານຈິນຕະນາການ; ບຸກທະລຸທາງດ້ານການພັດທະນາຊັບພະຍາກອນມະນຸດ; ບຸກທະລຸລະບົບກົນໄກ, ລະບອບ, ລະບຽບການບໍລິຫານ ແລະ ບຸກທະລຸດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການປະຕິບັດມາດຕະການໃນການລະດົມແຫຼ່ງທຶນ ເຂົ້າໃສ່ການພັດທະນາ ຊຶ່ງຍັງເປັນປັດໄຈສໍາຄັນຕັດສິນ, ສືບຕໍ່ນະໂຍບາຍເປີດກວ້າງ ຕາມແນວທາງການປ່ຽນແປງໃໝ່ຂອງພັກ ຢ່າງສະເໝີຕົ້ນ ສະເໝີປາຍ ແລະ ແຂງແຮງ.